ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 615 /ລບ

ນະຄອນຫຼວງວຽງຈັນ, ວັນທີ 09.12.2020.

# ດຳລັດ
# ວ່າດ້ວຍ ກົດຈະລາຈອນທາງບົກ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 021/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 669 /ຍທຂ, ລົງວັນທີ 12 ຕຸລາ 2020.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມກວດກາ ການຈະລາຈອນທາງບົກ ເພື່ອຄວບຄຸມການສັນຈອນ ແລະ ການນຳໃຊ້ພາຫະນະຕາມທາງຫຼວງ ໃຫ້ມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ, ເຮັດໃຫ້ຜູ້ນຳໃຊ້ລົດ, ນຳໃຊ້ທາງ ເດີນຖືກ ຕ້ອງຕາມ ກົດຈະລາຈອນທາງບົກ, ເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ຄຸ້ມຄອງການຈະລາຈອນ ແນໃສ່ ຫຼຸດຜ່ອນອຸບປະຕິເຫດ, ຄວາມແອອັດໃນການສັນຈອນ, ປົກປ້ອງຊີວິດ, ຊັບສິນຂອງບຸກຄົນ, ສາທາລະນະ, ສາມາດເຊື່ອມໂຍງ, ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

### ມາດຕາ 2 ກົດຈະລາຈອນທາງບົກ

ກົດຈະລາຈອນທາງບົກ ແມ່ນ ລະບຽບການສຳລັບການຄຸ້ມຄອງ, ຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ໃນການຈະລາຈອນຕາມທາງຫຼວງ ຊຶ່ງຜູ້ນຳໃຊ້ຍານພາຫະນະ ແລະ ທາງຫຼວງ ຕ້ອງປະຕິບັດ ຢ່າງເຂັ້ມງວດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທາງຫຼວງ** ໝາຍເຖິງ ພື້ນທີ່ທັງໝົດສຳລັບການຈະລາຈອນສາທາລະນະ ເຊັ່ນ ທາງຫຼວງແຫ່ງຊາດ, ທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ, ທາງຊົນນະບົດ, ທາງສະເພາະ ລວມທັງ ທາງດ່ວນ, ຂອບທາງ, ບ່າທາງ, ທາງຄົນຍ່າງ ແລະ ທາງລົດຖີບ;

2. **ຜູ້ຂັບຂີ່** ໝາຍເຖິງ ບຸກຄົນທີ່ມີໜ້າທີ່ບັນຊາ ຍານພາຫະນະ ແລະ ພາຫະນະໄປຕາມທາງ ລວມທັງ ຜູ້ທີ່ຮຽນຂັບລົດ;

3. **ຜູ້ຊ້ອນທ້າຍ** ໝາຍເຖິງ ຜູ້ໂດຍສານ ຫຼື ຜູ້ຕິດຕາມຍານພາຫະນະ ສອງລໍ້, ສາມລໍ້, ລົດຈັກ, ລົດຖີບ ທີ່ບໍ່ແມ່ນຄົນຂັບ;

4. **ທາງຍ່າງ** ໝາຍເຖິງ ອົງປະກອບຂອງທາງຫຼວງ ຊຶ່ງນຳໃຊ້ສຳລັບໃຫ້ຄົນຍ່າງສະເພາະ ອາດຈະເຊື່ອມຈອດກັບບ່າທາງ, ຂອບທາງ ຫຼື ເດີ່ນຫຍ້າ, ສວນດອກໄມ້ຂັ້ນລະຫວ່າງ ທາງຍ່າງ ກັບ ທາງລົດແລ່ນ;

5. **ຄົນຍ່າງ** ໝາຍເຖິງ ບຸກຄົນທີ່ຈະລາຈອນຕາມທາງທີ່ບໍ່ໄດ້ນຳໃຊ້ຍານພາຫະນະ ຫຼື ບໍ່ໄດ້ປະຕິບັດໜ້າທີ່ຢູ່ຕາມທາງ ລວມທັງ ບຸກຄົນທີ່ນຳໃຊ້ລໍ້ເລື່ອນຂອງຄົນພິການທີ່ບໍ່ມີເຄື່ອງຈັກ, ຜູ້ຈູງລົດຖີບ, ລົດຈັກ, ລົດໂມເປດ, ຄົນແກ່ລໍ້, ຄົນຍູ້ລໍ້;

6. **ທາງໃຫຍ່** ໝາຍເຖິງ ທາງຫຼວງ, ຖະໜົນ ທີ່ມີປ້າຍທາງໃຫຍ່ ຄົບທາງນ້ອຍ, ປ້າຍບອກທາງໃຫຍ່, ປ້າຍທາງດ່ວນ ຫຼື ທາງທີ່ມີໜ້າທາງປູດ້ວຍຢາງອາສຟານ, ເບຕົງ ຫຼື ຫີນ ເມື່ອສົມທຽບກັບທາງດິນແດງ, ທາງທີ່ມີຊ່ອງຈະລາຈອນຫຼາຍກວ່າ ເມື່ອສົມທຽບກັບທາງທີ່ຕັດຜ່ານ;

7. **ທາງນ້ອຍ** ໝາຍເຖິງ ທາງທີ່ມີປ້າຍສຸດເຂດທາງໃຫຍ່, ປ້າຍປ່ອຍສິດ, ປ້າຍຢຸດ ຫຼື ທາງດິນແດງ, ທາງປູຫີນ ເມື່ອສົມທຽບກັບທາງຄົບ ຫຼື ທາງຕັດຜ່ານປູດ້ວຍຢາງອາສຟານ ຫຼື ເບຕົງ, ທາງທີ່ມີຊ່ອງຈະລາຈອນໜ້ອຍກວ່າ ເມື່ອສົມທຽບກັບທາງຄົບ, ຕັດກັນ, ທາງທີ່ສິ້ນສຸດ ຫຼື ໄປຄົບກັບເສັ້ນທາງອື່ນໃນລັກສະນະທາງສາມແຍກຮູບໂຕເຕ (T);

8. **ທາງດ່ວນ** (Expressway) ໝາຍເຖິງ ທາງຫຼວງທີ່ເຊື່ອມຈອດລະຫວ່າງຈຸດໜຶ່ງ ຫາອີກຈຸດໜຶ່ງ, ສາມາດແລ່ນດ້ວຍຄວາມໄວສູງຕະຫຼອດຊ່ວງທາງດັ່ງກ່າວ ໂດຍບໍ່ມີທາງຕັດ ແລະ ທາງຄົບ ຊຶ່ງຜູ້ນຳໃຊ້ຕ້ອງປະຕິບັດຕາມລະບຽບການຈະລາຈອນສະເພາະ;

9. **ລົດລາກແກ່** ໝາຍເຖິງ ຍານພາຫະນະທີ່ໃຊ້ລາກແກ່ພາຫະນະດ້ວຍກັນ ທີ່ເປ່ເພ, ເສຍຫາຍ, ລະເມີດກົດຈະລາຈອນທາງບົກ, ເກີດອຸບປະຕິເຫດ ທີ່ກີດຂວາງການຈະລາຈອນ;

10. **ການຈະລາຈອນ** ໝາຍເຖິງ ຂະບວນການນຳໃຊ້ທາງຫຼວງ ເປັນຕົ້ນ ການຂັບຂີ່ຍານພາຫະນະຕາມທາງຫຼວງ, ການສັນຈອນໄປ-ມາ ຂອງຄົນ ຫຼື ການເຄື່ອນຍ້າຍສິ່ງຂອງໂດຍການນຳໃຊ້ ຫຼື ບໍ່ໄດ້ນຳໃຊ້ຍານພາຫະນະຂົນສົ່ງ ໃນຂອບເຂດຂອງທາງ;

11. **ອຸບປະຕິເຫດ** ໝາຍເຖິງ ເຫດການທີ່ເກີດຂຶ້ນກັບຍານພາຫະນະທີ່ຈະລາຈອນຕາມທາງ ດ້ວຍການກະທົບກັບຍານພາຫະນະ, ຄົນ, ສັດ, ວັດຖຸສິ່ງຂອງ, ສິ່ງປຸກສ້າງ ຕາມແຄມທາງ ຊຶ່ງພາໃຫ້ມີຄົນບາດເຈັບ, ເສຍຊີວິດ ຫຼື ຊັບສິນໄດ້ຮັບຄວາມເສຍຫາຍ;

12. **ບ່ອນຂ້າມທາງລົດໄຟ** ໝາຍເຖິງ ບ່ອນທາງລົດແລ່ນຕັດກັບທາງລົດໄຟ ໃນລະດັບດຽວກັນ;

13. **ລົດປະຈຳທາງ** ໝາຍເຖິງ ຍານພາຫະນະຂົນສົ່ງສາທາລະນະທີ່ຮັບໃຊ້ຂົນສົ່ງຜູ້ໂດຍສານ ຊຶ່ງມີການກຳນົດສາຍທາງ, ຕາຕະລາງເວລາ ແລະ ຢຸດ, ຈອດ ເອົາຜູ້ໂດຍສານຂຶ້ນ, ລົງລົດ ຕາມບ່ອນທີ່ໄດ້ກຳນົດໄວ້;

14. **ລົດໂມເປດ** (Moped) ໝາຍເຖິງ ຍານພາຫະນະປະເພດ ສອງລໍ້ ສາມລໍ້ ທີ່ຕິດເຄື່ອງຈັກຂະໜາດ

ບໍ່ເກີນ 50 ຊີຊີ ຫຼື ຕິດມໍເຕີໄຟຟ້າຄວາມແຮງແຕ່ 0,25-4 ກິໂລວັດ ແລະ ບາງກໍລະນີອາດມີແປ້ນຍັນ ຫຼື ເປດາລ ຄືລົດຖີບ ຊຶ່ງແລ່ນດ້ວຍຄວາມໄວສູງສຸດບໍ່ເກີນ ຫ້າສິບ ກິໂລແມັດຕໍ່ຊົ່ວໂມງ;

15. **ເຂດຊຸມຊົນ** ໝາຍເຖິງ ເຂດທີ່ຢູ່ອາໄສຂອງປະຊາຊົນ ທີ່ຢູ່ບ່ອນທາງເຂົ້າ ແລະ ທີ່ມີປ້າຍບອກຊື່ບ້ານ;

16. **ໄລຍະການແນມເຫັນບໍ່ພຽງພໍ** ໝາຍເຖິງ ຄວາມສາມາດໃນການແນມເຫັນທາງບໍ່ເກີນ ສາມຮ້ອຍແມັດ ໃນເວລາມີໝອກລົງໜາ, ຝົນຕົກແຮງ, ຝຸ່ນ ແລະ ອື່ນໆ ລວມທັງເວລາອາກາດມືດມົວ;

17. **ການແນມເຫັນຈຳກັດ** ໝາຍເຖິງ ຄວາມສາມາດ ໃນການແນມເຫັນທາງຂ້າງໜ້າ ຂອງຜູ້ຂັບຂີ່ ຖືກຈຳກັດດ້ວຍສິ່ງບົດບັງຕ່າງໆ ເຊັ່ນ ຕົ້ນໄມ້, ແລວທາງ, ອາຄານ, ສິ່ງປຸກສ້າງ, ຍານພາຫະນະຂະໜາດໃຫຍ່ ທີ່ຈອດຢູ່ກັບທີ່ ຫຼື ແລ່ນໄປໃນທິດທາງດຽວກັນ;

18. **ການຊິງຂຶ້ນໜ້າ** ໝາຍເຖິງ ການຂັບຜ່ານຂຶ້ນໜ້າ ຍານພາຫະນະຂົນສົ່ງອື່ນ ໂດຍການຂັບອອກຈາກຊ່ອງຈະລາຈອນຂອງຕົນ ໄປໃຊ້ຊ່ອງຈະລາຈອນອື່ນ ເມື່ອໄປຫວີດແລ້ວຈຶ່ງກັບຄືນສູ່ຊ່ອງຈະລາຈອນເດີມ;

19. **ສິນຄ້າອັນຕະລາຍ** ໝາຍເຖິງ ວັດຖຸລະເບີດ, ສານເຄມີ, ສານກຳມັນຕະພາບລັງສີ, ສິ່ງເສດເຫຼືອຈາກໂຮງງານອຸດສາຫະກຳ ຊຶ່ງໃນລະຫວ່າງການຂົນສົ່ງອາດຈະເກີດປະຕິກິລິຍາ ແລະ ເປັນອັນຕະລາຍ ທີ່ເປັນໄພຂົ່ມຂູ່ຕໍ່ຊີວິດ ແລະ ສຸຂະພາບຂອງຄົນ, ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມ;

20. **ຂະບວນລົດຂົນສົ່ງ** ໝາຍເຖິງ ຍານພາຫະນະຂົນສົ່ງຕັ້ງແຕ່ສາມຄັນຂຶ້ນໄປ ທີ່ແລ່ນໄປໃນທິດທາງ ແລະ ໃນຊ່ອງຈະລາຈອນດຽວກັນ, ໃຊ້ຄວາມໄວເທົ່າກັນ ໂດຍຄັນທາງໜ້າຕ້ອງໄຕ້ໄຟຕາຕໍ່າ ຫຼື ມີລົດເປີດໂຄມໄຟໝູນ ສີເຫຼືອງ ນຳທາງ;

21. **ຂະບວນລົດພິເສດ** ໝາຍເຖິງ ຍານພາຫະນະຕັ້ງແຕ່ສາມຄັນຂຶ້ນໄປ ທີ່ແລ່ນໄປໃນທິດທາງ ແລະ ໃນຊ່ອງຈະລາຈອນດຽວກັນ, ໃຊ້ຄວາມໄວເທົ່າກັນ ໂດຍມີລົດເຈົ້າໜ້າທີ່ເປີດທາງ ທີ່ເປີດໄຟສັນຍານໂຄມໄຟໝູນສີຟ້າ, ສີແດງ ນຳໜ້າຂະບວນ;

22. **ການຢຸດລົດ** ໝາຍເຖິງ ການຢຸດການເຄື່ອນໄຫວຊົ່ວຄາວ ໂດຍບໍ່ມີການຄ່ຽນຖ່າຍສິນຄ້າ ຫຼື ຜູ້ໂດຍສານ ເພື່ອປ່ອຍທາງໃຫ້ລົດຄັນອື່ນ ທີ່ມີສິດໄປກ່ອນ ເຊັ່ນ ອອກຈາກທາງນ້ອຍເຂົ້າສູ່ທາງໃຫຍ່, ບ່ອນມີປ້າຍບອກສິດ ຫຼື ເພື່ອລໍການສັນຍານຂອງໄຟອຳນາດ ຫຼື ຜູ້ຄວບຄຸມການຈະລາຈອນ;

23. **ການຈອດລົດຊົ່ວຄາວ** ໝາຍເຖິງ ການຢຸດລົດຢູ່ກັບທີ່ ໃນເວລາບໍ່ເກີນ ຫ້າ ນາທີ ເພື່ອໃຫ້ຜູ້ໂດຍສານ ຂຶ້ນ, ລົງ ຫຼື ຄ່ຽນຖ່າຍສິນຄ້າ;

24. **ການຈອດລົດ** ໝາຍເຖິງ ການຢຸດລົດຢູ່ກັບທີ່ໃນໄລຍະເວລາເກີນ ຫ້າ ນາທີ ໂດຍມອດຈັກ, ອອກຈາກລົດ ແລະ ໃສ່ກະແຈລົດ;

25. **ຜູ້ນຳໃຊ້ທາງ** ໝາຍເຖິງ ບຸກຄົນທີ່ມີສ່ວນຮ່ວມໃນການຈະລາຈອນຕາມທາງ ເຊັ່ນ ຄົນຍ່າງ, ຜູ້ຂັບຂີ່, ຜູ້ໂດຍສານທີ່ນຳໃຊ້ຍານພາຫະນະຂົນສົ່ງທຸກຊະນິດ, ຜູ້ຄວບຄຸມສັດ;

26. **ອະພິສິດ** ໝາຍເຖິງ ສິດຂອງບຸກຄົນທີ່ຕິດພັນກັບບາງໜ້າທີ່, ບາງຕຳແໜ່ງ (Prerogatives);

27. **ການປ່ອຍທາງ** ໝາຍເຖິງ ການປ່ອຍທາງໃຫ້ຜູ້ຂັບຂີ່ທີ່ມີເອກະສິດໄປກ່ອນ;

28. **ເວລາຄ່ຳມືດ** ໝາຍເຖິງ ເວລາແຕ່ຫຼັງຕາເວັນຕົກໄປຈົນເຖິງເວລາຕາເວັນຂຶ້ນ;

29. **ທາງລົດແລ່ນ** ໝາຍເຖິງ ທາງທີ່ຮັບໃຊ້ສະເພາະການຈະລາຈອນຂອງຍານພາຫະນະ ໂດຍມີເສັ້ນແບ່ງ ຫຼື ບໍ່ມີເສັ້ນແບ່ງ, ມີແນວກັ້ນ ຫຼື ມີແນວແບ່ງໄວ້;

30. **ຊ່ອງຈະລາຈອນ** ໝາຍເຖິງ ຊ່ອງທາງການແລ່ນລົດຕາມລວງຍາວຂອງທາງທີ່ມີ ຫຼື ບໍ່ມີເສັ້ນສີຂາວຂີດໄວ້;

31. **ສິ່ງແບ່ງທາງ** ໝາຍເຖິງ ອົງປະກອບຂອງທາງທີ່ເປັນສິ່ງກໍ່ສ້າງ ຫຼື ເຄື່ອງໝາຍຈະລາຈອນ ຊຶ່ງແບ່ງການຈະລາຈອນເປັນສອງທິດທາງ ເປັນຕົ້ນ ຮົ້ວ, ຮາວ, ດອນກາງທາງ, ເດີ່ນຫຍ້າ, ຮ່ອງນ້ຳ, ຂີດໝາຍທາງທີ່ບໍ່ອະນຸຍາດໃຫ້ໃຊ້ສຳລັບການຈະລາຈອນ ຫຼື ຈອດລົດ;

32. **ສິ່ງກີດຂວາງ** ໝາຍເຖິງ ສິ່ງທີ່ເກີດຈາກການກະທຳຂອງຄົນ, ສັດ ແລະ ທຳມະຊາດ ທີ່ເປັນອຸປະສັກໃຫ້ແກ່ການຈະລາຈອນ;

33. **ໄຟສັນຍານໝູນ** ໝາຍເຖິງ ໄຟສັນຍານແຈ້ງເຕືອນອັນຕະລາຍ, ເຫດການສຸກເສີນ, ອະພິສິດ ແລະ ພິເສດ.

### ມາດຕາ 4 ຫຼັກການກ່ຽວກັບວຽກງານກົດຈະລາຈອນທາງບົກ

ກົດຈະລາຈອນທາງບົກປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນດຳເນີນງານຄວາມປອດໄພທາງຫຼວງ;

2. ຮັບປະກັນໃຫ້ການຈະລາຈອນມີຄວາມເປັນລະບຽບຮຽບຮ້ອຍ, ສະດວກ, ປອດໄພ, ໄລ່ງລ່ຽນ, ຕໍ່ເນື່ອງ, ມີປະສິດທິພາບ ແລະ ປະສິດທິຜົນ;

3. ຄຸ້ມຄອງ ແລະ ນຳໃຊ້ ຍານພາຫະນະ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ປະຕິບັດກົດຈະລາຈອນທາງບົກ ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ;

4. ສອດຄ່ອງກັບກົດຈະລາຈອນທາງບົກ ຂອງ ພາກພື້ນ ແລະ ສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

### ມາດຕາ 5 ທິດທາງການສັນຈອນທາງບົກ

ທິດທາງການສັນຈອນຕາມທາງຫຼວງ ຢູ່ ສປປ ລາວ ໃຫ້ໃຊ້ກ້ຳຂວາ.

### ມາດຕາ 6 ການປຸກຈິດສຳນຶກກ່ຽວກັບກົດຈະລາຈອນທາງບົກ

ກົດຈະລາຈອນທາງບົກ ຕ້ອງໄດ້ຮັບການບັນຈຸ ເຂົ້າໃນຫຼັກສູດການຮຽນ-ການສອນ ແຕ່ລະຊັ້ນຮຽນເປັນຕົ້ນ ລະດັບ ອະນຸບານສຶກສາ, ສາມັນສຶກສາ, ອາຊີວະສຶກສາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນການໂຄສະນາເຜີຍແຜ່ໃຫ້ທົ່ວສັງຄົມ ຮັບຮູ້ ແລະ ເຂົ້າໃຈ ພ້ອມທັງຈັດຕັ້ງປະຕິບັດກົດຈະລາຈອນທາງບົກ ຢ່າງເຂັ້ມງວດໂດຍຜ່ານສື່ມວນຊົນຫຼາຍຮູບແບບ ເປັນຕົ້ນ ສື່ ສິ່ງພິມ, ເອເລັກໂຕຣນິກ, ຈົດໝາຍເຫດທາງລັດຖະການ, ວາລະສານ, ລາຍການ ວິທະຍຸ, ໂທລະພາບ ແລະ ໂທລະໂຄ່ງ, ລະບົບອິນເຕີເນັດ, ວີຊີດີ, ດີວີດີ, ການໂຄສະນາທາງປາກເປົ່າ.

### ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຍານພາຫະນະ ແລະ ທາງຫຼວງ ຢູ່ ສປປ ລາວ.

## ພາກທີ II
## ລະບຽບການທົ່ວໄປກ່ຽວກັບການຈະລາຈອນທາງບົກ
## ໝວດທີ 1
## ລະບຽບການສໍາລັບຄົນຍ່າງ

**ມາດຕາ 8 ການຍ່າງຕາມທາງ**

ການຍ່າງຕາມທາງ ໃຫ້ປະຕິບັດ ດັ່ງນີ້:

1. ຍ່າງໄປຕາມທາງຄົນຍ່າງທີ່ໄດ້ກໍານົດໃຫ້, ຖ້າບໍ່ມີທາງຄົນຍ່າງ ໃຫ້ຍ່າງລຽບຕາມແຄມທາງເບື້ອງຊ້າຍ ເພື່ອໃຫ້ສາມາດແນມເຫັນລົດທີ່ແລ່ນມາໃນທາງກົງກັນຂ້າມ;

2. ຍ່າງເບື້ອງຂວາ ໃນເວລາ ຈູງ ລົດຖີບ, ລົດຈັກ, ສັດ ແລະ ປ້ອງຝູງສັດ;

3. ຍ່າງຕາມຫຼັງກັນເປັນແຖວດຽວ ໂດຍໃຫ້ແນບເຂົ້າແຄມທາງ ໃນເວລາມີຫຼາຍຄົນຍ່າງນໍາກັນ, ທາງແຄບ ແລະ ບໍ່ມີແສງສະຫວ່າງພຽງພໍ.

ໃນກໍລະນີຍ່າງຕາມທາງ ທີ່ສະພາບການແນມເຫັນຈໍາກັດ, ໃນຍາມຄໍ່າມືດ ຫຼື ໃນເວລາສະພາບອາກາດບໍ່ດີ ລວມທັງການຍ່າງຕາມທາງຫຼວງນອກຕົວເມືອງ ໂດຍໃຫ້ນຸ່ງເຄື່ອງທີ່ມີສີແຈ້ງ, ມີວັດຖຸສະທ້ອນແສງ ຫຼື ຖືໂຄມໄຟ ເພື່ອໃຫ້ຜູ້ຂັບຂີ່ສາມາດແນມເຫັນໄດ້ແຕ່ໄກ.

**ມາດຕາ 9 ການຍ່າງເປັນຂະບວນຕາມທາງ**

ການຍ່າງເປັນຂະບວນ ແມ່ນ ການຍ່າງສວນສະໜາມ, ຂະບວນທາງການ, ຂະບວນແຫ່ພິທີທາງສາສະໜາ ຫຼື ຂະບວນຍ່າງອື່ນ ທີ່ໄດ້ຮັບອະນຸຍາດ ຊຶ່ງຕ້ອງມີເຈົ້າໜ້າທີ່ຕໍາຫຼວດຈະລາຈອນ, ພະນັກງານທີ່ໄດ້ຮັບມອບໝາຍ ເພື່ອອໍານວຍຄວາມສະດວກ ແລະ ຄວບຄຸມ ຂະບວນການຍ່າງດັ່ງກ່າວ ໃຫ້ເປັນລະບຽບຮຽບຮ້ອຍ ແລະ ປອດໄພ.

**ມາດຕາ 10 ການຍ່າງຂ້າມທາງ**

ການຍ່າງຂ້າມທາງ ຕ້ອງປະຕິບັດ ດັ່ງນີ້:

1. ຂ້າມທາງຢູ່ບ່ອນທາງມ້າລາຍ, ຂົວຂ້າມທາງ, ທາງລອດ ຫຼື ບ່ອນຂ້າມທາງ ທີ່ມີເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ຫຼື ພະນັກງານທີ່ໄດ້ຮັບມອບໝາຍ ຄວບຄຸມ;

2. ຂ້າມຢູ່ບ່ອນທີ່ບໍ່ມີ ທາງຄົບ, ທາງແຍກ, ທາງມ້າລາຍ, ຂົວຂ້າມ, ທາງລອດ ໃຫ້ຂ້າມທາງຢູ່ບ່ອນທີ່ເປັນທາງຊື່, ສາມາດແນມເຫັນການສັນຈອນ ຈາກທຸກທິດທາງໄດ້ ແລະ ມີຄວາມປອດໄພ.

ການຍ່າງຂ້າມທາງ ຕ້ອງບໍ່ຊັກຊ້າ ຫຼື ຢຸດ. ໃນກໍລະນີຍ່າງຂ້າມບໍ່ຮອດຈຸດໝາຍ ໃຫ້ຢຸດຊົ່ວຄາວຢູ່ເສັ້ນແບ່ງທິດທາງການສັນຈອນ ເມື່ອເຫັນວ່າມີຄວາມປອດໄພແລ້ວ ຈຶ່ງສືບຕໍ່ຂ້າມທາງ. ສໍາລັບການຍ່າງຂ້າມທາງຂອງນັກຮຽນຢູ່ບໍລິເວນສະຖານການສຶກສາ ໃຫ້ປະຕິບັດຕາມການຄວບຄຸມ ຂອງຜູ້ອໍານວຍຄວາມສະດວກ ທີ່ໄດ້ຮັບມອບໝາຍ.

ໃນກໍລະນີ ເຫັນລົດທີ່ເປີດໄຟສັນຍານໝູນສີຟ້າ, ສີແດງ ແລະ ມີສຽງຫວໍເຂົ້າມາໃກ້ ໃຫ້ຜູ້ຂ້າມທາງຢຸດ, ສ່ວນຜູ້ທີ່ຂ້າມໄປຮອດກາງທາງແລ້ວ ກໍໃຫ້ຮີບຮ້ອນຂ້າມທາງ.

ທຸກຄົນ ມີໜ້າທີ່ຊ່ວຍເຫຼືອ ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ ແລະ ຜູ້ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ໃນເວລາຍ່າງຂ້າມທາງ.

**ມາດຕາ 11 ການຍ່າງຂ້າມທາງບ່ອນມີການຄວບຄຸມ**

ການຍ່າງຂ້າມທາງ ບ່ອນທີ່ມີການຄວບຄຸມການຈະລາຈອນ ຕ້ອງປະຕິບັດຕາມການໃຫ້ສັນຍານຂອງເຈົ້າໜ້າທີ່ຕຳຫຼວດຈະລາຈອນ ຫຼື ໄຟສັນຍານ.

**ມາດຕາ 12 ການຍ່າງຂ້າມທາງບ່ອນບໍ່ມີການຄວບຄຸມ**

ການຍ່າງຂ້າມທາງ ບ່ອນທີ່ບໍ່ມີການຄວບຄຸມການຈະລາຈອນ ໃຫ້ສັງເກດເບິ່ງການສັນຈອນ ພ້ອມທັງປະເມີນຄວາມໄວ ຂອງຍານພາຫະນະຈາກທຸກທິດທາງ ເພື່ອໃຫ້ແນ່ໃຈວ່າມີຄວາມປອດໄພ ແລ້ວຈຶ່ງຂ້າມທາງ.

ການຍ່າງຂ້າມທາງຢູ່ນອກເຂດທາງມ້າລາຍ ຕ້ອງບໍ່ຂັດຂວາງການຈະລາຈອນ ຂອງຍານພາຫະນະ ແລະ ບໍ່ຂ້າມບ່ອນທີ່ມີລົດຈອດຢູ່ ຫຼື ມີສິ່ງປິດບັງການແນມເຫັນຂອງ ຜູ້ຂັບຂີ່ ແລະ ຕ້ອງໃຫ້ແນ່ໃຈວ່າ ບໍ່ມີລົດແລ່ນມາໃນໄລຍະໃກ້.

## ໝວດທີ 2
## ລະບຽບການສຳລັບຜູ້ຂັບຂີ່ຍານພາຫະນະ

**ມາດຕາ 13 ເອກະສານປະຈຳຕົວຂອງຜູ້ຂັບຂີ່ຍານພາຫະນະ**

ຜູ້ຂັບຂີ່ຍານພາຫະນະ ຕ້ອງມີເອກະສານ ດັ່ງນີ້:

1. ໃບຂັບຂີ່ຍານພາຫະນະ ຕາມປະເພດລົດທີ່ຕົນຂັບ;
2. ໃບທະບຽນຍານພາຫະນະ, ຖ້າເປັນລົດລາກຕ້ອງມີໃບທະບຽນຫາງລາກ ຫຼື ເຄິ່ງຫາງລາກ;
3. ໃບຢັ້ງຢືນການກວດກາເຕັກນິກ;
4. ໃບປະກັນໄພຍານພາຫະນະ;
5. ໃບເສຍຄ່າທຳນຽມທາງ;
6. ໃບອະນຸຍາດດຳເນີນທຸລະກິດ ສຳລັບ ລົດຂົນສົ່ງໂດຍສານ ຫຼື ລົດຂົນສົ່ງສິນຄ້າ.

**ມາດຕາ 14 ຄວາມຮັບຜິດຊອບຂອງຜູ້ຂັບຂີ່ຍານພາຫະນະ**

ຜູ້ຂັບຂີ່ຍານພາຫະນະ ຕ້ອງມີຄວາມຮັບຜິດຊອບ ດັ່ງນີ້:

1. ກວດກາສະພາບເຕັກນິກລົດຂອງຕົນ ກ່ອນອອກເດີນທາງ ເພື່ອຮັບປະກັນຄວາມປອດໄພຕະຫຼອດໄລຍະການເດີນທາງ;

2. ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ແລະ ເຈົ້າໜ້າທີ່ອື່ນ ທີ່ໄດ້ຮັບມອບໝາຍໃນການກວດກາເອກະສານ ແລະ ຍານພາຫະນະ;

3. ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ໃນການກວດກາ ຄວາມໄວ, ປະລິມານທາດເຫຼົ້າ ແລະ ສານເສບຕິດ;

4. ໃຫ້ບຸລິມະສິດຄົນຍ່າງຂ້າມທາງ ແລະ ຄົນຂີ່ລົດຖີບ ໄປກ່ອນ;

5. ຢຸດປ່ອຍທາງໃຫ້ແກ່ຂະບວນລົດແຫ່ຜູ້ນຳ ພາຍໃນ ແລະ ຕ່າງປະເທດ, ລົດໂຮງໝໍ, ລົດກູ້ໄພສຸກເສີນ, ຕ້ານໄພນ້ຳຖ້ວມ, ມອດໄຟ, ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ທີ່ກຳລັງປະຕິບັດໜ້າທີ່ອັນຮີບດ່ວນ.

**ມາດຕາ 15 ການເກີດອຸບປະຕິເຫດທີ່ມີຄົນບາດເຈັບ ຫຼື ເສຍຊີວິດ**

ໃນກໍລະນີ ມີຄົນບາດເຈັບ ຫຼື ເສຍຊີວິດ ຜູ້ຂັບຂີ່ຕ້ອງປະຕິບັດ ດັ່ງນີ້:

1. ຢຸດລົດທັນທີ ແລະ ເປີດໄຟສັນຍານສຸກເສີນ;

2. ວາງ ຫຼື ຕັ້ງເຄື່ອງໝາຍເຕືອນອັນຕະລາຍ, ບໍ່ໃຫ້ເຄື່ອນຍ້າຍຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນຕ່າງໆທີ່ກ່ຽວຂ້ອງກັບອຸບປະຕິເຫດນັ້ນ;

3. ຊ່ວຍເຫຼືອປະຖົມພະຍາບານຄົນບາດເຈັບ, ຮຽກລົດກູ້ໄພ, ລົດໂຮງໝໍ, ແຈ້ງເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ແລະ ພະນັກງານປະກັນໄພ. ໃນກໍລະນີ ມີຜູ້ເສຍຊີວິດ ໃຫ້ແຈ້ງເຈົ້າໜ້າທີ່ຕໍາຫຼວດຈະລາຈອນທັນທີ;

4. ບັນທຶກ ຊື່ ແລະ ນາມສະກຸນ, ທີ່ຢູ່ຂອງຜູ້ເຫັນເຫດການ ແລ້ວລໍຖ້າຈົນກວ່າເຈົ້າໜ້າທີ່ຕໍາຫຼວດຈະລາຈອນມາຮອດ.

ພາຍຫຼັງ ເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ສໍາເລັດ ການກວດກາ, ຊັນນະສູດສະຖານທີ່ເກີດເຫດ, ເກັບກໍາ ແລະ ບັນທຶກຂໍ້ມູນ ແລ້ວໃຫ້ເຄື່ອນຍ້າຍ ຍານພາຫະນະ, ຊິ້ນສ່ວນຕ່າງໆ ທີ່ກ່ຽວຂ້ອງກັບອຸບປະຕິເຫດ ຫຼື ຊາກສົບ.

**ມາດຕາ 16 ການເກີດອຸບປະຕິເຫດທີ່ບໍ່ມີຄົນບາດເຈັບ**

ໃນກໍລະນີ ເກີດອຸບປະຕິເຫດ ທີ່ບໍ່ມີຄົນໄດ້ຮັບບາດເຈັບ ແຕ່ມີຜົນເສຍຫາຍທາງດ້ານວັດຖຸ ຜູ້ຂັບຂີ່ຕ້ອງປະຕິບັດ ດັ່ງນີ້:

1. ຢຸດລົດທັນທີ ແລະ ເປີດໄຟສັນຍານສຸກເສີນ;

2. ວາງ ຫຼື ຕັ້ງເຄື່ອງໝາຍເຕືອນອັນຕະລາຍ, ບໍ່ໃຫ້ເຄື່ອນຍ້າຍຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນຕ່າງໆທີ່ກ່ຽວຂ້ອງກັບອຸບປະຕິເຫດນັ້ນ;

3. ເຮັດບົດບັນທຶກກ່ຽວກັບອຸບປະຕິເຫດຮ່ວມກັນ ໂດຍຊ້ອງໜ້າເຈົ້າໜ້າທີ່ຕໍາຫຼວດຈະລາຈອນ, ອົງການປົກຄອງບ້ານ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ກີດຂວາງການຈະລາຈອນ ໃຫ້ຂີດໝາຍຕໍາແໜ່ງ ຂອງຍານພາຫະນະຢູ່ບໍລິເວນທີ່ເກີດເຫດພ້ອມທັງຖ່າຍຮູບ ຫຼື ຖ່າຍວີດີໂອໄວ້ ກ່ອນການເຄື່ອນຍ້າຍ ຍານພາຫະນະ, ວັດຖຸ ຫຼື ຊິ້ນສ່ວນບົນພື້ນຖານການຕົກລົງກັນຂອງຄູ່ກໍລະນີ;

ໃນກໍລະນີ ບໍ່ສາມາດຕົກລົງກັນໄດ້ ໃຫ້ຈົດ ຊື່ ແລະ ທີ່ຢູ່ ຜູ້ເຫັນເຫດການໄວ້ ແລ້ວແຈ້ງຕໍ່ເຈົ້າໜ້າທີ່ຕໍາຫຼວດຈະລາຈອນ ເພື່ອກວດກາ, ຊັນນະສູດສະຖານທີ່ເກີດເຫດ, ເກັບກໍາ ແລະ ບັນທຶກຂໍ້ມູນ.

## ໝວດທີ 3
## ການຄວບຄຸມສັດ

**ມາດຕາ 17 ຜູ້ຄວບຄຸມສັດລ້ຽງໄປຕາມທາງ**

ຜູ້ຄວບຄຸມສັດລ້ຽງໄປຕາມທາງ ຕ້ອງປະຕິບັດ ດັ່ງນີ້:

1. ຄວບຄຸມໄປຕາມແຄມທາງເບື້ອງຂວາ;

2. ຂະບວນ ລໍ້ ຫຼື ກວຽນ ທີ່ໃຊ້ສັດລາກແກ່ ບໍ່ໃຫ້ເກີນກຸ່ມລະ ຫ້າ ລໍາ ແລະ ການຂີ່ສັດເປັນຂະບວນບໍ່ໃຫ້ເກີນ ສິບ ໂຕ ແລະ ໃຫ້ຮັກສາໄລຍະຫ່າງ ລະຫວ່າງ ກຸ່ມ ແຕ່ ແປດສິບ ຫາ ໜຶ່ງຮ້ອຍ ແມັດ ເພື່ອໃຫ້ລົດຊິງຂຶ້ນໜ້າໄດ້ສະດວກ;

3. ຜູ້ຄວບຄຸມ ລໍ້ ຫຼື ກວຽນ ທີ່ລາກແກ່ດ້ວຍສັດ ຫຼື ຂີ່ສັດ ໄປຕາມທາງ ລວມທັງຜູ້ທີ່ຄວບຄຸມຝູງສັດຕ້ອງມີອາຍຸແຕ່ ສິບຫ້າ ປີ ຂຶ້ນໄປ;

4. ຜູ້ຄວບຄຸມ, ເຈົ້າຂອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ສັດໄດ້ກໍ່ຂຶ້ນ ໃນກໍລະນີເກີດອຸບປະຕິເຫດ ຍ້ອນສັດລ້ຽງຂອງຕົນ;

5. ຜູ້ຂີ່ສັດ, ຜູ້ຄວບຄຸມ ລໍ້ ຫຼື ກວຽນ ທີ່ລາກແກ່ດ້ວຍສັດ ເວລາຈະອອກຈາກຮ່ອມໄປສູ່ທາງໃຫຍ່ ທີ່ມີສິ່ງປິດບັງການແນມເຫັນ ຕ້ອງຈັບເຊືອກບັງຊາ ເພື່ອໃຫ້ສາມາດຄວບຄຸມສັດໄດ້ເປັນຢ່າງດີ.

**ມາດຕາ 18 ການປ້ອງຝູງສັດລ້ຽງ**

ຜູ້ປ້ອງຝູງສັດ ຂ້າມທາງ ຫຼື ທາງລົດໄຟ ຕ້ອງຄວບຄຸມຝູງສັດ ບໍ່ໃຫ້ເປັນກຸ່ມໃຫຍ່ ຊຶ່ງອະນຸຍາດສະເພາະໃນຍາມກາງເວັນ ເທົ່ານັ້ນ ເພື່ອຮັບປະກັນຄວາມປອດໄພ.

ໃນກໍລະນີທີ່ມີການລ້ຽງສັດຢູ່ໃກ້ທາງ ຫຼື ມີການເຄື່ອນຍ້າຍສັດຕາມທາງ ຢ່າງເປັນປະຈຳ ຕ້ອງມີປ້າຍເຕືອນໃຫ້ລະວັງສັດ ເພື່ອໃຫ້ຜູ້ຂັບຂີ່ມີຄວາມລະມັດລະວັງ.. ໃນກໍລະນີເກີດອຸບປະຕິເຫດ ຢູ່ໃນເຂດທີ່ມີປ້າຍເຕືອນນັ້ນ ຜູ້ຂັບຂີ່ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ.

## ພາກທີ III
## ລະບຽບການສະເພາະກ່ຽວກັບການຈະລາຈອນທາງບົກ
## ໝວດທີ 1
## ການຈະລາຈອນຕາມທາງຫຼວງ

**ມາດຕາ 19 ການຈະລາຈອນຕາມທາງຫຼວງທີ່ມີ ແລະ ບໍ່ມີ ເສັ້ນແບ່ງຊ່ອງຈະລາຈອນ**

ທາງທີ່ມີຊ່ອງຈະລາຈອນ ໃຫ້ຜູ້ຂັບຂີ່ຖືເອົາເສັ້ນແບ່ງຊ່ອງຈະລາຈອນ, ເຄື່ອງໝາຍ ແລະ ປ້າຍສັນຍານຈະລາຈອນ ເປັນຫຼັກ.

ທາງທີ່ບໍ່ມີ ເສັ້ນແບ່ງຊ່ອງຈະລາຈອນ, ເຄື່ອງໝາຍ ແລະ ປ້າຍສັນຍານ ຈະລາຈອນ ໃຫ້ຜູ້ຂັບຂີ່ເບິ່ງຕາມສະພາບຄວາມເປັນຈິງ ແລະ ຄວາມເໝາະສົມຂອງທາງ ໂດຍອີງໃສ່ຄວາມກວ້າງຂອງໜ້າທາງ, ຂະໜາດ ແລະ ໄລຍະຫ່າງທີ່ປອດໄພ ຂອງລົດ. ໃນກໍລະນີທາງທີ່ບໍ່ມີເສັ້ນແບ່ງໃຈກາງທາງ ໃຫ້ຖືເອົາໃຈກາງທາງ ເປັນເສັ້ນແບ່ງຊ່ອງຈະລາຈອນ ສຳລັບການສວນທາງກັນ.

**ມາດຕາ 20 ການຈະລາຈອນຕາມທາງຫຼວງ ທີ່ມີຫຼາຍຊ່ອງຈະລາຈອນ ສຳລັບການສັນຈອນສອງທິດທາງ**

ທາງທີ່ມີ ສີ່ ຊ່ອງຈະລາຈອນ ຂຶ້ນໄປ ທີ່ມີການສັນຈອນສອງທິດທາງ ແລະ ມີການແບ່ງທິດທາງຈະລາຈອນດ້ວຍເສັ້ນແບ່ງໃຈກາງທາງເປັນເສັ້ນເຕັມຄູ່ນັ້ນ ແມ່ນບໍ່ອະນຸຍາດໃຫ້ລົດແລ່ນຂ້າມເສັ້ນດັ່ງກ່າວ ເພື່ອຊິງຂຶ້ນໜ້າຢ່າງເດັດຂາດ.

ໃນກໍລະນີ ທີ່ມີການລ້ຽວຊ້າຍ ຫຼື ລ້ຽວກັບນັ້ນ ອະນຸຍາດໃຫ້ລ້ຽວຢູ່ບ່ອນທາງຄົບ, ທາງແຍກ ຫຼື ບ່ອນທີ່ບໍ່ມີປ້າຍຫ້າມ ແລະ ເຄື່ອງໝາຍຫ້າມລ້ຽວ ເທົ່ານັ້ນ.

**ມາດຕາ 21 ການຈະລາຈອນຕາມທາງຫຼວງທີ່ມີເສັ້ນແບ່ງຊ່ອງຈະລາຈອນທີ່ຊັດເຈນ**

ຜູ້ຂັບຂີ່ ຕ້ອງຂັບຂີ່ໄປຕາມຊ່ອງຈະລາຈອນທີ່ຊັດເຈນ, ບໍ່ໃຫ້ຂັບຂີ່ກວມ ຫຼື ຢຽບເສັ້ນແບ່ງຊ່ອງຈະລາຈອນຢ່າງເດັດຂາດ ຍົກເວັ້ນໃນເວລາຈະປ່ຽນຊ່ອງຈະລາຈອນ ເທົ່ານັ້ນ.

**ມາດຕາ 22 ການຈະລາຈອນຕາມທາງຫຼວງນອກເຂດຕົວເມືອງ ແລະ ທາງດ່ວນ**

ການສັນຈອນຕາມທາງຫຼວງນອກເຂດຕົວເມືອງ ຫຼື ທາງດ່ວນ ທີ່ອະນຸຍາດໃຫ້ແລ່ນດ້ວຍຄວາມໄວສູງ ຜູ້ຂັບຂີ່ ຕ້ອງຂັບລົດແນບທາງກ້ຳຂວາຢູ່ສະເໝີ ແລະ ບໍ່ໃຫ້ແລ່ນຕາມຊ່ອງຈະລາຈອນຊ້າຍສຸດ ຖ້າຊ່ອງຈະລາຈອນ ກ້ຳຂວາຍັງຫວ່າງຢູ່.

ໃນເວລາທີ່ມີການສັນຈອນໜາແໜ້ນ ແລະ ຊ່ອງຈະລາຈອນເຕັມໝົດທຸກຊ່ອງ ອະນຸຍາດໃຫ້ປ່ຽນຊ່ອງຈະລາຈອນໄດ້ສະເພາະເວລາທີ່ຈະລ້ຽວຂວາ, ລ້ຽວຊ້າຍ, ລ້ຽວກັບ, ຢຸດລົດ ແລະ ຫຼີບຫຼີກສິ່ງກີດຂວາງ ເທົ່ານັ້ນ. ຜູ້ຂັບຂີ່ທີ່ຈະລ້ຽວ ຫຼື ປ່ຽນທິດທາງເດີນ ຕ້ອງໄດ້ເຂົ້າສູ່ຊ່ອງຈະລາຈອນ ກ່ອນຈະເຖິງຈຸດລ້ຽວ ຢ່າງໜ້ອຍ ໜຶ່ງຮ້ອຍຫ້າສິບ ແມັດ.

ການສັນຈອນຕາມທາງທີ່ມີ ສາມ ຊ່ອງຈະລາຈອນ ຂຶ້ນໄປ ທີ່ມີທິດທາງດຽວກັນ ໃຫ້ຈົ່ງຊ່ອງຈະລາຈອນຊ້າຍສຸດ ໄວ້ສຳລັບລົດທີ່ຈະຊິງຂຶ້ນໜ້າ ເທົ່ານັ້ນ ແລະ ເມື່ອຊິງຂຶ້ນຫວິດແລ້ວ ກໍຕ້ອງກັບຄືນສູ່ຊ່ອງຈະລາຈອນເດີມ ຍົກເວັ້ນ ໃນເວລາການສັນຈອນໜາແໜ້ນ ແລະ ຊ່ອງທາງຈະລາຈອນອື່ນ ກໍເຕັມໝົດ.

ສຳລັບລົດຂົນສົ່ງສິນຄ້າ ທີ່ມີນ້ຳໜັກລວມແຕ່ 3.500 ກິໂລກຣາມ ຂຶ້ນໄປ ແລະ ລົດຈັກ ໃຫ້ໃຊ້ຊ່ອງຈະລາຈອນ ຊ້າຍສຸດ ສະເພາະໃນກໍລະນີທີ່ກຽມ ລ້ຽວຊ້າຍ ຫຼື ລ້ຽວກັບ ໃນໄລຍະ ໜຶ່ງຮ້ອຍຫ້າສິບ ແມັດ ກ່ອນຮອດຈຸດລ້ຽວ ເທົ່ານັ້ນ.

**ມາດຕາ 23 ການຈະລາຈອນຕາມທາງທີ່ມີສິ່ງກີດຂວາງ ແລະ ບໍ່ມີເສັ້ນແບ່ງໃຈກາງທາງ**

ທາງທີ່ມີສອງຊ່ອງຈະລາຈອນ ທີ່ບໍ່ມີເສັ້ນແບ່ງໃຈກາງທາງ ຫຼື ດອນກາງທາງ ໃນກໍລະນີ ທີ່ມີເສົາ, ຫຼັກ ຫຼື ສິ່ງປະກອບຂອງສິ່ງປຸກສ້າງຕັ້ງຢູ່ກາງທາງ ຊຶ່ງບໍ່ມີປ້າຍຊີ້ບອກ ຜູ້ຂັບຂີ່ ຕ້ອງຂັບເວັ້ນໄປທາງກ້ຳຂວາ.

## ໝວດທີ 2
## ຄວາມໄວຂອງການຈະລາຈອນຕາມທາງຫຼວງ

**ມາດຕາ 24 ຄວາມໄວ**

ຜູ້ຂັບຂີ່ ຕ້ອງໃຊ້ຄວາມໄວບໍ່ເກີນປ້າຍຄວາມໄວ ທີ່ກຳນົດໄວ້ ໂດຍອີງຕາມຄວາມເໝາະສົມ ແລະ ສະພາບເຕັກນິກຂອງລົດ, ນ້ຳໜັກຂອງລົດທີ່ບັນທຸກ, ສະພາບໜ້າທາງ ແລະ ດິນຟ້າອາກາດ, ໄລຍະແນມເຫັນ ເພື່ອໃຫ້ສາມາດຄວບຄຸມລົດຂອງຕົນ ຢ່າງສະໝ່ຳສະເໝີ. ໃນກໍລະນີເກີດເຫດອັນຕະລາຍ ຜູ້ຂັບຂີ່ ຕ້ອງແກ້ໄຂດ້ວຍຕົນເອງ ໂດຍການຫຼຸດຜ່ອນຄວາມໄວລົງ ແລະ ຢຸດລົດ.

**ມາດຕາ 25 ຄວາມໄວຈຳກັດໃນເຂດຕົວເມືອງ ຫຼື ເຂດຊຸມຊົນ**

ລົດທຸກປະເພດ ທີ່ແລ່ນຕາມທາງ ຕ້ອງແລ່ນດ້ວຍຄວາມໄວບໍ່ເກີນ ສີ່ສິບ ກິໂລແມັດຕໍ່ຊົ່ວໂມງ ໃນເຂດຕົວເມືອງ ແລະ ຊາວ ກິໂລແມັດຕໍ່ຊົ່ວໂມງ ຕາມທາງຮ່ອມ.

ໃນເຂດຊຸມຊົນທີ່ມີການຈະລາຈອນແອອັດ, ໜາແໜ້ນ ເປັນຕົ້ນ ສຳນັກງານ, ອົງການ, ຕະຫຼາດ, ສະຖານີລົດຂົນສົ່ງຜູ້ໂດຍສານ, ສະຖານການສຶກສາ, ໂຮງໝໍ ໃຫ້ຫຼຸດຜ່ອນຄວາມໄວຂອງລົດ ໂດຍອີງຕາມປ້າຍຈຳກັດຄວາມໄວ ແລະ ຕາມສະພາບຄວາມເປັນຈິງ.

**ມາດຕາ 26 ຄວາມໄວຈຳກັດຕາມທາງຫຼວງນອກເຂດຕົວເມືອງ**

ການຈະລາຈອນນອກເຂດຕົວເມືອງ ອະນຸຍາດໃຫ້ນຳໃຊ້ຄວາມໄວ ດັ່ງນີ້:

1. ປະເພດລົດເບົາ ໃຫ້ແລ່ນດ້ວຍຄວາມໄວບໍ່ເກີນ ເກົ້າສິບ ກິໂລແມັດຕໍ່ຊົ່ວໂມງ;

2. ລົດຈັກ, ລົດຂົນສົ່ງ ສິນຄ້າ ແລະ ຜູ້ໂດຍສານ ໃຫ້ແລ່ນດ້ວຍຄວາມໄວບໍ່ເກີນ ເຈັດສິບ ກິໂລແມັດຕໍ່ຊົ່ວໂມງ.

ໃນກໍລະນີຂັບຂີ່ຜ່ານເຂດບ້ານ ໃຫ້ແລ່ນດ້ວຍຄວາມໄວບໍ່ເກີນ ຫ້າສິບ ກິໂລແມັດຕໍ່ຊົ່ວໂມງ.

**ມາດຕາ 27 ຄວາມໄວຈຳກັດຕາມທາງດ່ວນ**

ການຈະລາຈອນຕາມທາງດ່ວນ ອະນຸຍາດໃຫ້ນຳໃຊ້ຄວາມໄວ ດັ່ງນີ້:

1. ລົດຈັກ ທີ່ມີຂະໜາດເຄື່ອງຈັກ 350 ຊີຊີ ຂຶ້ນໄປ ໃຫ້ແລ່ນດ້ວຍຄວາມໄວ ແຕ່ ເຈັດສິບ ຫາ ເກົ້າສິບ ກິໂລແມັດຕໍ່ຊົ່ວໂມງ;

2. ປະເພດລົດເບົາ ໃຫ້ແລ່ນດ້ວຍຄວາມໄວແຕ່ ແປດສິບ ຫາ ໜຶ່ງຮ້ອຍສິບ ກິໂລແມັດຕໍ່ຊົ່ວໂມງ;

3. ລົດບັນທຸກນ້ຳໜັກລວມເກີນ 3.500 ກິໂລກຣາມ ແລະ ລົດຂົນສົ່ງຜູ້ໂດຍສານ ໃຫ້ແລ່ນດ້ວຍຄວາມໄວແຕ່ ເຈັດສິບ ຫາ ເກົ້າສິບ ກິໂລແມັດຕໍ່ຊົ່ວໂມງ.

**ມາດຕາ 28 ຄວາມໄວຂອງລົດທີ່ແກ່ກັນ ແລະ ລົດຂົນສົ່ງສິນຄ້າ ເກີນຂະໜາດ**

ລົດທີ່ແກ່ກັນ ແລະ ລົດຂົນສົ່ງສິນຄ້າ ເກີນຂະໜາດ ໃຫ້ແລ່ນດ້ວຍຄວາມໄວ ດັ່ງນີ້:

1. ລົດທີ່ແກ່ກັນ ໃຫ້ແລ່ນດ້ວຍຄວາມໄວບໍ່ເກີນ ສີ່ສິບ ກິໂລແມັດຕໍ່ຊົ່ວໂມງ;

2. ລົດຂົນສົ່ງວັດຖຸທີ່ມີ ຂະໜາດໃຫຍ່, ນ້ຳໜັກຫຼາຍ ແລະ ສິນຄ້າອັນຕະລາຍຕ່າງໆ ທີ່ເຮັດການຂົນສົ່ງລະຫວ່າງປະເທດ, ຜ່ານແດນ ຫຼື ຂ້າມແດນ ໃຫ້ແລ່ນດ້ວຍຄວາມໄວ ຕາມທີ່ໄດ້ກຳນົດໄວ້ໃນສັນຍາຂົນສົ່ງພິເສດສອງຝ່າຍ ຫຼື ຫຼາຍຝ່າຍ.

**ມາດຕາ 29 ການຈະລາຈອນຕາມທາງຫຼວງໃນເຂດທີ່ຢູ່ອາໄສ, ທາງພາຍໃນບ້ານ**

ການຈະລາຈອນຕາມທາງຫຼວງໃນເຂດທີ່ຢູ່ອາໄສ, ທາງພາຍໃນບ້ານ ຕ້ອງປະຕິບັດ ດັ່ງນີ້:

1. ຄົນຍ່າງມີບູລິມະສິດເໜືອລົດ, ສາມາດຍ່າງຕາມແຄມທາງຫຼວງ ດ້ວຍຄວາມລະມັດລະວັງ ແລະ ບໍ່ກີດຂວາງການຈະລາຈອນ ຂອງຍານພາຫະນະ;

2. ບໍ່ອະນຸຍາດ ໃຫ້ຮຽນຂັບລົດ, ຈອດລົດໂດຍບໍ່ມອດຈັກ, ຈອດລົດຂົນສົ່ງທີ່ມີນ້ຳໜັກລວມເກີນ 3.500 ກິໂລກຣາມ ໄວ້ຕາມແຄມທາງຫຼວງ ນອກຈາກເຂດທີ່ກຳນົດໃຫ້ສຳລັບການຄ່ຽນຖ່າຍສິນຄ້າ;

3. ຜູ້ຂັບຂີ່ ທີ່ອອກຈາກເຂດທີ່ຢູ່ອາໄສ ຫຼື ເຂດບ້ານ ທີ່ຈະເຂົ້າສູ່ເສັ້ນທາງການສັນຈອນ ຕ້ອງປ່ອຍທາງໃຫ້ຍານພາຫະນະ ທີ່ສັນຈອນຕາມທາງຫຼວງສາຍຫຼັກ ໄປກ່ອນ.

**ມາດຕາ 30 ລົດທີ່ແລ່ນດ້ວຍຄວາມໄວຕ່ຳ**

ລົດທີ່ແລ່ນດ້ວຍຄວາມໄວບໍ່ເກີນ ຫ້າສິບ ກິໂລແມັດຕໍ່ຊົ່ວໂມງ ຕ້ອງແລ່ນຕາມຊ່ອງຈະລາຈອນຂວາສຸດ ຍົກເວັ້ນໃນເວລາຈະລ້ຽວຊ້າຍ ຫຼື ລ້ຽວກັບ ແລະ ຈອດລົດ ໃນກໍລະນີທີ່ອະນຸຍາດໃຫ້ຈອດລົດກ້ຳຊ້າຍໄດ້.

**ມາດຕາ 31 ການຮັກສາໄລຍະຫ່າງ**

ຜູ້ຂັບຂີ່ ທີ່ສັນຈອນຕາມຊ່ອງຈະລາຈອນ ຕ້ອງຮັກສາໄລຍະຫ່າງຈາກລົດຄັນທາງໜ້າໃຫ້ພຽງພໍ ແລະ ເໝາະສົມກັບຄວາມໄວ ເພື່ອຮັບປະກັນຄວາມປອດໄພ. ໃນກໍລະນີລົດຄັນທາງໜ້າຫາກຢຸດຢ່າງກະທັນຫັນ ຕ້ອງຮັກສາໄລຍະຫ່າງກັບລົດຄັນອື່ນ ທີ່ແລ່ນຢູ່ທາງຂ້າງຢ່າງເໝາະສົມ ເພື່ອຫຼີກເວັ້ນການເກາະ, ດາດ ຫຼື ຕຳກັນ.

## ໝວດທີ 3
## ການຊິງຂຶ້ນໜ້າ ແລະ ການສວນທາງກັນ

### ມາດຕາ 32 ການຂັບຂີ່ຊິງຂຶ້ນໜ້າ

ກ່ອນຈະຊິງຂຶ້ນໜ້າ ຜູ້ຂັບຂີ່ ຕ້ອງເບິ່ງທາງເບື້ອງໜ້າວ່າມີຄວາມສະດວກ ແລະ ປອດໄພ, ໄລຍະຫ່າງພຽງພໍທີ່ຈະຊິງໄດ້, ຈຶ່ງໃຫ້ສັນຍານດ້ວຍການເປີດໄຟສັນຍານລ້ຽວຊ້າຍ ຫຼື ເຕືອນດ້ວຍສັນຍານແກ, ຖ້າເປັນຍາມຄໍ່າມືດໃຫ້ເຕືອນດ້ວຍການກົດໄຟຕາຕໍ່າ, ສູງ ສະຫຼັບກັນ, ແລ້ວຈຶ່ງເລັ່ງຄວາມໄວຂຶ້ນໄປ ເມື່ອຂຶ້ນໄປຫວິດ ແລະ ເບິ່ງວ່າມີໄລຍະຫ່າງຢ່າງພຽງພໍແລ້ວ ໃຫ້ສັນຍານໄຟລ້ຽວຂວາ ເພື່ອເຂົ້າສູ່ຊ່ອງຈະລາຈອນເດີມ ແລະ ບໍ່ຕ້ອງສ້າງສິ່ງທີ່ເປັນອັນຕະລາຍຕໍ່ລົດທີ່ຊິງຂຶ້ນມາດ້ວຍການຫັກຕັດໜ້າໃນໄລຍະຈໍ້ໆ.

ເມື່ອໄດ້ຮັບສັນຍານຂໍຊິງຂຶ້ນໜ້າ, ຜູ້ທີ່ຖືກຊິງ ຕ້ອງສັງເກດເບິ່ງທາງເບື້ອງໜ້າຂອງຕົນ ວ່າຮັບປະກັນຄວາມປອດໄພ ຫຼື ບໍ່ ຈາກນັ້ນຈຶ່ງຜ່ອນຄວາມໄວລົງ, ເປີດໄຟສັນຍານລ້ຽວຂວາ, ແນບເຂົ້າແຄມທາງກໍ້າຂວາຂອງຕົນເພື່ອປ່ອຍທາງໃຫ້ຜູ້ຊິງຂຶ້ນໄປ.

### ມາດຕາ 33 ການບໍ່ອະນຸຍາດໃຫ້ຊິງຂຶ້ນໜ້າ

ຜູ້ຂັບຂີ່ ບໍ່ສາມາດຊິງຂຶ້ນໜ້າໃນກໍລະນີ ດັ່ງນີ້:

1. ລົດຄັນທາງໜ້າເປີດໄຟສັນຍານລ້ຽວຊ້າຍ;
2. ເມື່ອມີລົດທີ່ແລ່ນຕາມຫຼັງມາກໍາລັງຊິງຂຶ້ນມາ.

### ມາດຕາ 34 ການບໍ່ອະນຸຍາດໃຫ້ຜູ້ຖືກຊິງກະທໍາ

ຜູ້ຖືກຊິງ ຕ້ອງບໍ່ກະທໍາສິ່ງໃດໜຶ່ງ ທີ່ເປັນການກີດຂວາງການຊິງ ດັ່ງນີ້:

1. ບໍ່ປ່ອຍໃຫ້ຊິງ ຫຼື ຂັດຂວາງການຊິງ;
2. ເລັ່ງຄວາມໄວແຂ່ງກັບລົດທີ່ກໍາລັງຊິງຂຶ້ນມາ.

### ມາດຕາ 35 ເຂດທີ່ບໍ່ອະນຸຍາດໃຫ້ຊິງ

ເຂດທີ່ບໍ່ອະນຸຍາດໃຫ້ຜູ້ຂັບຂີ່ ຊິງຂຶ້ນໜ້າ ມີ ດັ່ງນີ້:

1. ເຂດທາງແຍກທີ່ມີປ້າຍໄຟສັນຍານຈະລາຈອນ ຫຼື ເຂດທາງແຍກທີ່ບໍ່ມີການຄວບຄຸມ ເມື່ອສັນຈອນມາຕາມທາງທີ່ບໍ່ແມ່ນທາງໃຫຍ່;
2. ເຂດທາງມ້າລາຍ;
3. ເຂດຊຸມຊົນ ແລະ ເຂດທີ່ກໍາລັງກໍ່ສ້າງທາງຫຼວງ;
4. ບ່ອນຂ້າມທາງລົດໄຟ ແລະ ກ່ອນເຖິງລາງລົດໄຟ ໃນໄລຍະ ໜຶ່ງຮ້ອຍ ແມັດ;
5. ເທິງຂົວ, ກ້ອງຂົວ, ໃນອຸໂມງ;
6. ບ່ອນທາງຂຶ້ນຄ້ອຍ, ທາງໂຄ້ງອັນຕະລາຍ, ທາງແຄບ, ທາງຫຼຸບ, ທາງໂນນ, ທາງຄື້ນ, ເຂດທີ່ມີປ້າຍຫ້າມຊິງ, ເຂດເສັ້ນແບ່ງທິດທາງທີ່ເປັນເສັ້ນເຕັມ ແລະ ບ່ອນທີ່ໄລຍະການແນມເຫັນຈໍາກັດ.

ມາດຕາ 36 ການປະຕິບັດສຳລັບລົດທີ່ໃຊ້ຄວາມໄວຕ່ຳ

ລົດທີ່ແລ່ນດ້ວຍຄວາມໄວຕ່ຳ ນອກເຂດຊຸມຊົນ ຜູ້ຂັບລົດຕ້ອງແນບເຂົ້າແຄມທາງກ້ຳຂວາໃຫ້ຫຼາຍ, ຜ່ອນຄວາມໄວລົງ ຫຼື ຢຸດລົດ ເພື່ອປ່ອຍລົດຄັນອື່ນ ຫຼື ຫຼາຍຄັນທີ່ຕາມຫຼັງມາ ຊີງຂຶ້ນໜ້າໄດ້.

**ມາດຕາ 37 ການຂັບລົດສວນທາງກັນ ຢູ່ບ່ອນທີ່ມີສິ່ງກີດຂວາງ**

ການຂັບລົດສວນທາງກັນຢູ່ບ່ອນທີ່ມີສິ່ງກີດຂວາງ ໃຫ້ປະຕິບັດ ດັ່ງນີ້:

1. ໃນເມື່ອມີສິ່ງກີດຂວາງຢູ່ທາງໜ້າຂອງຕົນ ຜູ້ຂັບຂີ່ ຕ້ອງຢຸດ ເພື່ອປ່ອຍທາງໃຫ້ລົດສວນທາງມານັ້ນໄປກ່ອນ;

2. ຖ້າສວນທາງກັນຢູ່ກາງຄ້ອຍທີ່ມີຄວາມຫຍຸ້ງຍາກ ຫຼື ມີອຸປະສັກກີດຂວາງ, ຜູ້ຂັບຂີ່ລົດທີ່ລົງຄ້ອຍ ຕ້ອງປ່ອຍໃຫ້ລົດທີ່ຂຶ້ນຄ້ອຍນັ້ນ ໄປກ່ອນ.

## ໝວດທີ 4
## ການຈອດ ແລະ ຈອດຊົ່ວຄາວ ຕາມທາງຫຼວງ

**ມາດຕາ 38 ການຈອດ ແລະ ຈອດຊົ່ວຄາວ ຕາມທາງຫຼວງ**

ການຈອດ ແລະ ຈອດຊົ່ວຄາວ ຕາມທາງຫຼວງ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ຈອດຕາມແຄມທາງຫຼວງກ້ຳຂວາ;

2. ໃຫ້ລົດເບົາ ຈອດ ແລະ ຈອດຊົ່ວຄາວ ຕາມແຄມທາງກ້ຳຊ້າຍໄດ້ ສຳລັບທາງທີ່ມີການສັນຈອນທິດທາງດຽວ, ສຳລັບລົດຂົນສົ່ງສິນຄ້າ ທີ່ມີນ້ຳໜັກລວມເກີນ 3.500 ກິໂລກຣາມ ສາມາດຈອດຊົ່ວຄາວເພື່ອຄຽນຖ່າຍສິນຄ້າ ເທົ່ານັ້ນ.

ນອກຈາກນີ້ ຍັງຕ້ອງປະຕິບັດຕາມ ປ້າຍ, ເຄື່ອງໝາຍ ຈະລາຈອນ ທີ່ຕິດຕັ້ງຕາມທາງ ແລະ ສະຖານທີ່ທີ່ໄດ້ກຳນົດໄວ້.

**ມາດຕາ 39 ລັກສະນະ ແລະ ຮູບແບບ ຂອງການຈອດລົດຕາມແຄມທາງຫຼວງ**

ການຈອດລົດຕາມແຄມທາງຫຼວງ ໃຫ້ປະຕິບັດ ດັ່ງນີ້:

1. ການຈອດລົດຕາມແຄມທາງ ໃຫ້ຈອດເປັນແຖວດຽວຂະໜານກັບຂອບທາງ ກ້ຳຂວາ ແລະ ໃຫ້ຫ່າງຈາກແຄມທາງບໍ່ເກີນ ສາມສິບ ຊັງຕີແມັດ;

2. ບ່ອນທີ່ມີປ້າຍບອກບ່ອນຈອດລົດ ໃຫ້ປະຕິບັດຕາມລັກສະນະຂອງຮູບ ທີ່ໄດ້ກຳນົດໄວ້ໃນໝວດປ້າຍເພີ່ມ;

3. ບ່ອນທີ່ມີເສັ້ນໝາຍໜ້າທາງແບ່ງຄອງຈອດລົດ ໃຫ້ປະຕິບັດຕາມລັກສະນະ ແລະ ຮູບແບບຂອງບ່ອນຈອດລົດທີ່ໄດ້ກຳນົດໄວ້;

4. ການຈອດລົດຕາມແຄມທາງແບບສະຫຼຽງ ໃຫ້ຈອດໄດ້ສະເພາະບ່ອນທີ່ມີຂີດໝາຍໄວ້ ເທົ່ານັ້ນ;

5. ການຈອດລົດຕາມບ່າທາງ ໃຫ້ຈອດໄດ້ສະເພາະ ລົດເບົາ, ລົດຈັກ, ລົດໂມເປດ ແລະ ລົດຖີບ, ລັກສະນະ ແລະ ຮູບແບບ ການຈອດ ໃຫ້ປະຕິບັດຕາມປ້າຍເພີ່ມທີ່ໄດ້ຕິດຕັ້ງໄວ້ເບື້ອງລຸ່ມ ຂອງປ້າຍບໍລິການບ່ອນຈອດລົດ ແລະ ຕ້ອງບໍ່ກີດຂວາງທາງຄົນຍ່າງ.

ມາດຕາ 40 ການຈອດລົດເພື່ອພັກຜ່ອນໄລຍະຍາວ

ການຈອດລົດເພື່ອພັກຜ່ອນໄລຍະຍາວ ຫຼື ນອນຄ້າງຄືນ ແລະ ອື່ນໆ ຢູ່ຕາມທາງຫຼວງນອກເຂດຕົວເມືອງ ໃຫ້ຈອດຢູ່ລານຈອດລົດທີ່ໄດ້ກຳນົດໄວ້ ຫຼື ຈອດໄວ້ນອກທາງຫຼວງ.

**ມາດຕາ 41 ບ່ອນທີ່ບໍ່ອະນຸຍາດໃຫ້ຈອດລົດຊົ່ວຄາວ**

ບ່ອນທີ່ບໍ່ອະນຸຍາດໃຫ້ຈອດລົດຊົ່ວຄາວຕາມທາງ ມີ ດັ່ງນີ້:

1. ບ່ອນຂ້າມທາງລົດໄຟ, ໃນອຸໂມງ, ເທິງຂົວ ແລະ ກ້ອງຂົວ;

2. ຕາມແຄມທາງ ບ່ອນທີ່ເສັ້ນແບ່ງໃຈກາງທາງເປັນເສັ້ນເຕັມ ແລະ ໄລຍະຫ່າງ ລະຫວ່າງ ເສັ້ນແບ່ງໃຈກາງທາງ ຫາເສັ້ນຂອບທາງ ໜ້ອຍກວ່າ ສາມ ແມັດ ຫຼື ໄລຍະຫ່າງຈາກຂ້າງກ້ຳຊ້າຍຂອງລົດ ທີ່ຈອດຢູ່ຫາເສັ້ນແບ່ງໃຈກາງທາງທີ່ເປັນເສັ້ນເຕັມ ໜ້ອຍກວ່າ ສາມ ແມັດ;

3. ທາງມ້າລາຍ ແລະ ໃກ້ທາງຍ່າງທີ່ມີໄລຍະໜ້ອຍກວ່າ ຫ້າ ແມັດ;

4. ຕາມເສັ້ນທາງບ່ອນໃກ້ທາງໂຄ້ງອັນຕະລາຍ, ທາງໂນນ ແລະ ບ່ອນທີ່ການແນມເຫັນຈາກທິດທາງໃດໜຶ່ງໜ້ອຍກວ່າ ໜຶ່ງຮ້ອຍ ແມັດ;

5. ໃກ້ທາງແຍກ ຫຼື ປາກທາງເຂົ້າ, ອອກ ສຳນັກງານອົງການ ທີ່ມີໄລຍະ ຫ້າ ແມັດ;

6. ເທິງທາງລົດຖີບ ແລະ ທາງຄົນຍ່າງ;

7. ຈາກບ່ອນຈອດລົດປະຈຳທາງທີ່ມີໄລຍະໜ້ອຍກວ່າ ສິບຫ້າ ແມັດ, ຖ້າບໍ່ມີເຄື່ອງໝາຍ ໃຫ້ນັບແຕ່ປ້າຍບອກບ່ອນຈອດລົດປະຈຳທາງໄປ ສິບຫ້າ ແມັດ ຍົກເວັ້ນກໍລະນີຈອດຊົ່ວຄາວ ເພື່ອເອົາຄົນຂຶ້ນ, ລົງລົດ ຖ້າການຈອດດັ່ງກ່າວ ບໍ່ກີດຂວາງການເຂົ້າຈອດຂອງລົດປະຈຳທາງ;

8. ບ່ອນທີ່ບັງປ້າຍຈະລາຈອນ, ໄຟສັນຍານ, ຕົ້ນທາງເຂົ້າ, ອອກ ສຳນັກງານອົງການ, ເຮືອນພັກ ແລະ ຕົ້ນທາງຄົນຍ່າງ;

9. ການຈອດລົດຢູ່ແຄມທາງກ້ຳຊ້າຍ ບ່ອນທາງທີ່ມີການສັນຈອນສອງທິດທາງ.

**ມາດຕາ 42 ບ່ອນທີ່ບໍ່ອະນຸຍາດໃຫ້ຈອດລົດ**

ບ່ອນທີ່ບໍ່ອະນຸຍາດໃຫ້ຈອດລົດຕາມທາງ ມີ ດັ່ງນີ້:

1. ທຸກບ່ອນ ທີ່ບໍ່ອະນຸຍາດໃຫ້ຈອດລົດຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງດຳລັດສະບັບນີ້;

2. ທາງຫຼວງ ນອກຕົວເມືອງ ບ່ອນທີ່ມີເຄື່ອງໝາຍທາງໃຫຍ່;

3. ທາງຂ້າມລາງລົດໄຟໃນໄລຍະ ຫ້າສິບ ແມັດ.

**ມາດຕາ 43 ການຈອດລົດສຸກເສີນຢູ່ບ່ອນບໍ່ອະນຸຍາດໃຫ້ຈອດ**

ໃນກໍລະນີທີ່ມີຄວາມຈຳເປັນ ຕ້ອງຈອດສຸກເສີນ ຢູ່ບ່ອນບໍ່ອະນຸຍາດໃຫ້ຈອດລົດນັ້ນ, ຍ້ອນສະພາບເຕັກນິກຂອງລົດຂັດຂ້ອງ, ເຄື່ອງຂອງທີ່ບັນທຸກບໍ່ຮັບປະກັນຄວາມປອດໄພ ຫຼື ສຸຂະພາບຂອງຜູ້ຂັບຂີ່ບໍ່ສາມາດຄວບຄຸມລົດໄດ້ ຕ້ອງເປີດໄຟສັນຍານສຸກເສີນ ພ້ອມທັງຕິດຕັ້ງ ປ້າຍ ແລະ ເຄື່ອງໝາຍ ສັນຍານສຸກເສີນໄວ້ຕາມແຕ່ລະກໍລະນີເພື່ອຄວາມປອດໄພ.

ພາຍຫຼັງທີ່ໄດ້ແກ້ໄຂແລ້ວ ໃຫ້ຮີບຮ້ອນເຄື່ອນຍ້າຍລົດອອກສະຖານທີ່ດັ່ງກ່າວ. ໃນກໍລະນີທີ່ໃຊ້ວັດສະດຸອື່ນ ທີ່ບໍ່ແມ່ນປ້າຍ ແລະ ເຄື່ອງໝາຍຈະລາຈອນ ເປັນຕົ້ນ ງ່າໄມ້ ກ່ອນຈະເຄື່ອນຍ້າຍລົດ ຕ້ອງໄດ້ເຄື່ອນຍ້າຍງ່າໄມ້ ອອກຈາກທາງເສຍກ່ອນ.

**ມາດຕາ 44 ການໄຂປະຕູລົດເມື່ອຈອດລົດຕາມແຄມທາງ**

ກ່ອນອອກຈາກລົດທີ່ຈອດແລ້ວ ຜູ້ຂັບຂີ່ ຕ້ອງແນມເບິ່ງລົດທີ່ແລ່ນມາຕາມທາງຫຼັງ ແລະ ທາງໜ້າ ດ້ວຍຄວາມລະມັດລະວັງ ເພື່ອຮັບປະກັນວ່າມີຄວາມປອດໄພ ແລ້ວຈຶ່ງໄຂປະຕູ ແລະ ບໍ່ໃຫ້ໄຂປະຕູລົດຄ້າງໄວ້. ສໍາລັບຜູ້ໂດຍສານຕ້ອງເປີດປະຕູ ແລະ ລົງລົດຈາກທາງກໍ້າຂວາເທົ່ານັ້ນ.

**ມາດຕາ 45 ການຈອດລົດປະໄວ້**

ການຈອດລົດປະໄວ້ຢູ່ສະຖານທີ່ໃດໜຶ່ງ ຜູ້ຂັບຂີ່ ຕ້ອງກວດກາເບິ່ງມາດຕະການປ້ອງກັນຄວາມປອດໄພ ເປັນຕົ້ນ ການໃສ່ຫ້າມລໍ້ມື, ການຮັບປະກັນບໍ່ໃຫ້ລົດໄຫຼ ຫຼື ເຄື່ອນທີ່ເອງ.

## ໝວດທີ 5
## ການຂັບຂີ່ຜ່ານທາງ ຄົບ, ແຍກ

**ມາດຕາ 46 ການລ້ຽວລົດຜ່ານທາງ ຄົບ, ແຍກ**

ການລ້ຽວຊ້າຍ, ລ້ຽວຂວາ ຜູ້ຂັບຂີ່ ຕ້ອງມີຄວາມລະມັດລະວັງ ໂດຍໃຫ້ບຸລິມະສິດຄົນຍ່າງ, ຄົນຂີ່ລົດຖີບ, ລໍ້ເລື່ອນຄົນພິການ ແລະ ລໍ້ຍູ້ ທີ່ສັນຈອນຢູ່ຕາມທາງທີ່ຈະລ້ຽວນັ້ນ ໄປກ່ອນ.

**ມາດຕາ 47 ການປະຕິບັດໃນເວລາຢູ່ທາງແຍກທີ່ມີອຸປະສັກ**

ການປະຕິບັດໃນເວລາຢູ່ທາງແຍກທີ່ມີອຸປະສັກ ຊຶ່ງຢູ່ໃນທາງແຍກດັ່ງກ່າວ ຍັງມີລົດໄປບໍ່ຫວິດ ແລະ ຍັງຕໍ່ກັນກັນຢູ່ ຜູ້ຂັບຂີ່ ຕ້ອງຢຸດລົດຢູ່ບ່ອນເສັ້ນຢຸດ ຈົນກວ່າລົດທີ່ຍັງຄ້າງຢູ່ໃນທາງແຍກນັ້ນ ໄປຫວິດກ່ອນ ເພື່ອບໍ່ໃຫ້ເປັນການກີດຂວາງການສັນຈອນຂອງລົດ ທີ່ມາຈາກທາງດ້ານຂ້າງ ໃນເວລາໄດ້ຮັບສັນຍານໄຟຂຽວ.

**ມາດຕາ 48 ການຂັບຂີ່ຜ່ານທາງ ຄົບ, ແຍກ**

ການຂັບຂີ່ຜ່ານທາງ ຄົບ, ແຍກ ທີ່ມີໄຟສັນຍານຈະລາຈອນ ຫຼື ມີເຈົ້າໜ້າທີ່ຄວບຄຸມການຈະລາຈອນ ໃຫ້ຖືວ່າເປັນທາງແຍກມີການຄວບຄຸມ, ຜູ້ຂັບຂີ່ຕ້ອງປະຕິບັດຕາມໄຟສັນຍານ ຫຼື ຕາມການສັນຍານ ຂອງເຈົ້າໜ້າທີ່ຜູ້ຄວບຄຸມການຈະລາຈອນ.

ໃນກໍລະນີ ໄຟເຫຼືອງຮຸ່ງກະພິບ ຫຼື ໄຟສັນຍານບໍ່ເຮັດວຽກ ແລະ ບໍ່ມີຜູ້ຄວບຄຸມ ໃຫ້ຖືວ່າເປັນທາງແຍກ ທີ່ບໍ່ມີການຄວບຄຸມ ຜູ້ຂັບຂີ່ ຕ້ອງປະຕິບັດຕາມກົດຈະລາຈອນ ຜ່ານທາງແຍກສະເໝີກັນ ຫຼື ຕາມປ້າຍບອກສິດ.

**ມາດຕາ 49 ການຂັບຂີ່ຜ່ານທາງແຍກທີ່ມີການຄວບຄຸມ**

ການຂັບຂີ່ຜ່ານທາງແຍກທີ່ມີການຄວບຄຸມ ໃຫ້ປະຕິບັດ ດັ່ງນີ້:

1. ການລ້ຽວຂວາຕາມໄຟສັນຍານ ລູກສອນສີຂຽວ ລ້ຽວຂວາ ຜູ້ຂັບຂີ່ທີ່ສັນຈອນ ຕາມຊ່ອງຈະລາຈອນ ຂວາສຸດ ທີ່ມີປ້າຍ ຫຼື ເຄື່ອງໝາຍໜ້າທາງໄປຊື່ ແລະ ລ້ຽວຂວາ ໃນກໍລະນີທາງໜ້າ ບໍ່ມີລົດຢຸດລໍສັນຍານໄຟຢູ່ ສາມາດ ລ້ຽວຂວາໄດ້ ແຕ່ຕ້ອງໃຫ້ບຸລິມະສິດລົດທີ່ໄປຊື່ ຈາກທາງກໍ້າຊ້າຍ ຫຼື ລ້ຽວຊ້າຍ ຢູ່ທາງໜ້າ ທີ່ໄດ້ຮັບສັນຍານໄຟຂຽວ ໄປກ່ອນ, ແຕ່ຖ້າມີລົດຈອດລໍສັນຍານໄຟ ສີຂຽວ ຢູ່ທາງໜ້າ ຕ້ອງໄດ້ຢຸດລໍຖ້າໄປຕາມສັນຍານ ໄຟ ສີຂຽວ ຫ້າມບໍ່ໃຫ້ບີບແກໄລ່ ເດັດຂາດ;

2. ຜູ້ຂັບຂີ່ທີ່ໄດ້ເຂົ້າສູ່ທາງແຍກຕາມໄຟສັນຍານ ສີຂຽວ ແລ້ວນັ້ນ ຕ້ອງສືບຕໍ່ສັນຈອນ ເຖິງແມ່ນວ່າ ໄຟສັນຍານທີ່ຢູ່ທາງໜ້າຈະປ່ຽນເປັນສີ ເຫຼືອງ ຫຼື ແດງ ແລ້ວກໍຕາມ;

3. ເມື່ອມີໄຟສັນຍານ ສີຂຽວ ແຕ່ຢູ່ທາງແຍກຍັງມີລົດ ຫຼື ຄົນຍ່າງຂ້າມທາງ ຜູ້ຂັບຂີ່ ຕ້ອງໃຫ້ບຸລິມະສິດແກ່ລົດ ແລະ ຄົນຍ່າງ ທີ່ກຳລັງຂ້າມທາງໄປຫາວິດເສຍກ່ອນ.

### ມາດຕາ 50 ການຂັບຂີ່ຜ່ານທາງແຍກທີ່ບໍ່ມີການຄວບຄຸມ

ການຂັບຂີ່ຜ່ານທາງແຍກທີ່ບໍ່ມີການຄວບຄຸມ ໃຫ້ປະຕິບັດ ດັ່ງນີ້:

1. ໃນບ່ອນທາງແຍກທີ່ບໍ່ສະເໝີກັນ ຫຼື ເປັນທາງໃຫຍ່ຄົບທາງນ້ອຍ ທີ່ມີປ້າຍ ຫຼື ບໍ່ມີປ້າຍ ຜູ້ຂັບຂີ່ທີ່ມາຈາກທາງນ້ອຍ ຕ້ອງປ່ອຍທາງໃຫ້ຜູ້ຂັບຂີ່ທີ່ມາຈາກທາງໃຫຍ່ ໄປກ່ອນ;

2. ໃນບ່ອນທີ່ມີປ້າຍປ່ອຍທາງ ແລະ ປ້າຍກຳນົດທາງວົງວຽນ ຜູ້ຂັບຂີ່ທີ່ຈະເຂົ້າສູ່ວົງວຽນ ຕ້ອງປ່ອຍທາງໃຫ້ລົດທີ່ຢູ່ໃນວົງວຽນ ໄປກ່ອນ;

3. ໃນບ່ອນທາງຄົບ ທີ່ມີການສັນຈອນປ່ຽນທິດທາງ ຜູ້ຂັບຂີ່ທີ່ແລ່ນມາຈາກທິດທາງກົງກັນຂ້າມ ຕ້ອງຢຸດ ແລະ ປ່ອຍໃຫ້ລົດທີ່ແລ່ນມາທາງກ້ຳຂວາຂອງຕົນ ໄປກ່ອນ;

4. ໃນບ່ອນທາງຄົບສະເໝີກັນ ຜູ້ຂັບຂີ່ທີ່ມາຈາກທາງກ້ຳຂວາມື ຫຼື ຜູ້ທີ່ຢູ່ທາງກ້ຳຂວາມືຂອງຕົນ ມີສິດໄປກ່ອນ;

5. ຜູ້ຂັບຂີ່ ທີ່ຈະລ້ຽວຊ້າຍ ຫຼື ລ້ຽວກັບ ຢູ່ບ່ອນທາງຄົບສະເໝີກັນ ຕ້ອງປ່ອຍທາງໃຫ້ຜູ້ຂັບຂີ່ທີ່ມາຈາກທາງໜ້າ ທີ່ຈະໄປຊື່ ຫຼື ລ້ຽວຂວາ ໄປກ່ອນ;

6. ໃນບ່ອນທີ່ຜູ້ຂັບຂີ່ບໍ່ສາມາດໄຈ້ແຍກສະພາບໜ້າທາງໄດ້ ໃນເວລາຄໍ່າມືດ, ຝົນຕົກມີ ນໍ້າອັ່ງ, ມີຂີ້ຕົມ ແລະ ອື່ນໆ ແລະ ບໍ່ມີປ້າຍບອກສິດ ໃຫ້ຖືວ່າທາງຂອງຕົນເປັນທາງນ້ອຍ.

## ໝວດທີ 6
## ການຂັບຂີ່ຜ່ານ ບ່ອນຂ້າມທາງ ແລະ ບ່ອນຢຸດລົດຂົນສົ່ງຜູ້ໂດຍສານປະຈຳທາງ

### ມາດຕາ 51 ການຂັບຂີ່ຜ່ານບ່ອນຂ້າມທາງ

ການຂັບຂີ່ຜ່ານບ່ອນຂ້າມທາງ ໃຫ້ປະຕິບັດ ດັ່ງນີ້:

1. ໃນເວລາລົດ ເຂົ້າໃກ້ບ່ອນທາງຂ້າມ ຫຼື ທາງມ້າລາຍ ຜູ້ຂັບຂີ່ຕ້ອງຜ່ອນຄວາມໄວລົງ ແລະ ເພີ່ມຄວາມລະມັດລະວັງ, ຖ້າມີຄົນຍ່າງກຳລັງຍ່າງຂ້າມທາງ ຕ້ອງຢຸດລົດ ຈົນກວ່າຄົນຍ່າງຂ້າມທາງໄປຫາວິດກ່ອນຈຶ່ງສືບຕໍ່ສັນຈອນ, ຜູ້ຂັບຂີ່ຕາມຫຼັງກໍ່ຕ້ອງປະຕິບັດຄືກັນ;

2. ໃນເວລາມີໄຟສັນຍານ ສີຂຽວ ຜູ້ຂັບຂີ່ ຕ້ອງໃຫ້ບຸລິມະສິດຄົນຍ່າງ ທີ່ກຳລັງຍ່າງຂ້າມທາງໄປຫາວິດກ່ອນຈຶ່ງອອກລົດ;

3. ບໍ່ອະນຸຍາດ ໃຫ້ຢຸດລົດກວມທາງຄົນຍ່າງຂ້າມທາງ ໃນເວລາມີການຈະລາຈອນໜາແໜ້ນ, ເມື່ອເຫັນວ່າລົດຕົນເອງຈະແລ່ນບໍ່ຫາວິດທາງຄົນຍ່າງຂ້າມທາງ ຜູ້ຂັບຂີ່ຕ້ອງຢຸດລົດຂອງຕົນ ຢູ່ຕໍ່ໜ້າທາງຄົນຍ່າງຂ້າມທາງ;

4. ໃນທຸກກໍລະນີ ຜູ້ຂັບຂີ່ຕ້ອງໃຫ້ບຸລິມະສິດ ໃຫ້ແກ່ຄົນພິການຕາ ທີ່ໃຊ້ໄມ້ຄ້ອນຊີ້ທາງ, ຄົນພິການຂາທີ່ໃຊ້ອຸປະກອນຊ່ວຍພົ້ນ ຂ້າມທາງໄປກ່ອນ.

### ມາດຕາ 52 ການຂັບຂີ່ຜ່ານບ່ອນຢຸດລົດຂົນສົ່ງຜູ້ໂດຍສານປະຈຳທາງ

ຜູ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານປະຈຳທາງ ຕ້ອງຢຸດລົດຮັບ, ສົ່ງຜູ້ໂດຍສານ ຢູ່ບ່ອນທີ່ໄດ້ກຳນົດໄວ້.

ການຂັບຂີ່ຜ່ານບ່ອນຢຸດລົດຂົນສົ່ງຜູ້ໂດຍສານປະຈຳທາງ ໃຫ້ປະຕິບັດ ດັ່ງນີ້:

1. ໃນກໍລະນີ ມີລົດຂົນສົ່ງຜູ້ໂດຍສານປະຈຳທາງ ຢຸດຮັບ, ສົ່ງ ຜູ້ໂດຍສານຢູ່ບ່ອນຈອດລົດ, ຈຸດຮັບ, ສົ່ງ ຜູ້ຂັບຂີ່ອື່ນ ທີ່ຕາມຫຼັງມາຕ້ອງຜ່ອນຄວາມໄວ ເພື່ອປ້ອງກັນຄວາມປອດໄພແກ່ຜູ້ໂດຍສານທີ່ລົງຈາກລົດ ແລ້ວຂ້າມທາງ ຫຼື ຂ້າມທາງ ເພື່ອມາຂຶ້ນລົດ;

2. ໃນກໍລະນີບ່ອນຈອດລົດໂດຍສານປະຈຳທາງ ໄດ້ກຳນົດໄວ້ຢູ່ຊ່ອງຈະລາຈອນຊ້າຍສຸດ ຫຼື ຢູ່ກາງທາງ ໃນເວລາມີລົດປະຈຳທາງຈອດຢູ່ປ້າຍເພື່ອເອົາຜູ້ໂດຍສານຂຶ້ນ, ລົງ ນັ້ນ ຜູ້ຂັບຂີ່ລົດຄັນອື່ນ ຕ້ອງໄດ້ຢຸດລົດ ເພື່ອ ໃຫ້ຜູ້ໂດຍສານທີ່ລົງຈາກລົດ ຫຼື ໄປຂຶ້ນລົດ ຂ້າມທາງໄປຫວິດກ່ອນ ຈຶ່ງສາມາດສືບຕໍ່ການສັນຈອນໄດ້;

3. ເມື່ອເຫັນລົດຮັບ, ສົ່ງ ເດັກນ້ອຍ ທີ່ເປີດໄຟສັນຍານສຸກເສີນຢູ່ທາງໜ້າ ຜູ້ຂັບຂີ່ ຕ້ອງຜ່ອນ ຄວາມໄວລົງ ຫຼື ຢຸດລົດ ເພື່ອໃຫ້ເດັກນ້ອຍ ຂຶ້ນ, ລົງ ລົດດັ່ງກ່າວ ຢ່າງປອດໄພ.

## ໝວດທີ 7
## ການຂັບຂີ່ຂ້າມທາງລົດໄຟ

### ມາດຕາ 53 ການຂັບຂີ່ຂ້າມທາງລົດໄຟ

ການຂັບຂີ່ຂ້າມທາງລົດໄຟ ໃຫ້ປະຕິບັດ ດັ່ງນີ້:

1. ຂ້າມທາງລົດໄຟໃນບ່ອນທີ່ໄດ້ກຳນົດໃຫ້ ເທົ່ານັ້ນ;

2. ປ່ອຍທາງໃຫ້ບູລິມະສິດແກ່ຂະບວນລົດໄຟ ຫຼື ຫົວຈັກລົດໄຟ ທີ່ກຳລັງແລ່ນໃກ້ເຂົ້າມາ ໄປກ່ອນ;

3. ປະຕິບັດຕາມ ປ້າຍສັນຍານ, ໄຟສັນຍານ, ເຄື່ອງໝາຍທາງ, ຕຳແໜ່ງໄມ້ກັ້ນທາງ ແລະ ການຊີ້ບອກ ຂອງຄົນເຝົ້າຍາມທາງລົດໄຟ ແລະ ຕ້ອງໃຫ້ແນ່ໃຈວ່າ ບໍ່ມີຂະບວນລົດໄຟແລ່ນມາໃນໄລຍະໃກ້.

### ມາດຕາ 54 ການບໍ່ອະນຸຍາດໃຫ້ຂັບຂີ່ຂ້າມທາງລົດໄຟ

ຜູ້ຂັບຂີ່ບໍ່ສາມາດແລ່ນຂ້າມທາງລົດໄຟ ໃນກໍລະນີ ດັ່ງນີ້:

1. ມີສິ່ງກັ້ນປິດທາງ ຫຼື ກຳລັງເອົາສິ່ງກັ້ນລົງ;

2. ມີໄຟສັນຍານຫ້າມຜ່ານ;

3. ຄົນເຝົ້າຍາມທາງລົດໄຟໃຫ້ສັນຍານຫ້າມຜ່ານ;

4. ເມື່ອເຫັນວ່າມີອຸປະສັກຈະຂ້າມທາງບໍ່ຫວິດ;

5. ຂັບລົດຊິງລົດທີ່ຈອດຢູ່ຕໍ່ໜ້າທາງຂ້າມລາງລົດໄຟ;

6. ເປີດສິ່ງກັ້ນປິດທາງໂດຍບໍ່ໄດ້ຮັບອະນຸຍາດ;

7. ຍານພາຫະນະ ຫຼື ກົນຈັກໜັກ ທີ່ແລ່ນດ້ວຍຄວາມໄວຕ່ຳກວ່າ ແປດ ກິໂລແມັດຕໍ່ຊົ່ວໂມງ ແລະ ຂ້າມທາງລົດໄຟໂດຍບໍ່ໄດ້ຮັບອະນຸຍາດຈາກຄົນເຝົ້າຍາມ.

### ມາດຕາ 55 ການຢຸດລົດຢູ່ບ່ອນຂ້າມທາງລົດໄຟ

ຜູ້ຂັບຂີ່ ຕ້ອງຢຸດຢູ່ຕໍ່ໜ້າເສັ້ນຢຸດ, ປ້າຍຢຸດ ຫຼື ໄຟສັນຍານ, ຖ້າບໍ່ມີ ເສັ້ນຢຸດ, ປ້າຍຢຸດ, ໄຟສັນຍານ, ໃຫ້ຢຸດ ຫ່າງຈາກສິ່ງກັ້ນປິດທາງ ບໍ່ໃຫ້ຫຼຸດ ຫ້າ ແມັດ ແລະ ຖ້າບໍ່ມີສິ່ງກັ້ນປິດທາງໃຫ້ຢຸດຫ່າງຈາກລາງລົດໄຟ ບໍ່ໃຫ້ຫຼຸດ ສິບ ແມັດ.

ມາດຕາ 56 ລົດຕິດຂັດຢູ່ທາງລົດໄຟ

ໃນເວລາທີ່ມີລົດຕິດຂັດຢູ່ທາງລົດໄຟ ຜູ້ຂັບຂີ່ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງຮີບຮ້ອນໃຫ້ຜູ້ໂດຍສານລົງຈາກລົດ;

2. ຊອກຫາວິທີເອົາລົດຂອງຕົນ ອອກຈາກທາງລົດໄຟ ໂດຍດ່ວນ.

ໃນກໍລະນີ ບໍ່ສາມາດເອົາລົດອອກໄດ້ ໃຫ້ປະຕິບັດ ດັ່ງນີ້:

- ໃຫ້ແຈ້ງເຈົ້າໜ້າທີ່ລົດໄຟ ຫຼື ຈັດຄົນອອກໄປສັນຍານຕາມທາງລົດໄຟທັງສອງດ້ານໃນໄລຍະ ໜຶ່ງພັນແມັດ ໂດຍຫ່າງຈາກບ່ອນທີ່ລົດຕິດຂັດ ຫຼື ຖ້າມີແຕ່ຕົນເອງຜູ້ດຽວ ໃຫ້ໄປສັນຍານຢູ່ເບື້ອງທີ່ມີການແນມເຫັນໄດ້ງ່າຍດາຍ ເພື່ອໃຫ້ຄົນຂັບຂີ່ລົດໄຟເຫັນສັນຍານ;

- ຢືນຢູ່ນອກລົດ ແລະ ສົ່ງສັນຍານເຕືອນໄພ.

ຖ້າເຫັນລົດໄຟຍັບເຂົ້າມາໃກ້ ໃຫ້ຮີບສົ່ງສັນຍານ ເພື່ອໃຫ້ລົດໄຟຢຸດ.

## ພາກທີ IV
## ການນໍາໃຊ້ສັນຍານເຕືອນ
## ໝວດທີ 1
## ໄຟສັນຍານເທິງຫຼັງຄາລົດ

**ມາດຕາ 57 ໄຟສັນຍານເທິງຫຼັງຄາລົດ**

ໄຟສັນຍານເທິງຫຼັງຄາລົດ ແບ່ງເປັນ ສອງ ປະເພດ ດັ່ງນີ້:

1. ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ;

2. ໄຟສັນຍານເທິງຫຼັງຄາລົດພິເສດ.

**ມາດຕາ 58 ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ**

ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ ມີ ດັ່ງນີ້:

1. ລົດຈະລາຈອນເປີດທາງໃຫ້ຂະບວນຜູ້ນໍາພັກ-ລັດ ແລະ ແຂກຕ່າງປະເທດ ໃຫ້ຕິດຕັ້ງໄຟ ສີຟ້າ ແລະ ສີແດງ ເທິງຫຼັງຄາລົດ ແລະ ມີສຽງຫວໍ (Wail) ເປັນບຸລິມະສິດທີໜຶ່ງ;

2. ລົດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຕິດຕັ້ງໄຟ ສີແດງ ເທິງຫຼັງຄາລົດ ແລະ ມີສຽງຫວໍ (YEIP) ເປັນບຸລິມະສິດທີ ສອງ;

3. ລົດມອດໄຟໃຫ້ຕິດຕັ້ງໄຟ ສີແດງ ເທິງຫຼັງຄາລົດ ແລະ ມີສຽງຫວໍ (Wail) ເປັນບຸລິມະສິດທີ ສອງ;

4. ລົດໂຮງໝໍ, ລົດກູ້ໄພ ແລະ ລົດອົງການສາກົນເພື່ອຄົນພິການປະຈໍາລາວ ໃຫ້ຕິດຕັ້ງໄຟ ສີຟ້າ ເທິງຫຼັງຄາລົດ ແລະ ມີສຽງຫວໍ Hi-Lo ເປັນບຸລິມະສິດທີສາມ.

**ມາດຕາ 59 ການນໍາໃຊ້ໄຟສັນຍານເທິງຫຼັງຄາລົດທີ່ມີອະພິສິດ**

ການນໍາໃຊ້ໄຟສັນຍານໝູນ ສີຟ້າ, ສີແດງ ເທິງຫຼັງຄາລົດທີ່ມີອະພິສິດໃຫ້ປະຕິບັດ ດັ່ງນີ້:

1. ລົດທີ່ຕິດໄຟສັນຍານໝູນ ສີຟ້າ ແລະ ສີແດງ ຕ້ອງເປີດໄຟ ແລະ ສັນຍານສຽງຫວໍ;

2. ລົດນໍາຂະບວນທີ່ມີເຄື່ອງໝາຍ, ສັນຍາລັກຢູ່ທາງຂ້າງ, ທາງໜ້າ ແລະ ທາງຫຼັງ ທີ່ຕິດຕັ້ງໄຟສັນຍາໄຟ

ໝູນສີຟ້າ ແລະ ສີແດງ ແລະ ລົດທີ່ມີແຕ່ໄຟໝູນ ສີແດງ ກໍໄດ້ຮັບອະພິສິດ ແລະ ລົດທີ່ແລ່ນໃນຂະບວນຕ້ອງໄຕ້ໄຟຕ່ຳ;

3. ລົດຂອງກຳລັງປ້ອງກັນຄວາມສະຫງົບ ທີ່ຮັບໃຊ້ວຽກງານກວດກາການສັນຈອນ, ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ສາມາດນຳໃຊ້ໄຟສັນຍານໝູນ ສີແດງ ຫຼື ສີຟ້າ ຫຼື ສາມາດນຳໃຊ້ຄວບກັນ;

4. ລົດຂອງກຳລັງປ້ອງກັນຊາດ ທີ່ຮັບໃຊ້ວຽກງານກວດກາ ກຳລັງປ້ອງກັນຊາດ ສາມາດຕິດຕັ້ງໄຟສັນຍານໝູນສີແດງ;

5. ລົດມອດໄຟ ໃຫ້ໃຊ້ໄຟສັນຍານໝູນ ສີແດງ ແລະ ສັນຍານຫວໍ;

6. ລົດຮັບໃຊ້ ແພດສຸກເສີນ, ກູ້ໄພສຸກເສີນ ໃຫ້ໃຊ້ໄຟສັນຍານໝູນ ສີຟ້າ ແລະ ສັນຍານຫວໍ.

**ມາດຕາ 60 ໄຟສັນຍານເທິງຫຼັງຄາລົດພິເສດ**

ໄຟສັນຍານເທິງຫຼັງຄາລົດພິເສດ ມີ ດັ່ງນີ້:

1. ລົດປະຕິບັດການໄຟຟ້າ ໃຫ້ຕິດຕັ້ງໄຟສີເຫຼືອງເທິງຫຼັງຄາລົດ ແລະ ມີສຽງຫວໍ (YEIP) ເປັນບູລິມະສິດທີ ສີ່;

2. ລົດຂອງຂະແໜງລ້ຽງສັດ ແລະ ການປະມົງ, ລົດນຳໜ້າຂະບວນລົດຂົນສິ່ງສິນຄ້າ, ກໍ່ສ້າງ, ສ້ອມແປງທາງ ແລະ ອະນາໄມເທດສະບານ ໃຫ້ຕິດຕັ້ງໄຟ ສີເຫຼືອງ ເທິງຫຼັງຄາລົດ ບໍ່ອະນຸຍາດໃຫ້ນຳໃຊ້ສຽງຫວໍ ແຕ່ໃຫ້ໃຊ້ສຽງແກລົດໄດ້.

**ມາດຕາ 61 ການນຳໃຊ້ໄຟສັນຍານໝູນສີເຫຼືອງເທິງຫຼັງຄາລົດພິເສດ**

ການນຳໃຊ້ໄຟສັນຍານໝູນ ສີເຫຼືອງ ເທິງຫຼັງຄາລົດພິເສດ ໃຫ້ປະຕິບັດ ດັ່ງນີ້:

1. ໃນເວລາມີການກໍ່ສ້າງ, ສ້ອມແປງທາງ ແລະ ມີລົດຈອດຕັນທາງ;

2. ໃນເວລານຳໜ້າຂະບວນ, ລົດຂົນສິ່ງວັດຖຸ ເກີນຂະໜາດ ແລະ ນ້ຳໜັກເກີນ, ລະເບີດ, ໄວໄຟ, ກຳມັນຕະພາບລັງສີ ແລະ ທາດເບື່ອ ທີ່ມີອັນຕະລາຍ;

3. ໃນເວລານຳໜ້າຂະບວນລົດຖີບທີ່ກຳລັງແຂ່ງຂັນ ຫຼື ຝຶກຊ້ອມ ແລະ ການຈັດກິດຈະກຳຕ່າງໆ ທາງສັງຄົມ.

ການເປີດໄຟສັນຍານໝູນ ສີເຫຼືອງ ເປັນພຽງແຕ່ໃຊ້ເຕືອນຜູ້ຂັບຂີ່ອື່ນ ໃຫ້ລະວັງອັນຕະລາຍເທົ່ານັ້ນ ໂດຍບໍ່ໄດ້ຮັບອະພິສິດໃດໆ, ຍານພາຫະນະທີ່ຕິດຕັ້ງໄຟສັນຍານໝູນ ສີເຫຼືອງ ທີ່ກຳລັງປະຕິບັດໜ້າທີ່ຂອງຕົນ ຈະໄດ້ຮັບຂໍ້ຍົກເວັ້ນໃນການປະຕິບັດກົດຂໍ້ບັງຄັບ ຂອງປ້າຍຈະລາຈອນຕ່າງໆ, ຍົກເວັ້ນການປະຕິບັດຕາມປ້າຍປ່ອຍທາງ, ຢຸດ, ສຸດເຂດທາງໃຫຍ່, ບອກສິດລົດສວນທາງມາ ມີສິດໄປກ່ອນ, ຈຳກັດນ້ຳໜັກສູງສຸດ, ຄວາມຍາວຈຳກັດ, ຄວາມກວ້າງຈຳກັດ, ບອກຈຸດອັນຕະລາຍ ແລະ ຫ້າມຊີງ.

## ໝວດທີ 2
## ການສັນຍານຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ

**ມາດຕາ 62 ການສັນຍານຢຸດລົດຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ**

ການສັນຍານຢຸດລົດຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີ ສາມ ວິທີ ດັ່ງນີ້:

1. ສັນຍານຢຸດລົດ ສີ່ ທິດ;

2. ສັນຍານຢຸດລົດ ສາມ ທິດ;

3. ສັນຍານຢຸດລົດ ສອງ ທິດ.

ສັນຍານຢຸດລົດ ສີ່ ທິດ ແມ່ນການສັນຍານໃຫ້ ຍານພາຫະນະ ແລະ ຄົນທີ່ເຂົ້າມາທາງຄົບ ທຸກທິດຢຸດ, ຜູ້ຂັບຂີ່ຕ້ອງຢຸດລົດຢູ່ຕໍ່ໜ້າເສັ້ນຢຸດ ຫຼື ຂີດໝາຍບ່ອນຄົນຍ່າງຂ້າມທາງ, ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງຢືນຢູ່ຈຸດໃຈກາງທາງຄົບ.

ສັນຍານຢຸດລົດ ສາມ ທິດ ແມ່ນການສັນຍານໃຫ້ ຍານພາຫະນະ ແລະ ຄົນທີ່ເຂົ້າມາທາງຄົບ ເຊັ່ນ ດ້ານໜ້າ, ດ້ານຫຼັງ, ດ້ານຊ້າຍ ຫຼື ດ້ານຂວາ ຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຜູ້ຂັບຂີ່ຕ້ອງຢຸດລົດຢູ່ຕໍ່ໜ້າເສັ້ນຢຸດ ຫຼື ຂີດໝາຍບ່ອນທາງຄົນຍ່າງຂ້າມທາງ.

ສັນຍານຢຸດລົດ ສອງ ທິດ ແມ່ນການສັນຍານໃຫ້ຍານພາຫະນະທີ່ເຂົ້າມາທາງຄົບ ຊຶ່ງອະນຸຍາດໃຫ້ໄປໄດ້ສອງທິດ ເຊັ່ນ ກ້ຳຊ້າຍ ແລະ ກ້ຳຂວາ ຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ, ສ່ວນເບື້ອງໜ້າ ແລະ ເບື້ອງຫຼັງບໍ່ໃຫ້ສັນຈອນ ພ້ອມທັງໃຫ້ຢຸດລົດຢູ່ໜ້າເສັ້ນຢຸດ.

ສຳລັບວິທີການສັນຍານຢຸດລົດ ແລະ ລະບາຍການສັນຈອນ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງປ້ອງກັນຄວາມສະຫງົບ ວາງອອກ.

### ມາດຕາ 63 ການສັນຍານຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ

ຜູ້ຂັບຂີ່ ແລະ ຄົນຍ່າງ ຕ້ອງປະຕິບັດຕາມການສັນຍານຂອງຕຳຫຼວດຈະລາຈອນ ຫຼື ພະນັກງານທີ່ຖືກມອບໝາຍ ໃຫ້ຄວບຄຸມການສັນຈອນ. ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກມີສິດເໜືອກວ່າລະບົບສັນຍານຈະລາຈອນ.

ເມື່ອເຫັນໄຟສັນຍານ ສີເຫຼືອງ ຫຼື ການສັນຍານຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນ ຢູ່ທາງຄົບ, ທາງແຍກ ຜູ້ຂັບຂີ່ ຕ້ອງຜ່ອນຄວາມໄວລົງ ແລະ ຢຸດລົດຢູ່ຕໍ່ໜ້າເສັ້ນຢຸດ, ຖ້າຜູ້ຂັບຂີ່ກາຍເສັ້ນຢຸດໄປແລ້ວ ໃຫ້ສືບຕໍ່ໄປໄດ້ ດ້ວຍຄວາມລະມັດລະວັງ.

ຖ້າບໍ່ມີເສັ້ນຢຸດ ຜູ້ຂັບຂີ່ ຕ້ອງຢຸດຢູ່ກ່ອນແລວຂອບທາງທີ່ຈະຕັດກັບທິດທາງການສັນຈອນຂອງຄົນ ປະມານ ໜຶ່ງ ແມັດ ຫ້າສິບ ຊັງຕີແມັດ ແລະ ບໍ່ໃຫ້ກີດຂວາງການສັນຈອນຂອງຄົນຍ່າງ.

### ມາດຕາ 64 ການຄວບຄຸມໄຟສັນຍານຈະລາຈອນຂອງເຈົ້າໜ້າທີ່

ເມື່ອເຫັນໄຟສັນຍານສີແດງ ຜູ້ຂັບຂີ່ຕ້ອງຢຸດລົດຢູ່ໜ້າເສັ້ນຢຸດ, ຖ້າບໍ່ມີເສັ້ນຢຸດໃຫ້ປະຕິບັດ ດັ່ງນີ້:

1. ສຳລັບບ່ອນທາງຄົບ, ທາງແຍກ ໃຫ້ຢຸດຢູ່ກ່ອນແລວຂອບທາງ ທີ່ຈະຕັດກັບທິດທາງການສັນຈອນຂອງຄົນ ປະມານ ໜຶ່ງ ແມັດ ຫ້າສິບ ຊັງຕີແມັດ ແລະ ບໍ່ໃຫ້ກີດຂວາງການສັນຈອນຂອງຄົນຍ່າງ;

2. ສຳລັບບ່ອນທີ່ບໍ່ມີທາງຄົບ, ທາງແຍກ, ໃນເຂດສະຖານການສຶກສາ, ໂຮງໝໍ, ຊຸມຊົນ, ສະຖານີລົດຂົນສົ່ງຜູ້ໂດຍສານ, ຕະຫຼາດ ແລະ ສະຖານທີ່ອື່ນ ຜູ້ຂັບຂີ່ ຕ້ອງຢຸດຢູ່ຕໍ່ໜ້າໄຟສັນຍານ ຈົນກວ່າມີໄຟສັນຍານສີຂຽວ ຈຶ່ງໄປໄດ້ ຫຼື ປະຕິບັດຕາມການຄວບຄຸມຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນ ແລະ ຕ້ອງບໍ່ກີດຂວາງການສັນຈອນຂອງຄົນຍ່າງ ຫຼື ຍານພາຫະນະທີ່ສວນທາງກັນ.

## ໝວດທີ 3
## ສັນຍານເຕືອນເຫດສຸກເສີນ

### ມາດຕາ 65 ປະເພດສັນຍານເຕືອນເຫດສຸກເສີນ

ສັນຍານເຕືອນເຫດສຸກເສີນ ມີ ດັ່ງນີ້:

1. ສັນຍານດ້ວຍອຸປະກອນ, ເຄື່ອງໝາຍ ແລະ ປ້າຍສັນຍານ;
2. ໄຟສັນຍານສຸກເສີນຂອງລົດ;
3. ການໃຫ້ສັນຍານຂອງເຈົ້າໜ້າທີ່ ຫຼື ບຸກຄົນ.

**ມາດຕາ 66 ການໃຫ້ສັນຍານດ້ວຍອຸປະກອນ, ເຄື່ອງໝາຍ ແລະ ປ້າຍສັນຍານ**

ຜູ້ຂັບຂີ່ ຕ້ອງໃຫ້ສັນຍານດ້ວຍ ອຸປະກອນ, ເຄື່ອງໝາຍ ແລະ ປ້າຍສັນຍານ ໃນກໍລະນີ ດັ່ງນີ້:

1. ນຳໃຊ້ສັນຍານໄຟສຸກເສີນ ແລະ ປ້າຍສາມຫຼ່ຽມເຕືອນເຫດສຸກເສີນພ້ອມກັນ ໃນກໍລະນີເກີດອຸບປະຕິເຫດ ຫຼື ຂັດຂ້ອງທາງດ້ານເຕັກນິກ;

2. ມີຄວາມຈຳເປັນຕ້ອງຈອດລົດຢູ່ບ່ອນຫ້າມຈອດ ຫຼື ບ່ອນທີ່ມີການແນມເຫັນຈຳກັດ.

ການວາງປ້າຍສາມຫຼ່ຽມເຕືອນເຫດສຸກເສີນ ຕ້ອງຫ່າງຈາກລົດຢ່າງໜ້ອຍ ສິບຫ້າ ແມັດ ສຳລັບຖະໜົນໃນຕົວເມືອງ ແລະ ສາມສິບ ແມັດ ສຳລັບທາງຫຼວງນອກຕົວເມືອງ.

**ມາດຕາ 67 ການນຳໃຊ້ໄຟສັນຍານສຸກເສີນຂອງລົດ**

ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນໃນກໍລະນີ ດັ່ງນີ້:

1. ເກີດອຸບປະຕິເຫດ;

2. ຈຳເປັນຕ້ອງຈອດລົດຢູ່ບ່ອນຫ້າມຈອດ ໃນກໍລະນີຈຳເປັນຕ້ອງໄດ້ຈັດລະບຽບເຄື່ອງຂອງ ທີ່ບັນທຸກມາ, ລົດເກີດຂັດຂ້ອງທາງດ້ານເຕັກນິກ ແລະ ຜູ້ຂັບຂີ່ເຈັບປ່ວຍກະທັນຫັນ;

3. ຢຸດລົດຍ້ອນຕາພ່າງຈາກແສງໄຟລົດສວນທາງມາ;

4. ເວລາລົດແກ່ກັນ, ຄັນທີ່ຖືກແກ່ໃຫ້ເປີດໄຟສັນຍານສຸກເສີນ;

5. ເວລາເອົາເດັກນ້ອຍ ຂຶ້ນ, ລົງລົດ ສຳລັບລົດຮັບສົ່ງເດັກນ້ອຍນັກຮຽນ.

ນອກຈາກນີ້ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນ ເພື່ອເຕືອນໃຫ້ຜູ້ຂັບຂີ່ອື່ນມີສະຕິລະວັງຕົວ ເມື່ອມີສະພາບອັນຕະລາຍ ທີ່ອາດມີຜົນກະທົບຕໍ່ຍານພາຫະນະຂອງບຸກຄົນອື່ນ.

**ມາດຕາ 68 ການປະກອບອຸບປະກອນ, ເຄື່ອງໝາຍ ແລະ ປ້າຍສັນຍານ**

ລົດສີ່ລໍ້ທຸກປະເພດ ຕ້ອງມີປ້າຍສາມຫຼ່ຽມສະທ້ອນແສງຕິດລົດໄວ້ ສອງ ອັນ, ສຳລັບລົດ ຫົກລໍ້ ຂຶ້ນໄປຕ້ອງມີຈວຍຢາງສະທ້ອນແສງ ຈຳນວນ ສອງ ອັນ ເພື່ອນຳໃຊ້ເຕືອນ ແລະ ປ້ອງກັນຄວາມປອດໄພ ໃນເວລາລົດຕິດຄັດ, ເກີດອຸບປະຕິເຫດ, ເກີດການຄັດຂ້ອງທາງດ້ານເຕັກນິກຕ່າງໆ.

**ມາດຕາ 69 ການເຕືອນເຫດສຸກເສີນສຳລັບລົດແກ່ກັນ**

ສຳລັບລົດແກ່ກັນ, ລົດທີ່ຖືກແກ່ ຕ້ອງເປີດໄຟສັນຍານເຕືອນອັນຕະລາຍ, ໃນກໍລະນີໄຟສັນຍານເຕືອນອັນຕະລາຍຫາກໃຊ້ບໍ່ໄດ້ ໃຫ້ຕິດປ້າຍສາມຫຼ່ຽມເຕືອນອັນຕະລາຍ ໃສ່ທ້າຍລົດໄວ້.

## ໝວດທີ 4
## ການນຳໃຊ້ສັນຍານເຕືອນ

**ມາດຕາ 70 ການນຳໃຊ້ໄຟສັນຍານເລີ່ມຕົ້ນເຄື່ອນລົດ ແລະ ການປ່ຽນທິດທາງຂອງລົດ**

ກ່ອນເລີ່ມ ການສັນຈອນ, ປ່ຽນທິດທາງເດີນ, ລ້ຽວຂວາ, ລ້ຽວຊ້າຍ, ລ້ຽວກັບ ແລະ ຢຸດລົດ ຜູ້ຂັບຂີ່ຕ້ອງເປີດໄຟສັນຍານລ້ຽວ ໃຫ້ສອດຄ່ອງກັບທິດທາງຈະໄປ ຫຼື ຢຸດລົດ. ໃນກໍລະນີໄຟສັນຍານບໍ່ມີ ຫຼື ໃຊ້ບໍ່ໄດ້ ໃຫ້ສັນຍານດ້ວຍມື ກ່ອນຈະລ້ຽວ ຫຼື ປ່ຽນທິດທາງ. ເມື່ອເປີດໄຟສັນຍານ ຫຼື ໃຫ້ສັນຍານດ້ວຍມືແລ້ວ ຕ້ອງໃຫ້ແນ່ໃຈວ່າມີຄວາມປອດໄພ, ບໍ່ເປັນອັນຕະລາຍ ແລະ ບໍ່ກີດຂວາງການສັນຈອນຂອງລົດຄັນອື່ນ ແລ້ວຈຶ່ງປ່ຽນທິດເດີນທາງ ຫຼື ຢຸດລົດໄດ້.

**ມາດຕາ 71 ການເລີ່ມອອກລົດ ແລະ ລ້ຽວລົດ**

ກ່ອນເລີ່ມອອກລົດ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານ ຫຼື ໃຫ້ສັນຍານດ້ວຍມື ຢ່າງໜ້ອຍ ຫ້າ ວິນາທີ ແລະ ເມື່ອລົດອອກສູ່ທາງການສັນຈອນແລ້ວ ຕ້ອງປິດໄຟສັນຍານ.

ກ່ອນລ້ຽວລົດ ຜູ້ຂັບຂີ່ຕ້ອງເປີດໄຟສັນຍານ ຫຼື ໃຫ້ສັນຍານດ້ວຍມືລ່ວງໜ້າ ຢ່າງໜ້ອຍ ໃນໄລຍະທາງ ສາມສິບ ແມັດ ກ່ອນເຖິງຈຸດລ້ຽວ ແລະ ຕ້ອງປິດໄຟທັນທີ ເມື່ອສິ້ນສຸດການລ້ຽວ.

ການເປີດໄຟລ້ຽວ ຫຼື ໃຫ້ສັນຍານລ້ຽວດ້ວຍມື ຕ້ອງໃຫ້ຖືກຕ້ອງ ແລະ ຊັດເຈນ ຕາມທິດທາງທີ່ຈະໄປ ດ້ວຍຄວາມລະມັດລະວັງ ເພື່ອບໍ່ເຮັດໃຫ້ຜູ້ຂັບຂີ່ອື່ນເກີດຄວາມສັບສົນ.

**ມາດຕາ 72 ການອອກລົດເຂົ້າສູ່ທາງ**

ການຂັບລົດອອກຈາກບ່ອນຈອດລົດ ເປັນຕົ້ນ ປໍ້ານໍ້າມັນ, ສໍານັກງານອົງການ, ເຮືອນ, ອາຄານ ເພື່ອເຂົ້າສູ່ທາງໃຫຍ່ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານລ້ຽວຕາມທິດທາງທີ່ຈະໄປ ແລະ ປ່ອຍໃຫ້ລົດ, ຄົນຍ່າງ ທີ່ສັນຈອນຕາມທິດທາງນັ້ນໄປກ່ອນ.

**ມາດຕາ 73 ການປ່ຽນຊ່ອງຈະລາຈອນ**

ກ່ອນຈະປ່ຽນຊ່ອງຈະລາຈອນ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານ ແລະ ປ່ອຍໃຫ້ລົດທີ່ກໍາລັງແລ່ນຕາມຊ່ອງຈະລາຈອນດ້ານຂ້າງຂອງຕົນ ກາຍໄປກ່ອນ. ໃນກໍລະນີລົດປ່ຽນຊ່ອງຈະລາຈອນສະຫຼັບກັນ ຕ້ອງປ່ອຍໃຫ້ລົດທີ່ຢູ່ກໍ້າຂວາ ປ່ຽນໄປກ່ອນ.

**ມາດຕາ 74 ການລ້ຽວລົດ**

ກ່ອນຈະລ້ຽວລົດໄປກໍ້າຂວາ ຜູ້ຂັບຂີ່ ຕ້ອງແນບລົດເຂົ້າແຄມທາງກໍ້າຂວາ ຫຼື ຂະໜານກັບຂອບທາງ; ການລ້ຽວຂວາສູ່ທາງໃຫຍ່ ຕ້ອງໃຫ້ຢູ່ໃນຊ່ອງຈະລາຈອນກໍ້າຂວາ ຫຼື ແນບຂວາ ເມື່ອເຂົ້າສູ່ການສັນຈອນປົກກະຕິແລ້ວ ຈຶ່ງສາມາດປ່ຽນຊ່ອງຈະລາຈອນໄດ້.

ກ່ອນຈະລ້ຽວລົດໄປກໍ້າຊ້າຍ ຫຼື ລ້ຽວກັບ ຜູ້ຂັບຂີ່ ຕ້ອງແນບລົດເຂົ້າຫາເສັ້ນແບ່ງໃຈກາງທາງ ຫຼື ດອນກາງ ກ່ອນຈະເຖິງບ່ອນລ້ຽວ ປະມານ ໜຶ່ງຮ້ອຍຫ້າສິບ ແມັດ ຫຼື ຕາມເສັ້ນແບ່ງຊ່ອງຈະລາຈອນປົກກະຕິ, ຕາມທີ່ໄດ້ກໍານົດໄວ້ ຍົກເວັ້ນບ່ອນທາງຄົບ, ທາງແຍກ ທີ່ເປັນວົງວຽນ.

ຜູ້ຂັບຂີ່ ທີ່ຕ້ອງການລ້ຽວຊ້າຍເຂົ້າສູ່ທາງສັນຈອນຂ້າງໜ້າ ຕ້ອງລະວັງບໍ່ໃຫ້ລ້ຽວຕັດແລວທາງການສັນຈອນຂອງລົດ ທີ່ມາທາງກໍ້າຊ້າຍ, ໃຫ້ລ້ຽວໂຄ້ງອ້ອມຈຸດໃຈກາງຂອງທາງແຍກ.

**ມາດຕາ 75 ການລ້ຽວກັບຂອງລົດຂົນສົ່ງຜູ້ໂດຍສານ, ສິນຄ້າ ເກີນຂະໜາດ**

ລົດທີ່ບໍ່ສາມາດລ້ຽວໄດ້ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 74 ຂອງດໍາລັດສະບັບນີ້ ຍ້ອນຄວາມໃຫຍ່, ຄວາມຍາວ ຫຼື ເຫດຜົນອື່ນ ອະນຸຍາດໃຫ້ລ້ຽວກັບຈາກຊ່ອງຈະລາຈອນອື່ນຕາມຄວາມເໝາະສົມ ແຕ່ຕ້ອງຮັບປະກັນໃຫ້ມີຄວາມປອດໄພ ແລະ ບໍ່ກີດຂວາງການສັນຈອນຂອງລົດຄັນອື່ນ.

**ມາດຕາ 76 ການລ້ຽວລົດຢູ່ນອກເຂດທາງແຍກ**

ຜູ້ຂັບຂີ່ ຕ້ອງການລ້ຽວຊ້າຍ ຫຼື ລ້ຽວກັບ ຢູ່ນອກເຂດທາງແຍກ ຕ້ອງປ່ອຍທາງໃຫ້ລົດທີ່ສວນທາງມາໄປກ່ອນ, ຖ້າຈະລ້ຽວກັບຢູ່ນອກເຂດທາງແຍກ ຈາກຊ່ອງຈະລາຈອນຊ້າຍສຸດທີ່ມີໜ້າທາງບໍ່ກວ້າງພຽງພໍ ສາມາດໃຫ້ລ້ຽວກັບຈາກແຄມທາງກໍ້າຂວາສຸດ. ໃນກໍລະນີຂອງການລ້ຽວດັ່ງກ່າວ ຜູ້ຂັບຂີ່ ຕ້ອງປ່ອຍໃຫ້ລົດທີ່ແລ່ນຕາມຫຼັງ ແລະ ລົດທີ່ສວນທາງມາ ໄປກ່ອນ ຈຶ່ງລ້ຽວໃຫ້ສໍາເລັດບາດດຽວ.

ໃນກໍລະນີທີ່ມີລົດສອງຄັນມາຈາກທິດທາງຕ່າງກັນ, ຈະລ້ຽວຊ້າຍຄືກັນ ແລະ ທິດທາງເດີນລົດ ຕັດກັນນັ້ນ ໃຫ້ລົດທີ່ຢູ່ທາງກໍ້າຂວາ ມີສິດໄປກ່ອນ.

**ມາດຕາ 77 ຊ່ອງຈະລາຈອນສໍາລັບ ຜ່ອນ ແລະ ເພີ່ມ ຄວາມໄວ**

ຜູ້ຂັບຂີ່ ທີ່ມີຈຸດປະສົງຈະລ້ຽວຂວາ ຢູ່ບ່ອນທາງແຍກທີ່ຢູ່ທາງໜ້າ ຕ້ອງເຂົ້າສູ່ຊ່ອງຈະລາຈອນສະເພາະ ທີ່ກໍານົດໄວ້ ເພື່ອຫຼຸດຜ່ອນຄວາມໄວລົງແລ້ວ ຈຶ່ງລ້ຽວຂວາໄດ້.

ຜູ້ຂັບຂີ່ ທີ່ມີຈຸດປະສົງຈະເຂົ້າສູ່ຊ່ອງຈະລາຈອນທີ່ໃຊ້ຄວາມໄວສູງ ຕ້ອງເຂົ້າຊ່ອງຈະລາຈອນສະເພາະ ທີ່ກໍານົດໄວ້ແລ້ວ ຈຶ່ງເພີ່ມຄວາມໄວໃຫ້ສູງຂຶ້ນ ທຽບເທົ່າກັບຄວາມໄວຂອງລົດ ທີ່ແລ່ນຢູ່ຊ່ອງຈະລາຈອນ ປົກກະຕິ ທີ່ຢູ່ກໍ້າຊ້າຍຂອງຕົນ ແລະ ຕ້ອງປ່ອຍທາງໃຫ້ລົດທີ່ແລ່ນຕາມຊ່ອງຈະລາຈອນ ທີ່ຕົນຈະແລ່ນເຂົ້ານັ້ນ ໄປກ່ອນ.

**ມາດຕາ 78 ບ່ອນທີ່ບໍ່ອະນຸຍາດໃຫ້ລົດລ້ຽວກັບ**

ບ່ອນທີ່ບໍ່ອະນຸຍາດໃຫ້ລົດລ້ຽວກັບ ມີ ດັ່ງນີ້:

1. ທາງມ້າລາຍ;
2. ໃນອຸໂມງ;
3. ເທິງຂົວ, ກ້ອງຂົວ; .
4. ບ່ອນຂ້າມທາງລົດໄຟ;
5. ບ່ອນທີ່ບໍ່ສາມາດແນມເຫັນໄດ້ດີ ໃນໄລຍະທາງໜ້ອຍກວ່າ ໜຶ່ງຮ້ອຍ ແມັດ;
6. ບ່ອນຢຸດລົດປະຈໍາທາງ;
7. ທາງໂຄ້ງ, ທາງຄ້ອຍ, ທາງຊັນ, ທາງແຄບ;
8. ບ່ອນທີ່ມີປ້າຍຫ້າມລ້ຽວກັບ.

**ມາດຕາ 79 ການຖອຍລົດ**

ຜູ້ຂັບຂີ່ ທີ່ມີຈຸດປະສົງຖອຍລົດອອກຈາກ ເຮືອນ, ອາຄານ ຫຼື ສະຖານທີ່ໃດໜຶ່ງ ເພື່ອເຂົ້າສູ່ທາງ ຕ້ອງມີ ຜູ້ຊ່ວຍສັນຍານໃນເວລາຖອຍ ເພື່ອຮັບປະກັນຄວາມປອດໄພ ແລະ ບໍ່ໃຫ້ກີດຂວາງການສັນຈອນຂອງລົດຄັນອື່ນ.

ບໍ່ອະນຸຍາດ ໃຫ້ຜູ້ຂັບຂີ່ ຖອຍລົດ ຢູ່ບ່ອນທາງແຍກ ແລະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 78 ຂອງ ກົດໝາຍສະບັບນີ້.

## ພາກທີ V
## ລະບົບ ໄຟສະຫວ່າງ, ໄຟສັນຍານ ແລະ ສັນຍານສຽງແກ ຂອງລົດ

**ມາດຕາ 80 ລະບົບໄຟສະຫວ່າງຂອງລົດ**

ໄຟຕາລົດ ປະກອບມີ ດັ່ງນີ້:

1. ໄຟຕາໜ້າ ສໍາລັບເບິ່ງທາງ;
2. ໄຟສັນຍານ ປະກອບດ້ວຍ ສັນຍານລ້ຽວ ແລະ ສັນຍານສຸກເສີນ;
3. ໄຟຫ້າມລໍ້;
4. ໄຟຕາຫຼີ່;
5. ໄຟເບິ່ງປ້າຍທະບຽນລົດ;

6. ໄຟຕາຫຼັງ ຫຼື ໄຟຖອຍຫຼັງ;

7. ໄຟຕາເພີ່ມ.

**ມາດຕາ 81 ໄຟຕາໜ້າ ສຳລັບເບື້ອງທາງ**

ລັກສະນະເຕັກນິກ ຂອງໄຟຕາລົດ ມີແສງສະຫວ່າງເປັນສີຂາວ ຫຼື ສີເຫຼືອງ, ຄວາມເຂັ້ມຂອງແສງສະຫວ່າງ ຖືກຕ້ອງຕາມມາດຕະຖານຂອງໂຮງງານຜະລິດ ແລະ ຕາມມາດຕະຖານຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ໄຟຕາໜ້າສຳລັບເບື້ອງທາງ ປະກອບມີ ໄຟຕາຕ່ຳ ແລະ ໄຟຕາສູງ ຊຶ່ງຕ້ອງໃຊ້ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຊ້ໄຟຕາຕ່ຳ ໃນເວລາສັນຈອນໃນຍາມກາງຄືນ ຢູ່ຕາມທາງຫຼວງ ແລະ ໃຊ້ໃນເວລາກາງເວັນ ໃນກໍລະນີອາກາດມືດມົວ, ມີໝອກໜາ, ຄວັນ, ຝົນຕົກແຮງ, ທາງມີຂີ້ຝຸ່ນປິວຂຶ້ນຫຼາຍ, ລົດແລ່ນເປັນຂະບວນ, ລົດຂົນສົ່ງ ວັດຖຸອັນຕະລາຍ, ສິນຄ້າ, ເຄື່ອງຂອງທີ່ມີ ນ້ຳໜັກເກີນ ແລະ ຂະໜາດໃຫຍ່, ລົດຮັບ, ສົ່ງ ເດັກນ້ອຍ, ລົດແກ່ກັນ, ລົດສຸກເສີນ ແລະ ນຳສົ່ງຄົນເຈັບ.

2. ໃຊ້ໄຟຕາສູງ ໃນເວລາສັນຈອນໃນຍາມກາງຄືນ ຢູ່ທາງຫຼວງນອກຕົວເມືອງ, ໃນເວລາທີ່ບໍ່ໄດ້ແລ່ນຕາມຫຼັງລົດຄັນອື່ນ ແລະ ບໍ່ມີລົດຄັນອື່ນແລ່ນສວນທາງມາ, ບໍ່ອະນຸຍາດໃຫ້ໃຊ້ໄຟຕາສູງໃນຕົວເມືອງ.

ໃນເມື່ອມີລົດສວນທາງມາໃນໄລຍະບໍ່ຫຼຸດ ໜຶ່ງຮ້ອຍຫ້າສິບ ແມັດ ຫຼື ໃນເມື່ອລົດສວນທາງມາ ໃຫ້ສັນຍານເຕືອນດ້ວຍການກົດໄຟຕາຕ່ຳ, ຕາສູງ ສະຫຼັບກັນ ແລະ ເວລາແລ່ນຕາມຫຼັງລົດຄັນອື່ນ ຕ້ອງປ່ຽນເປັນໄຟຕາຕ່ຳ. ຖ້າເກີດມີອາການເຫຼື້ອມຕາ ຫຼື ຟາງຕາ ຈາກແສງໄຟລົດທີ່ສວນທາງມາ ຜູ້ຂັບຂີ່ ຕ້ອງເປີດໄຟສັນຍານສຸກເສີນ, ຮັກສາແລວທາງເດີມ, ຜ່ອນຄວາມໄວ ແລະ ຖ້າຈຳເປັນກໍໃຫ້ຢຸດລົດ.

ສຳລັບຍານພາຫະນະ ທີ່ມີລະບົບໄຟຕາເປີດອັດຕະໂນມັດ ສາມາດນຳໃຊ້ໄດ້ ໃນການສັນຈອນຕາມທາງຫຼວງ.

**ມາດຕາ 82 ໄຟສັນຍານ**

ໄຟສັນຍານມີແສງສະຫວ່າງກະພິບເປັນສີເຫຼືອງພ້ອມກັນທາງດ້ານໜ້າ ແລະ ດ້ານຫຼັງ ຊຶ່ງປະກອບດ້ວຍໄຟສັນຍານລ້ຽວ ເມື່ອໄຟສັນຍານທາງດ້ານໜ້າໜຶ່ງດອກ ແລະ ດ້ານຫຼັງໜຶ່ງດອກ ເບື້ອງໃດເບື້ອງໜຶ່ງຮຸ່ງກະພິບພ້ອມກັນ ແລະ ສຸກເສີນ ເມື່ອໄຟສັນຍານທັງ ສີ່ ດອກ ດ້ານໜ້າ ສອງ ແລະ ດ້ານຫຼັງ ສອງ ດອກ ຮຸ່ງກະພິບພ້ອມກັນ.

ການນຳໃຊ້ໄຟສັນຍານລ້ຽວ ໃຫ້ໃຊ້ໃນເວລາ ຈະລ້ຽວ ຫຼື ປ່ຽນທິດທາງ, ເວລາຈະຊິງຂຶ້ນໜ້າ, ອອກລົດ ຫຼື ຈອດລົດ.

ການນຳໃຊ້ໄຟສັນຍານສຸກເສີນ ໃຫ້ໃຊ້ໄດ້ສະເພາະໃນກໍລະນີມີເຫດສຸກເສີນ ຕາມທີ່ກຳນົດໄວ້ໃນມາດຕາ 67 ຂອງດຳລັດສະບັບນີ້.

**ມາດຕາ 83 ໄຟຫ້າມລໍ້**

ໄຟຫ້າມລໍ້ ຕ້ອງມີແສງສະຫວ່າງເປັນສີແດງ ເທົ່ານັ້ນ ແລະ ໃຊ້ໃນເວລາຈະຢຸດລົດ ຫຼື ຈະຜ່ອນຄວາມໄວ ເພື່ອເຕືອນໃຫ້ຜູ້ຂັບຂີ່ທີ່ແລ່ນມາຕາມຫຼັງຮູ້ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ໄຟຫ້າມລໍ້ຮຸ່ງແບບກະພິບ.

**ມາດຕາ 84 ໄຟຕາຫຼີ່**

ໄຟຕາຫຼີ່ ໃຫ້ດ້ານໜ້າມີສະແສງຫວ່າງເປັນສີຂາວ ຫຼື ສີເຫຼືອງ, ໃຫ້ດ້ານຫຼັງມີແສງສະຫວ່າງເປັນສີແດງ ແລະ ໃຊ້ໃນເວລາຈອດລົດຢູ່ຕາມແຄມທາງ ໃນຍາມກາງຄືນ ແລະ ຍາມກາງເວັນໃນເວລາທີ່ມີອາກາດມືດມົວ.

**ມາດຕາ 85 ໄຟເບືອງປ້າຍທະບຽນລົດ**

ໄຟເບືອງປ້າຍທະບຽນລົດ ທີ່ຢູ່ດ້ານຫຼັງ ຕ້ອງມີແສງສະຫວ່າງເປັນສີຂາວ ແລະ ໃຊ້ເພື່ອເບືອງປ້າຍທະບຽນລົດ ເວລາຂັບລົດໃນເວລາຄໍ່າມືດ ຫຼື ອາກາດມືດມົວ.

**ມາດຕາ 86 ໄຟຕາເພີ່ມ**

ໄຟຕາເພີ່ມ ປະກອບມີ ດັ່ງນີ້:

1. ໄຟຕັດໝອກ ມີແສງສະຫວ່າງເປັນສີເຫຼືອງ ໃຫ້ນໍາໃຊ້ສໍາລັບເບືອງທາງ ໃນຍາມມີນໍ້າໝອກໜາ ຕົກໜັກ ຫຼື ມີອາກາດມືດມົວ;

2. ໄຟສະປອດໄລ ມີແສງສະຫວ່າງເປັນສີຂາວ, ເລົາແສງຈ້ອມກວ່າໄຟຕາໜ້າ ແລະ ອະນຸຍາດໃຫ້ນໍາໃຊ້ສະເພາະໃນຍາມກາງຄືນ ຢູ່ຕາມທາງນ້ອຍເທົ່ານັ້ນ;

3. ໄຟແອວອີດີ (LED) ທີ່ປະກອບມານໍາລົດຈາກໂຮງງານຜະລິດ ໃຫ້ນໍາໃຊ້ໄດ້ບໍ່ເກີນສອງດວງ ໃນລະດັບຄວາມສູງບໍ່ເກີນ ໜຶ່ງ ແມັດ ສາມສິບຫ້າ ຊັງຕີແມັດ ແລະ ຕໍ່າສຸດບໍ່ຫຼຸດ ຊາວຫ້າ ຊັງຕີແມັດ ຈາກໜ້າທາງ, ໄລຍະຫ່າງຂອງໄຟແຕ່ລະດວງຈາກຂ້າງລົດແຕ່ລະດ້ານ ບໍ່ເກີນ ສີ່ສິບ ຊັງຕີແມັດ;

4. ໄຟເຄື່ອງໝາຍລົດລາກ, ລົດພ່ວງ ດ້ວຍດອກໄຟທີ່ຢູ່ເທິງຫຼັງຄາຫ້ອງຂັບຂີ່ຂອງລົດລາກ ແມ່ນເຄື່ອງໝາຍສະເພາະຂອງລົດລາກ ຊຶ່ງຕ້ອງໄຕ້ໃນຍາມກາງຄືນ, ມີອາກາດມືດມົວ ຫຼື ຈອດຊົ່ວຄາວ.

**ມາດຕາ 87 ໄຟຕາຫຼັງ ຫຼື ໄຟຖອຍຫຼັງ**

ໄຟຕາຫຼັງ ຫຼື ໄຟຖອຍຫຼັງ ມີແສງສະຫວ່າງເປັນສີຂາວ ແລະ ນໍາໃຊ້ໃນເວລາຂັບລົດຖອຍຫຼັງ.

**ມາດຕາ 88 ການນໍາໃຊ້ສັນຍານສຽງແກລົດ**

ຜູ້ຂັບຂີ່ ຕ້ອງນໍາໃຊ້ສັນຍານສຽງແກໃນກໍລະນີ ດັ່ງນີ້:

1. ເຕືອນໃຫ້ຜູ້ຂັບຂີ່ອື່ນ ໃນເວລາຂໍຊິງຂຶ້ນໜ້າເມື່ອສັນຈອນຢູ່ນອກເຂດຊຸມຊົນ;

2. ໃນກໍລະນີມີຄວາມຈໍາເປັນ ເພື່ອຫຼີກເວັ້ນການເກີດອຸບປະຕິເຫດ.

ການເຕືອນດ້ວຍສຽງແກ ເພື່ອຂໍຊິງຂຶ້ນໜ້າ ໃຫ້ໃຊ້ສຽງສັ້ນ ຫຼື ການກະພິບໄຟຕາຕໍ່າຕາສູງສະຫຼັບກັນ ແລະ ບໍ່ອະນຸຍາດໃຫ້ໃຊ້ສັນຍານແກໃນເວລາຄໍ່າມືດ, ໃນເຂດສະຖານການສຶກສາ, ໂຮງໝໍ ແລະ ສັນຍານແກທີ່ມີຫຼາຍໂທນສຽງ. ສໍາລັບແກລົມ ແມ່ນບໍ່ອະນຸຍາດໃຫ້ນໍາໃຊ້.

## ພາກທີ VI
## ການຂົນສົ່ງ
### ໝວດທີ 1
### ການຂົນສົ່ງຜູ້ໂດຍສານ

**ມາດຕາ 89 ຜູ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ**

ຜູ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ ຕ້ອງມີໃບຂັບຂີ່ຍານພາຫະນະ ດັ່ງນີ້:

1. D ໃຫ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ ປະເພດ ສີ່ ລໍ້ຂຶ້ນໄປ, ບໍ່ເກີນ ສິບຫ້າ ບ່ອນນັ່ງ;

2. D1 ໃຫ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ ແຕ່ ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ;

3. D2 ໃຫ້ຂັບຂີ່ລົດຂົນສົ່ງຜູ້ໂດຍສານ ແຕ່ ສາມສິບຫົກ ບ່ອນນັ່ງຂຶ້ນໄປ.

## ມາດຕາ 90 ການດັດແປງລົດກະບະ ເພື່ອຮັບໃຊ້ການຂົນສົ່ງຜູ້ໂດຍສານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດັດແປງລົດກະບະ ຫຼື ລົດບັນທຸກ ຂອງຕົນ ເພື່ອຂົນສົ່ງຜູ້ໂດຍສານ ແລະ ຂົນສົ່ງສະເພາະ ຕ້ອງປະຕິບັດ ດັ່ງນີ້:

1. ຂໍອະນຸຍາດນຳ ຂະແໜງການໂຍທາທິການ ແລະ ຂົນສົ່ງ;
2. ປະຕິບັດຕາມມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ;
3. ມີຕັ່ງນັ່ງໃຫ້ພຽງພໍ ສຳລັບຜູ້ໂດຍສານ.

ຖ້າປະຕິບັດຕາມເງື່ອນໄຂເທິງນີ້ ຂະແໜງການໂຍທາທິການ ແລະ ຂົນສົ່ງ ຈຶ່ງຈະອອກອະນຸຍາດໃຫ້ນຳໃຊ້ໄດ້. ຜູ້ໂດຍສານຢູ່ເທິງກະບະ ຫຼື ລົດບັນທຸກ ລະຫວ່າງ ເມືອງຕໍ່ເມືອງ, ຕາມສາຍທາງ ທ່ອງທ່ຽວ ແລະ ການຂົນສົ່ງເດັກນ້ອຍ ຕ້ອງບໍ່ໃຫ້ເກີນຈຳນວນບ່ອນນັ່ງທີ່ກຳນົດໄວ້.

## ມາດຕາ 91 ຄວາມຮັບຜິດຊອບຂອງຜູ້ຂົນສົ່ງຜູ້ໂດຍສານ

ຜູ້ຂົນສົ່ງຜູ້ໂດຍສານ ຕ້ອງແນະນຳລະບຽບການ ກ່ຽວກັບການເດີນທາງໃຫ້ແກ່ຜູ້ໂດຍສານ ເປັນຕົ້ນ ການຂຶ້ນ, ລົງລົດ, ການຮັກສາຄວາມສະອາດ, ຄວາມສະຫງົບ. ກ່ອນຈະອອກລົດ ຜູ້ຂົນສົ່ງຜູ້ໂດຍສານ ຕ້ອງກວດກາຄວາມເປັນລະບຽບຮຽບຮ້ອຍ ຂອງຜູ້ໂດຍສານເສຍກ່ອນ ເພື່ອຮັບປະກັນຄວາມປອດໄພແລ້ວຈຶ່ງເຄື່ອນລົດອອກ.

ໃນເວລາຮັບຜູ້ໂດຍສານຂຶ້ນ, ລົງ ຕ້ອງໃຫ້ລົດຢຸດຮຽບຮ້ອຍເສຍກ່ອນ. ຜູ້ຂົນສົ່ງຜູ້ໂດຍສານ ຕ້ອງປົກປັກຮັກສາເຄື່ອງຂອງຜູ້ໂດຍສານ ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ໃຫ້ຢູ່ໃນສະພາບເດີມ. ໃນກໍລະນີມີຄວາມເສຍຫາຍເກີດຂຶ້ນ ຜູ້ຂົນສົ່ງຜູ້ໂດຍສານ ຕ້ອງຮັບຜິດຊອບໃຊ້ແທນຄືນຕໍ່ຄ່າເສຍຫາຍດັ່ງກ່າວ.

## ມາດຕາ 92 ລົດຂົນສົ່ງ ເດັກນ້ອຍ, ນັກຮຽນ

ລົດຂົນສົ່ງ ເດັກນ້ອຍ, ນັກຮຽນ ຕ້ອງແມ່ນ ລົດຕູ້ ຫຼື ລົດຂົນສົ່ງຜູ້ໂດຍສານ ທີ່ຮັບປະກັນຄວາມປອດໄພສູງ. ໃນກໍລະນີເດັກນ້ອຍທີ່ມີອາຍຸຕ່ຳກວ່າ ສິບສອງ ປີ ທີ່ບໍ່ສາມາດໃສ່ສາຍຮັດນິລະໄພໄດ້ ຕ້ອງມີເບາະນັ່ງເສີມສຳລັບເດັກນ້ອຍ ເພື່ອໃຫ້ສາມາດໃສ່ສາຍຮັດນິລະໄພໄດ້.

ລົດຂົນສົ່ງເດັກນ້ອຍ, ນັກຮຽນ ຕ້ອງໄດ້ຕິດເຄື່ອງໝາຍລະວັງເດັກນ້ອຍ, ນັກຮຽນ ໃສ່ທັງດ້ານໜ້າ ແລະ ດ້ານຫຼັງຂອງລົດ.

ກ່ອນເດັກນ້ອຍ, ນັກຮຽນ ຂຶ້ນ, ລົງ ລົດຂົນສົ່ງ ຜູ້ຂັບຂີ່ ຕ້ອງກວດກາຈຳນວນເດັກນ້ອຍ ແລະ ນັກຮຽນ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ.

## ມາດຕາ 93 ໜ້າທີ່ຂອງຜູ້ໂດຍສານ

ຜູ້ໂດຍສານ ມີໜ້າທີ່ ດັ່ງນີ້:

1. ໃສ່ສາຍຮັດນິລະໄພ;
2. ໃສ່ໝວກກັນກະທົບ ສຳລັບຜູ້ໂດຍສານໄປນຳລົດຈັກ;
3. ຮັກສາຄວາມສະອາດ, ສິ່ງແວດລ້ອມ ແລະ ຄວາມສະຫງົບ;
4. ມີມາລະຍາດທີ່ດີ;
5. ປະຕິບັດຕາມລະບຽບການໂດຍສານ.

ມາດຕາ 94 ຄວາມຮັບຜິດຊອບຂອງຜູ້ໂດຍສານ

ຜູ້ໂດຍສານມີຄວາມຮັບຜິດຊອບ ດັ່ງນີ້:

1. ແຈ້ງເຄື່ອງຂອງທີ່ມີມູນຄ່າສູງ, ວັດຖຸອັນຕະລາຍ, ອາວຸດ;

2. ຈ່າຍຄ່າໂດຍສານ ຍົກເວັ້ນເດັກນ້ອຍຜູ້ທີ່ມີອາຍຸຕໍ່າກວ່າ ຫົກ ປີ ແລະ ຈ່າຍຄ່າເຄື່ອງຂອງທີ່ມີນໍ້າໜັກເກີນກໍານົດ ໃຫ້ແກ່ຜູ້ດໍາເນີນການຂົນສົ່ງ;

3. ຂຶ້ນ, ລົງ ລົດ ໃຫ້ໃຊ້ປະຕູກໍ້າຂວາ ແລະ ເວລາລົດຈອດຄັກແນ່, ຖ້າຫາກວ່າບໍ່ສາມາດຂຶ້ນ, ລົງລົດຈາກກໍ້າຂວາໄດ້ ອະນຸຍາດໃຫ້ລົງກໍ້າຊ້າຍ ແຕ່ຕ້ອງຮັບປະກັນຄວາມປອດໄພ ແລະ ບໍ່ກີດຂວາງການສັນຈອນ.

## ໝວດທີ 2
## ການຂົນສົ່ງສິນຄ້າ

### ມາດຕາ 95 ຜູ້ຂັບຂີ່ລົດຂົນສົ່ງສິນຄ້າ

ຜູ້ຂັບຂີ່ລົດຂົນສົ່ງສິນຄ້າ ຕ້ອງມີໃບຂັບຂີ່ຍານພາຫະນະ ດັ່ງນີ້:

1. C ໃຫ້ຂັບລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມບໍ່ເກີນ 7.500 ກິໂລກຣາມ;

2. C1 ໃຫ້ຂັບລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມ ບໍ່ເກີນ 15.000 ກິໂລກຣາມ;

3. C2 ໃຫ້ຂັບລົດຂົນສົ່ງສິນຄ້າ ທີ່ມີນໍ້າໜັກລວມ ແຕ່ 16.000 ກິໂລກຣາມ ຂຶ້ນໄປ.

### ມາດຕາ 96 ການຂົນສົ່ງສິນຄ້າ

ການຂົນສົ່ງສິນຄ້າ ຕ້ອງປະຕິບັດ ດັ່ງນີ້:

1. ຈັດວາງ, ເກັບມ້ຽນ, ຫຸ້ມຫໍ່ ສິນຄ້າ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ສ້າງອຸປະສັກໃຫ້ແກ່ການຈະລາຈອນ;

2. ບໍ່ໃຫ້ເກີນນໍ້າໜັກເພົາ ທີ່ໂຮງງານຜະລິດກໍານົດ;

3. ບໍ່ປິດບັງໄຟເບື້ອງທາງ, ໄຟສັນຍານ, ໄຟທ້າຍ, ປ້າຍທະບຽນ ແລະ ກີດຂວາງການໃຫ້ສັນຍານດ້ວຍມື;

4. ບໍ່ກໍ່ໃຫ້ເກີດສຽງດັງ, ເກີດຝຸ່ນ ແລະ ບໍ່ສ້າງຄວາມເປື້ອນເປິະ ແກ່ເສັ້ນທາງ ແລະ ສິ່ງແວດລ້ອມ;

5. ບໍ່ປິດບັງການແນມເຫັນຂອງຜູ້ຂັບຂີ່;

6. ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ຜູ້ຂັບຂີ່ ແລະ ບໍ່ທໍາລາຍຄວາມສົມດູນຂອງລົດ;

7. ປະຕິບັດຕາມລະບຽບການ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ກ່ອນຈະອອກເດີນທາງ ຜູ້ຂັບຂີ່ ຕ້ອງກວດກາການບັນທຸກສິນຄ້າ ໃຫ້ຢູ່ໃນສະພາບຮັບປະກັນຄວາມປອດໄພ, ໃນລະຫວ່າງທາງ ຖ້າຫາກສິນຄ້າທີ່ບັນທຸກນັ້ນ ມີຄວາມສ່ຽງທີ່ຈະກໍ່ໃຫ້ເກີດຄວາມອັນຕະລາຍ ຜູ້ຂົນສົ່ງສິນຄ້າຕ້ອງຢຸດລົດ ພ້ອມທັງແກ້ໄຂມ້ຽນມັດຄືນ ເພື່ອຮັບປະກັນຄວາມປອດໄພ.

### ມາດຕາ 97 ການຂົນສົ່ງສິນຄ້າເກີນຂະໜາດ

ສິນຄ້າບັນທຸກທີ່ເກີນຂະໜາດ ອະນຸຍາດໃຫ້ລື່ນອອກຈາກຕົວລົດແຕ່ລະດ້ານ ດັ່ງນີ້:

1. ບໍ່ເກີນ ໜຶ່ງ ແມັດ ສໍາລັບດ້ານໜ້າ;

2. ບໍ່ເກີນ ໜຶ່ງ ແມັດ ສໍາລັບດ້ານຫຼັງ;

3. ບໍ່ເກີນ ຫ້າສິບ ຊັງຕີແມັດ ສໍາລັບດ້ານຂ້າງ;

4. ຄວາມສູງບໍ່ເກີນ ສີ່ ແມັດ ຫ້າສິບ ຊັງຕີແມັດ ຈາກໜ້າທາງສໍາລັບລົດຂົນສົ່ງຂະໜາດໃຫຍ່ ແລະ ບໍ່ເກີນ ຫົກສິບ ຊັງຕີແມັດ ຈາກຫຼັງຄາລົດສໍາລັບລົດຂົນສົ່ງຂະໜາດນ້ອຍ.

ສໍາລັບສິ້ນຂອງສ່ວນທີ່ລື່ນອອກໄປດ້ານຂ້າງ ຖ້າເປັນເວລາຄໍ່າມືດ ຕ້ອງໄຕ້ດອກໄຟໃສ່. ໃນກໍລະນີບໍ່ມີດອກໄຟ ໃຫ້ຢຸດການສັນຈອນ ແລະ ຊອກຫາບ່ອນຈອດທີ່ເໝາະສົມ ແລະ ຮັບປະກັນຄວາມປອດໄພໃນການສັນຈອນ ພ້ອມທັງໃສ່ທຸງສີແດງ ຂະໜາດ ຊາວ ຄູນ ຊາວ ຊັງຕີແມັດ ໃສ່ສ່ວນທີ່ເກີນອອກໄປ. ສໍາລັບສິ້ນຂອງສ່ວນທີ່ລື່ນອອກຈາກທາງດ້ານຫຼັງ ຕ້ອງໃສ່ເຄື່ອງໝາຍໃຫ້ເຫັນ ຢ່າງຊັດເຈນ.

### ມາດຕາ 98 ການຂົນສົ່ງສິນຄ້າ ເກີນຂະໜາດນໍ້າໜັກ

ການຂົນສົ່ງສິນຄ້າທີ່ມີນໍ້າໜັກເກີນ ໃຫ້ປະຕິບັດ ດັ່ງນີ້:

1. ຂະໜາດຄວາມກ້ວາງ ເກີນ ສອງ ແມັດ ຫ້າສິບ ຊັງຕີແມັດ ຫຼື ສອງ ແມັດ ຫົກສິບ ຊັງຕີແມັດ ສໍາລັບຕູ້ສິນຄ້າ ແລະ ຊິແຕັກ;

2. ຄວາມຍາວ ເກີນ ຊາວ ແມັດ ລວມທັງຫາງລາກ ໜຶ່ງ ຄັນ ຫຼື ສິນຄ້າທີ່ບັນທຸກ ເກີນໄປທາງຫຼັງ ເກີນ ສອງແມັດ ລວມທັງລົດພ່ວງທີ່ແກ່ພ່ວງແຕ່ ສອງ ຄັນ ຂຶ້ນໄປ ໃຫ້ປະຕິບັດຕາມຫຼັກການຂອງການຂົນສົ່ງພິເສດ;

3. ປະຕິບັດຕາມລະບຽບການ ກ່ຽວກັບການບັນທຸກນໍ້າໜັກເກີນ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງວາງອອກ.

ສ່ວນການຂົນສົ່ງສິນຄ້າ ທີ່ມີນໍ້າໜັກເກີນ ແລະ ບໍ່ສາມາດແຍກຊິ້ນສ່ວນອອກຈາກກັນໄດ້ ຕ້ອງຂໍອະນຸຍາດ ນໍາຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

ສໍາລັບການຂົນສົ່ງສິນຄ້າລະຫວ່າງປະເທດ ໃຫ້ປະຕິບັດຕາມ ຂໍ້ຕົກລົງ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

### ມາດຕາ 99 ການຂົນສົ່ງສິນຄ້າດ້ວຍລົດທີ່ມີຄວາມຍາວເກີນ ເຈັດ ແມັດ

ລົດຂົນສົ່ງສິນຄ້າທີ່ມີຄວາມຍາວເກີນ ເຈັດ ແມັດ ທີ່ແລ່ນຕາມທາງຊື່ງມີ ສອງ ຊ່ອງຈະລາຈອນຢູ່ນອກເຂດຊຸມຊົນ ຕ້ອງຮັກສາໄລຍະຫ່າງຈາກລົດທີ່ແລ່ນຢູ່ທາງໜ້າພໍສົມຄວນ ເພື່ອໃຫ້ລົດທີ່ຊີງຂຶ້ນມາໄດ້ກັບເຂົ້າສູ່ຊ່ອງຈະລາຈອນຂອງຕົນ ໄດ້ຢ່າງປອດໄພ ຍົກເວັ້ນໃນບ່ອນທີ່ມີປ້າຍຫ້າມຊີງ, ເວລາທີ່ມີການສັນຈອນແອອັດ ແລະ ແລ່ນເປັນຂະບວນ.

## ໝວດທີ 3
## ການໃຫ້ບຸລິມະສິດຂອງລົດຂົນສົ່ງຜູ້ໂດຍສານປະຈໍາທາງ

### ມາດຕາ 100 ການໃຫ້ບຸລິມະສິດຂອງລົດຂົນສົ່ງຜູ້ໂດຍສານປະຈໍາທາງ

ຕາມຖະໜົນທີ່ມີຊ່ອງຈະລາຈອນສະເພາະ ສໍາລັບລົດຂົນສົ່ງຜູ້ໂດຍສານປະຈໍາທາງ ທີ່ມີປ້າຍສັນຍານ ແລະ ເຄື່ອງໝາຍທາງຕິດຕັ້ງໄວ້ນັ້ນ ຫ້າມຍານພາຫະນະອື່ນ ສັນຈອນ ຫຼື ຢຸດຢູ່ໃນຊ່ອງຈະລາຈອນ ດັ່ງກ່າວ ຍົກເວັ້ນ ລົດບັດຮັບສົ່ງນັກຮຽນ, ລົດຕູ້ໂດຍສານ ແລະ ລົດຕັກຊີ່.

ມາດຕາ 101 ການລ້ຽວລົດຜ່ານຊ່ອງຈະລາຈອນຂອງລົດຂົນສົ່ງຜູ້ໂດຍສານປະຈຳທາງ

ຕາມຖະໜົນທີ່ມີການກຳນົດຊ່ອງຈະລາຈອນສະເພາະ ໃຫ້ລົດຂົນສົ່ງຜູ້ໂດຍສານປະຈຳທາງ ລົດອື່ນທີ່ບໍ່ແມ່ນລົດຂົນສົ່ງໂດຍສານປະຈຳທາງ ສາມາດຜ່ານເຂົ້າໄປໃນຊ່ອງຈະລາຈອນດັ່ງກ່າວໄດ້ ເພື່ອກຽມລ້ຽວຊ້າຍ ຫຼື ລ້ຽວຂວາ ແລະ ສາມາດຜ່ານເຂົ້າໄປສູ່ຊ່ອງຈະລາຈອນທົ່ວໄປໄດ້ສະເພາະ ໃນກໍລະນີທີ່ມີເສັ້ນແບ່ງຊ່ອງຈະລາຈອນ ເປັນເສັ້ນປະ.

ມາດຕາ 102 ສິດຂອງລົດຂົນສົ່ງຜູ້ໂດຍສານປະຈຳທາງ

ຜູ້ຂັບຂີ່ລົດທຸກປະເພດ ຕ້ອງປ່ອຍທາງໃຫ້ລົດຂົນສົ່ງຜູ້ໂດຍສານປະຈຳທາງ ທີ່ກຳລັງອອກຈາກບ່ອນຈອດໄປກ່ອນ. ສຳລັບຜູ້ຂັບລົດຂົນສົ່ງຜູ້ໂດຍສານປະຈຳທາງ ກ່ອນຈະອອກຈາກບ່ອນຈອດລົດ ຕ້ອງໃຫ້ແນ່ໃຈວ່າລົດຄັນອື່ນທີ່ແລ່ນມາໃນທິດທາງດຽວກັນ ໄດ້ປ່ອຍທາງໃຫ້ແລ້ວ.

## ພາກທີ VII
## ລະບຽບການເພີ່ມເຕີມກ່ຽວກັບການຈະລາຈອນຕາມທາງຫຼວງ
## ໝວດທີ 1
## ການສັນຈອນຕາມທາງດ່ວນ

ມາດຕາ 103 ການຈະລາຈອນຕາມທາງດ່ວນ

ບໍ່ອະນຸຍາດໃຫ້ຜູ້ຂັບຂີ່ ແລະ ຜູ້ໃຊ້ທາງ ມີການກະທຳ ດັ່ງນີ້:

1. ຄົນຍ່າງ, ສັດລ້ຽງ, ລົດຖີບ, ລົດໂມເປດ, ລົດຈັກຂະໜາດນ້ອຍ ທີ່ມີຂະໜາດເຄື່ອງຈັກ ຕ່ຳກວ່າ 350 ຊີຊີ, ລົດໄຖ ແລະ ພາຫະນະກົນຈັກອື່ນ ທີ່ມີຄວາມໄວບໍ່ເກີນ ເຈັດສິບ ກິໂລແມັດຕໍ່ຊົ່ວໂມງ ຂຶ້ນ ຫຼື ເຂົ້າທາງດ່ວນ;

2. ລົດບັນທຸກທີ່ນ້ຳໜັກລວມຫຼາຍກວ່າ 3.500 ກິໂລກຣາມ ແລ່ນກາຍຊ່ອງຈະລາຈອນທີ່ສອງ;

3. ຈອດລົດຕາມແຄມທາງ;

4. ຂັບຂ້າມ ຫຼື ລອດຕາມຊ່ອງວ່າງຂອງແນວແບ່ງທາງ ເພື່ອລ້ຽວກັບ;

5. ຂັບລົດຖອຍຫຼັງ ໃນກໍລະນີຜູ້ຂັບຂີ່ຫຼົງທາງ ຫຼື ແລ່ນກາຍທາງອອກ ໃຫ້ສືບຕໍ່ການສັນຈອນໄປຈົນເຖິງຈຸດທາງອອກຖັດໄປ ແລ້ວຈຶ່ງຫາທາງກັບຄືນ;

6. ຮຽນຂັບລົດ.

ມາດຕາ 104 ການຂັບລົດ ເຂົ້າ, ອອກ ທາງດ່ວນ

ເມື່ອຈະເຂົ້າທາງດ່ວນ ຜູ້ຂັບຂີ່ ຕ້ອງເຂົ້າສູ່ຊ່ອງຈະລາຈອນເລັ່ງຄວາມໄວ, ຜ່ອນຄວາມໄວ ຫຼື ຢຸດລົດຢູ່ຈຸດຕົ້ນທາງຂອງຊ່ອງຈະລາຈອນເລັ່ງຄວາມໄວ ເພື່ອສັງເກດສະພາບການສັນຈອນຂອງລົດ ທີ່ແລ່ນມາຕາມທາງດ່ວນ ເມື່ອເຫັນວ່າສະດວກແລ້ວ ຈຶ່ງເລັ່ງຄວາມໄວໃຫ້ທຽບເທົ່າກັບຄວາມໄວຂອງລົດ ທີ່ແລ່ນຢູ່ໃນຊ່ອງຈະລາຈອນຂວາສຸດຂອງທາງດ່ວນ ແລ້ວຈຶ່ງຂັບເຂົ້າໄປ.

ເມື່ອຈະອອກຈາກທາງດ່ວນ ຜູ້ຂັບຂີ່ ຕ້ອງຂັບລົດເຂົ້າສູ່ຊ່ອງຈະລາຈອນສຳລັບຜ່ອນຄວາມໄວແລ້ວຈຶ່ງຜ່ອນຄວາມໄວ ແລະ ອອກຈາກທາງດ່ວນ.

ມາດຕາ 105 ລົດຕິດຂັດຢູ່ເທິງທາງດ່ວນ

ໃນກໍລະນີຕ້ອງຢຸດລົດແບບສຸກເສີນຢູ່ເທິງທາງດ່ວນ ຜູ້ຂັບຂີ່ ຕ້ອງຊອກຫາວິທີເອົາລົດອອກຈາກແລວທາງການຈະລາຈອນໄປໄວ້ຢູ່ແຄມທາງ ຫຼື ຢູ່ນອກເສັ້ນຂອບທາງກ້ຳຂວາ ແລະ ປະຕິບັດຕາມລະບຽບທີ່ໄດ້ກຳນົດໄວ້ໃນມາດຕາ 43 ຂອງດຳລັດສະບັບນີ້.

## ໝວດທີ 2
## ລະບຽບການເພີ່ມເຕີມສຳລັບຜູ້ຂັບຂີ່ ລົດຈັກ, ລົດຖີບ ແລະ ລົດໂມເປດ

### ມາດຕາ 106 ການຂັບຂີ່ລົດຈັກ

ເມື່ອສັນຈອນຕາມທາງຫຼວງ ຜູ້ຂັບຂີ່ລົດຈັກ ຕ້ອງຂັບຂີ່ໄປຕາມຊ່ອງຈະລາຈອນສຳລັບລົດຈັກ, ຖ້າບໍ່ມີໃຫ້ຂັບຂີ່ ຢູ່ໃນຊ່ອງຈະລາຈອນຂວາສຸດ ບ່ອນທາງມີຫຼາຍຊ່ອງຈະລາຈອນ ຫຼື ລຽບຕາມຂອບທາງ ໃນໄລຍະບໍ່ເກີນ ໜຶ່ງແມັດຫ້າສິບ ຊັງຕີແມັດ ຈາກເສັ້ນຂອບທາງ ຫຼື ຈາກຂອບທາງປູຢາງ ຍົກເວັ້ນກໍລະນີຫຼົບຫຼີກສິ່ງກີດຂວາງ ຫຼື ຊີງຂຶ້ນໜ້າລົດຄັນອື່ນ.

ອະນຸຍາດໃຫ້ຂັບຂີ່ລົດຈັກຕາມຊ່ອງຈະລາຈອນຊ້າຍສຸດໄດ້ ໃນກໍລະນີຈະລ້ຽວຊ້າຍ ຫຼື ລ້ຽວກັບໄລຍະ ໜຶ່ງຮ້ອຍຫ້າສິບ ແມັດ ກ່ອນຮອດບ່ອນລ້ຽວ.

### ມາດຕາ 107 ການຂັບຂີ່ລົດຖີບ ແລະ ລົດໂມເປດ

ຜູ້ຂີ່ລົດຖີບ ຕ້ອງມີອາຍຸ ແຕ່ ເກົ້າ ປີຂຶ້ນໄປ ແລະ ລົດໂມເປດ ຕ້ອງມີອາຍຸ ແຕ່ ສິບສອງ ປີຂຶ້ນໄປ ແລະການຂັບຂີ່ ໃຫ້ປະຕິບັດ ດັ່ງນີ້:

1. ຂັບຂີ່ແນບເຂົ້າແຄມທາງກ້ຳຂວາ ເປັນແຖວດຽວ;
2. ຂັບຂີ່ເປັນຂະບວນ ໃຫ້ຮຽງກັນໄດ້ ບໍ່ເກີນ ສອງ ຄັນ ແລະ ໃຫ້ແນບເຂົ້າແຄມທາງກ້ຳຂວາ.

### ມາດຕາ 108 ການຂັບຂີ່ໃນເວລາຄ່ຳມືດ

ຜູ້ຂັບຂີ່ລົດຖີບ ແລະ ລົດໂມເປດ ໃນເວລາຄ່ຳມືດ ຕ້ອງໃສ່ເສື້ອຜ້າ ທີ່ມີສີແຈ້ງ ຫຼື ມີແຖບສະທ້ອນແສງ, ໄຕ້ໄຟ, ດອກໄຟ ຫຼື ແຜ່ນສະທ້ອນແສງຕິດລົດ ທາງດ້ານໜ້າເປັນ ສີເຫຼືອງ ຫຼື ຂາວ, ດ້ານຫຼັງເປັນ ສີແດງເພື່ອໃຫ້ຜູ້ຂັບຂີ່ອື່ນໄດ້ແນມເຫັນຢ່າງຊັດເຈນ.

## ໝວດທີ 3
## ລົດແກ່ກັນ

### ມາດຕາ 109 ການແກ່ລົດ

ການແກ່ລົດດ້ວຍເຊືອກ, ໂສ້, ທ່ອນເຫຼັກ ລົດທີ່ຖືກແກ່ ຕ້ອງມີຜູ້ຂັບຂີ່ປະຈຳຢູ່ ຍົກເວັ້ນກໍລະນີແກ່ດ້ວຍທ່ອນເຫຼັກທີ່ອອກແບບມາສະເພາະ ທີ່ສາມາດບັງຄັບໃຫ້ລົດທີ່ຖືກແກ່ບໍ່ໃຫ້ເຈືອກ ຊ້າຍ ຫຼື ຂວາ.

ໃນເວລາແກ່ລົດດ້ວຍເຊືອກ, ໂສ້ ຫຼື ທ່ອນເຫຼັກ ບໍ່ໃຫ້ມີຄົນໂດຍສານຢູ່ໃນລົດທີ່ຖືກແກ່ ນອກຈາກຜູ້ຂັບຂີ່. ໃນກໍລະນີແກ່ດ້ວຍວິທີຍົກສ່ວນໜ້າ ຫຼື ສ່ວນທ້າຍ ບໍ່ອະນຸຍາດໃຫ້ມີຄົນຢູ່ໃນລົດທີ່ຖືກແກ່.

ລົດທີ່ແກ່ກັນດ້ວຍເຊືອກ ຫຼື ໂສ້ ລະຫວ່າງລົດທີ່ແກ່ກັບລົດທີ່ຖືກແກ່ ຕ້ອງມີຄວາມຍາວ ຢູ່ໃນລະຫວ່າງ ສີ່ ຫາ ຫົກ ແມັດ, ຖ້າແກ່ດ້ວຍທ່ອນເຫຼັກ ຕ້ອງບໍ່ໃຫ້ເກີນ ສີ່ ແມັດ.

**ມາດຕາ 110 ການບໍ່ອະນຸຍາດໃຫ້ແກ່ລົດ**

ການບໍ່ອະນຸຍາດໃຫ້ແກ່ລົດ ມີ ດັ່ງນີ້:

1. ລົດ ທີ່ມີລະບົບພວງມະໄລບໍ່ເຮັດວຽກ ຫຼື ໃຊ້ບໍ່ໄດ້ ໃຫ້ແກ່ແບບຍົກສ່ວນ;
2. ແກ່ລົດພ້ອມກັນແຕ່ ສອງ ຄັນ ຂຶ້ນໄປ;
3. ລົດ ທີ່ມີລະບົບຫ້າມລໍ້ບໍ່ເຮັດວຽກ ແລະ ມີນໍ້າໜັກລວມເກີນເຄິ່ງໜຶ່ງ ຂອງນໍ້າໜັກລົດທີ່ແກ່, ຖ້າມີນໍ້າໜັກລວມຕໍ່າກວ່າ ໃຫ້ແກ່ດ້ວຍທ່ອນເຫຼັກ ຫຼື ແກ່ດ້ວຍວິທີຍົກສ່ວນ;
4. ແກ່ລົດຈັກສອງລໍ້;
5. ແກ່ດ້ວຍເຊືອກປ່ອນທາງມື່ນ.

## ໝວດທີ 4
## ການຮຽນຂັບລົດ

**ມາດຕາ 111 ການຮຽນຂັບລົດ**

ການຮຽນຂັບລົດ ຕ້ອງຮຽນພາກທິດສະດີຕາມຫຼັກສູດ ຢູ່ໂຮງຮຽນສອນຂັບລົດ ແລະ ຝຶກແອບການຂັບລົດຕົວຈິງ ຢູ່ສະໜາມຂອງໂຮງຮຽນ ແລະ ສູນຝຶກອົບຮົມການຂັບຂີ່.

ການຮຽນຂັບຂີ່ຕາມທາງ ຕ້ອງມີຄູສອນທີ່ມີປະສົບການໄປນຳ, ກ່ອນຈະຮຽນຂັບລົດຢູ່ຕາມທາງໃນຕົວເມືອງ ຜູ້ຮຽນຂັບຂີ່ ຕ້ອງໄດ້ຜ່ານການຮຽນກົດຈະລາຈອນທາງບົກ ຢ່າງຄົບຖ້ວນເສຍກ່ອນ ແລະ ເມື່ອຂັບຂີ່ຕາມທາງ ກໍຕ້ອງປະຕິບັດຕາມກົດຈະລາຈອນທາງບົກ ຢ່າງເຄັ່ງຄັດ.

**ມາດຕາ 112 ຄູສອນໂຮງຮຽນສອນຄົນຂັບລົດ**

ຄູສອນຢູ່ໂຮງຮຽນສອນຂັບລົດ ຕ້ອງມີໃບຢັ້ງຢືນການເປັນຄູສອນການຂັບຂີ່ ແລະ ຕ້ອງມີໃບຂັບຂີ່ຍານພາຫະນະ ປະເພດ C ຂຶ້ນໄປ.

**ມາດຕາ 113 ອາຍຸຂອງຜູ້ຮຽນຂັບລົດ**

ອາຍຸຂອງຜູ້ຮຽນຂັບລົດຕາມແຕ່ລະປະເພດ ມີ ດັ່ງນີ້:

1. A ຕ້ອງມີອາຍຸຄົບ ສິບຫ້າ ປີ ຂຶ້ນໄປ;
2. A1, A2, A3 ແລະ B ຕ້ອງມີອາຍຸຄົບ ສິບແປດ ປີ ຂຶ້ນໄປ;
3. C ຕ້ອງມີອາຍຸຄົບ ຊາວເອັດ ປີ ຂຶ້ນໄປ;
4. D ຕ້ອງມີອາຍຸຄົບ ຊາວສາມ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ B ມາກ່ອນຢ່າງໜ້ອຍ ສອງ ປີ;
5. C1 ຕ້ອງມີອາຍຸຄົບ ຊາວຫ້າ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C ມາກ່ອນຢ່າງໜ້ອຍ ສອງ ປີ;
6. D1 ຕ້ອງມີອາຍຸຄົບ ຊາວຫ້າ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ D ມາກ່ອນຢ່າງໜ້ອຍ ສອງ ປີ;
7. C2 ຕ້ອງມີອາຍຸຄົບ ຊາວແປດ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C1 ມາກ່ອນຢ່າງໜ້ອຍ ສອງ ປີ;
8. D2 ຕ້ອງມີອາຍຸຄົບ ຊາວແປດ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ D1 ມາກ່ອນຢ່າງໜ້ອຍ ສອງ ປີ;
9. E ຕ້ອງມີອາຍຸຄົບ ຊາວຫ້າ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ B, C ແລະ D ມາກ່ອນຢ່າງໜ້ອຍ ສອງ ປີ;
10. E1 ຕ້ອງມີອາຍຸຄົບ ຊາວແປດ ປີ ຂຶ້ນໄປ ແລະ ຕ້ອງມີໃບຂັບຂີ່ປະເພດ C1 ມາກ່ອນຢ່າງ ໜ້ອຍ ສອງ ປີ.

ມາດຕາ 114 ລົດສຳລັບຮຽນຂັບ

ລົດທີ່ໃຊ້ໃນການຮຽນ, ການສອບຂັບຂີ່ ຕ້ອງມີສະພາບເຕັກນິກດີ ແລະ ຕິດຕັ້ງຄັນຢຽບຄາດ ນອກຈາກ ລົດທີ່ໃຊ້ເກຍໂອໂຕ ແລະ ຫ້າມລໍ້ ສຳລັບຄູສອນ ແລະ ຕິດປ້າຍລົດຮຽນຂັບ.

ມາດຕາ 115 ການຮຽນຂັບລົດ ແລະ ການສອບເສັງເອົາໃບຂັບຂີ່ຂອງຄົນພິການ

ຄົນພິການ ມີສິດເຂົ້າຮຽນຂັບລົດ ແລະ ສອບເສັງເອົາໃບຂັບຂີ່ ຕາມສະພາບຕົວຈິງຂອງແຕ່ລະຄົນ.

## ໝວດທີ 5
## ການອະນຸຍາດນຳໃຊ້ລົດ

ມາດຕາ 116 ການຂຶ້ນທະບຽນ

ລົດ ແລະ ຫາງລາກ ທຸກປະເພດ, ຍົກເວັ້ນລົດໂມເປດ ຕ້ອງໄດ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນ ຕາມກົດໝາຍ ແລະ ລະບຽບການ ພາຍໃນ ສິບຫ້າ ວັນ ນັບແຕ່ວັນຂາຍອອກຈາກຮ້ານ ຫຼື ພາຍຫຼັງການຊຳລະພາສີອາກອນຄົບຖ້ວນແລ້ວ.

ມາດຕາ 117 ປ້າຍທະບຽນລົດ

ລົດ ແລະ ຫາງລາກ ທຸກປະເພດ ຕ້ອງຕິດປ້າຍທະບຽນໃຫ້ຖືກຕ້ອງຕາມຈຸດ, ຂະໜາດ ແລະ ສີ ຂອງແຜ່ນປ້າຍ ທີ່ໄດ້ກຳນົດໄວ້ ແລະ ບໍ່ອະນຸຍາດໃຫ້ຕົບແຕ່ງປ້າຍທະບຽນລົດ ແລະ ບໍ່ໃຫ້ປົກປິດປ້າຍ.

ລົດທີ່ໄດ້ຂຶ້ນທະບຽນແລ້ວ ໃນເວລາມີການຊື້, ຂາຍ ຕ້ອງໂອນກຳມະສິດ ແລະ ໄປຂຶ້ນທະບຽນໃໝ່ ພາຍໃນ ສາມສິບ ວັນ.

ມາດຕາ 118 ການກວດກາສະພາບເຕັກນິກ

ລົດທຸກປະເພດ ທີ່ສັນຈອນຕາມທາງ ຕ້ອງໄດ້ຜ່ານການກວດກາສະພາບເຕັກນິກ ຕາມກຳນົດເວລາ ແລະ ມາດຕະຖານທີ່ກຳນົດໄວ້ ເພື່ອຮັບປະກັນຄວາມປອດໄພໃນການສັນຈອນ ແລະ ປົກປັກຮັກສາສະພາບແວດລ້ອມ.

ມາດຕາ 119 ລົດຕໍ່ອກາງ

ການນຳໃຊ້ຫົວຈັກສຳລັບການລາກແກ່ມາດັດແປງເປັນ ລົດຕໍ່ອກາງ ທີ່ແກ່ລໍ້, ລົດອີແຕ໋ນ, ລົດຊິ່ງ ແລະ ລົດອື່ນໆ ຕ້ອງຮັບປະກັນຄວາມປອດໄພ ມີລະບົບຫ້າມລໍ້, ມີໄຟເຍືອງທາງ ແລະ ມີຖັງລົດທີ່ມີຄວາມແໜ້ນໜາ, ແຂງແກ່ນ, ມີດອກໄຟສະທ້ອນແສງ ສີເຫຼືອງ ຫຼື ສີແດງ ຫຼື ມີແຜ່ນສະທ້ອນແສງຕິດໃສ່ທາງທ້າຍລົດ.

ມາດຕາ 120 ລົດຖີບ

ລົດຖີບ ຕ້ອງມີຫ້າມລໍ້ທີ່ຮັບປະກັນ ທັງລໍ້ໜ້າ ແລະ ລໍ້ຫຼັງ, ທາງໜ້າຕ້ອງມີໂຄມໄຟ ເຍືອງທາງ ຫຼື ດອກໄຟສະທ້ອນແສງສີຂາວ, ທາງຫຼັງຕ້ອງມີດອກໄຟ ຫຼື ດອກໄຟສະທ້ອນແສງສີແດງ ແລະ ຢູ່ພາງຕີນແຕ່ລະອັນ ຕ້ອງມີດອກໄຟສະທ້ອນແສງສີເຫຼືອງ.

ມາດຕາ 121 ລົດຕັກຊີ່

ລົດຕັກຊີ່ ຕ້ອງຕິດຕັ້ງເຄື່ອງຄິດໄລ່ເງິນ (Meter), ຕາຕະລາງອັດຕາຄ່າໂດຍສານສໍາລັບແຕ່ລະສາຍທາງ, ມີຮູບ, ຊື່, ທີ່ຢູ່ ແລະ ເບີໂທຕິດຕໍ່ຂອງຜູ້ຂັບຂີ່, ເທິງຫຼັງຄາ ຕ້ອງມີໂຄມໄຟທີ່ມີຕົວໜັງສື (TAXI) ແລະ ທາງຂ້າງລົດ ຕ້ອງມີເຄື່ອງໝາຍສະມາຄົມ ຫຼື ບໍລິສັດ.

# ພາກທີ VIII
# ປ້າຍສັນຍານ, ເຄື່ອງໝາຍທາງ ແລະ ໄຟສັນຍານຈະລາຈອນ
## ໝວດທີ 1
## ປ້າຍສັນຍານຈະລາຈອນ

**ມາດຕາ 122 ໝວດປ້າຍຈະລາຈອນ**

ໝວດປ້າຍຈະລາຈອນ ມີ ດັ່ງນີ້:

1. ປ້າຍເຕືອນອັນຕະລາຍ (Warning Signs);
2. ປ້າຍບອກສິດ (Priority Signs);
3. ປ້າຍຫ້າມ (Prohibitory or Restrictive Signs);
4. ປ້າຍກໍານົດ ຫຼື ປ້າຍບັງຄັບ (Mandatory Signs);
5. ປ້າຍກໍານົດລະບຽບການສະເພາະ (Special Regulation Signs);
6. ປ້າຍແນະນໍາທາງ ຫຼື ທີ່ຕັ້ງ (Direction, Position or Indication Signs);
7. ປ້າຍບໍລິການ (Information, Facilities or Services Signs);
8. ປ້າຍເພີ່ມ (Additional Panels).

ສໍາລັບຮູບແບບ, ລັກສະນະ ແລະ ຄວາມໝາຍ ຂອງປ້າຍຈະລາຈອນ ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ ຂອງດໍາລັດສະບັບນີ້.

**ມາດຕາ 123 ປ້າຍເຕືອນອັນຕະລາຍ**

ປ້າຍເຕືອນອັນຕະລາຍ ແມ່ນ ປ້າຍທີ່ນໍາໃຊ້ສໍາລັບເຕືອນຜູ້ຂັບຂີ່ໃຫ້ຊາບລ່ວງໜ້າ ກ່ຽວກັບສະພາບທາງ ມີການປ່ຽນແປງ, ອາດເປັນອັນຕະລາຍ, ມີການຄວບຄຸມການຈະລາຈອນຢູ່ຂ້າງໜ້າ ເພື່ອໃຫ້ຜູ້ຂັບຂີ່ ມີຄວາມລະມັດລະວັງ, ຫຼຸດຜ່ອນຄວາມໄວລົງ ຫຼື ປະຕິບັດຕາມສັນຍານຈະລາຈອນ ເພື່ອໃຫ້ຜ່ານບໍລິເວນເຫຼົ່ານັ້ນ ໄປດ້ວຍຄວາມປອດໄພ ແລະ ເຮັດໃຫ້ການຄວບຄຸມການຈະລາຈອນມີປະສິດທິພາບ.

**ມາດຕາ 124 ປ້າຍບອກສິດ**

ປ້າຍບອກສິດ ແມ່ນ ປ້າຍທີ່ນໍາໃຊ້ສໍາລັບການກໍານົດລະບຽບ ຫຼື ຄວບຄຸມການສັນຈອນ ຢູ່ຕາມທາງຄັບ, ທາງແຍກ ແລະ ບ່ອນທາງແຄບທີ່ລົດບໍ່ສາມາດສວນທາງກັນໄດ້ ໂດຍການກໍານົດບູລິມະສິດ ຫຼື ຈັດລໍາດັບ ຜູ້ໄປກ່ອນ ແລະ ນໍາຫຼັງ.

**ມາດຕາ 125 ປ້າຍຫ້າມ**

ປ້າຍຫ້າມ ແມ່ນ ປ້າຍທີ່ນໍາໃຊ້ສໍາລັບກໍານົດລະບຽບການຈະລາຈອນ ຫຼື ຂໍ້ຈໍາກັດໃນການຈະລາຈອນ ລົດ ແລະ ຄົນ ຕາມທາງຫຼວງ ເພື່ອເຮັດໃຫ້ການຈະລາຈອນ ມີຄວາມເປັນລະບຽບຮຽບຮ້ອຍ, ສະດວກ ແລະ ປອດໄພ.

**ມາດຕາ 126 ປ້າຍກຳນົດ ຫຼື ປ້າຍບັງຄັບ**

ປ້າຍກຳນົດ ຫຼື ປ້າຍບັງຄັບ ແມ່ນປ້າຍທີ່ນຳໃຊ້ສຳລັບກຳນົດທິດທາງ ໃຫ້ຜູ້ນຳໃຊ້ທາງຫຼວງ ຫຼື ບັງຄັບໃຫ້ຜູ້ຂັບຂີ່ຕ້ອງໄປຕາມທິດທາງທີ່ກຳນົດໄວ້ ຢ່າງເຂັ້ມງວດ.

**ມາດຕາ 127 ປ້າຍກຳນົດລະບຽບການສະເພາະ**

ປ້າຍກຳນົດລະບຽບການສະເພາະ ແມ່ນ ປ້າຍທີ່ນຳໃຊ້ສຳລັບການຈັດລະບົບການຈະລາຈອນຂອງລົດໄປຕາມທາງ, ຊ່ອງທາງຈະລາຈອນ ແລະ ບ່ອນທາງຜ່ານເຂດຊຸມຊົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ.

**ມາດຕາ 128 ປ້າຍແນະນຳທາງ ຫຼື ທີ່ຕັ້ງ**

ປ້າຍແນະນຳທາງ ຫຼື ທີ່ຕັ້ງ ແມ່ນ ປ້າຍທີ່ນຳໃຊ້ສຳລັບແນະນຳຜູ້ຂັບຂີ່ ໃຫ້ຮູ້ທິດທາງ, ໄລຍະທາງທີ່ຈະໄປເຖິງຈຸດໝາຍປາຍທາງໄດ້ ຢ່າງຖືກຕ້ອງ ລວມທັງຂໍ້ມູນທີ່ຈຳເປັນຕ່າງໆ ໃນການເດີນທາງ.

**ມາດຕາ 129 ປ້າຍບໍລິການ**

ປ້າຍບໍລິການ ແມ່ນ ປ້າຍທີ່ນຳໃຊ້ສຳລັບຊີ້ບອກຂໍ້ມູນ ແລະ ການບໍລິການທີ່ສຳຄັນ ທີ່ຜູ້ຂັບຂີ່ຍານພາຫະນະ ຄວນຮູ້ໃນການເດີນທາງ ແລະ ຍັງອາດເປັນປະໂຫຍດຕໍ່ຜູ້ນຳໃຊ້ທາງ ທີ່ສາມາດຊົມໃຊ້ການບໍລິການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ທີ່ມີຢູ່ຕາມແຄມທາງຫຼວງ.

**ມາດຕາ 130 ປ້າຍເພີ່ມ**

ປ້າຍເພີ່ມ ແມ່ນ ປ້າຍສັນຍານຈະລາຈອນ ທີ່ຕິດຕັ້ງຮ່ວມກັບປ້າຍຈະລາຈອນອື່ນ ເພື່ອກຳນົດຄວາມແນ່ນອນ ຫຼື ຈຳກັດຂອບເຂດການບັງຄັບໃຊ້ຂອງປ້າຍ ໃຫ້ມີຄວາມຊັດເຈນຫຼາຍຂຶ້ນ.

## ໝວດທີ 2
## ເຄື່ອງໝາຍຈະລາຈອນໜ້າທາງ

**ມາດຕາ 131 ປະເພດເຄື່ອງໝາຍຈະລາຈອນ**

ເຄື່ອງໝາຍການຈະລາຈອນ ປະກອບດ້ວຍ ເສັ້ນ, ຂີດໝາຍ, ເຄື່ອງໝາຍ ແລະ ສັນຍາລັກຕ່າງໆ ທີ່ຂີດ, ຂຽນ ຫຼື ຕິດໄວ້ຕາມ ໜ້າທາງ, ບ່າທາງ, ແຄມທາງ ຫຼື ອົງປະກອບຂອງທາງ ເພື່ອຈັດລະບຽບການສັນຈອນໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ປອດໄພ.

ເຄື່ອງໝາຍຈະລາຈອນ ມີ ສອງ ປະເພດ ດັ່ງນີ້:

1. ເຄື່ອງໝາຍຈະລາຈອນ ຕາມລວງນອນ (Horizontal Marking);
2. ເຄື່ອງໝາຍຈະລາຈອນ ຕາມລວງຕັ້ງ (Vertical Marking).

ສຳລັບຮູບແບບ, ລັກສະນະ ແລະ ຄວາມໝາຍ ຂອງເຄື່ອງໝາຍຈະລາຈອນ ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ຂອງດຳລັດສະບັບນີ້.

**ມາດຕາ 132 ເຄື່ອງໝາຍຈະລາຈອນຕາມລວງນອນ**

ເຄື່ອງໝາຍຈະລາຈອນ ຕາມລວງນອນ ມີ ດັ່ງນີ້:

1. ເຄື່ອງໝາຍຕາມລວງຍາວຂອງທາງ (Longitudinal Pavement Marking) ປະກອບດ້ວຍເສັ້ນແບ່ງໃຈກາງທາງ, ເສັ້ນຂອບທາງ, ເສັ້ນແບ່ງຊ່ອງຈະລາຈອນ, ເສັ້ນຫ້າມຢຸດ, ເສັ້ນຫ້າມຈອດ;

2. ເຄື່ອງໝາຍຕາມລວງຂວາງຂອງທາງ(Transverse Pavement Marking) ປະກອບດ້ວຍ ເສັ້ນຢຸດ, ເສັ້ນປ່ອຍທາງ, ເສັ້ນມ້າລາຍ, ເສັ້ນຫຼຸດຜ່ອນຄວາມໄວ;

3. ເຄື່ອງໝາຍ ປະເພດຂໍ້ຄວາມ, ສັນຍາລັກ, ລູກສອນ;

4. ເຄື່ອງໝາຍຂອບທາງ.

### ມາດຕາ 133 ເຄື່ອງໝາຍຈະລາຈອນຕາມລວງຕັ້ງ

ເຄື່ອງໝາຍຈະລາຈອນຕາມລວງຕັ້ງ ມີ ດັ່ງນີ້:

1. ເຄື່ອງໝາຍ ຂອບຕໍ່າສຸດ ຫຼື ບ່ອນຕໍ່າສຸດຂອງເພດານອຸໂມງ, ຂ້າງຂົວ ແລະ ທໍ່;
2. ເຄື່ອງໝາຍ ເສົາ ຫຼື ຫຼັກກົມ ທີ່ຕັ້ງຢູ່ບ່ອນຫົວດອນກາງທາງ;
3. ເຄື່ອງໝາຍ ເສົາ ຫຼື ຫຼັກ ທີ່ຢູ່ຕາມແຄມທາງ;
4. ເຄື່ອງໝາຍ ທີ່ໃຊ້ກັບຮາວກັນຕົກ ບ່ອນທາງໂຄ້ງທີ່ມີລັກສະໜະຂອງທາງໂຄ້ງໜ້ອຍ;
5. ເຄື່ອງໝາຍຮາວກັນຕົກບ່ອນອື່ນ ທີ່ບໍ່ແມ່ນທາງໂຄ້ງ;
6. ເຄື່ອງໝາຍຂອບທາງ, ຫົວດອນກາງທາງ, ຂອບວົງວຽນ ບ່ອນທີ່ເປັນອັນຕະລາຍ.

## ໝວດທີ 3
## ໄຟສັນຍານຈະລາຈອນ

### ມາດຕາ 134 ລັກສະນະ ແລະ ສີ ຂອງໄຟສັນຍານຈະລາຈອນ

ລັກສະນະ ແລະ ສີ ຂອງໄຟສັນຍານຈະລາຈອນ ປະກອບມີ ດັ່ງນີ້:

1. ໂຄມໄຟເປັນວົງມົນແບບລູກສອນ, ແບບມີຮູບເຄື່ອນໄຫວຂອງຄົນຍ່າງ ຫຼື ລົດຖີບ ຫຼື ໂຄມ ສີ່ຫຼ່ຽມ ຮູບໂຕ X;

2. ໂຄມໄຟທີ່ເປັນວົງມົນອາດຈະມີໄຟເສີມ ເປັນຮູບລູກສອນສີຂຽວໃສ່ທາງຂ້າງ ໃນລະດັບດຽວກັບ ໂຄມ ໄຟ ສີຂຽວ;

3. ສີຂອງໄຟສັນຍານຈະລາຈອນປະກອບມີ ສີແດງ, ສີເຫຼືອງ, ສີຂຽວ.

### ມາດຕາ 135 ຄວາມໝາຍຂອງສີໄຟສັນຍານຈະລາຈອນແບບວົງມົນ

ໄຟສັນຍານຈະລາຈອນ ມີຄວາມໝາຍ ດັ່ງນີ້:

1. ໄຟສີແດງ ແມ່ນຫ້າມສັນຈອນເດັດຂາດ;
2. ໄຟສີເຫຼືອງ ແມ່ນໃຫ້ລະວັງ, ກຽມຢຸດລົດ;
3. ໄຟສີຂຽວ ແມ່ນໃຫ້ສັນຈອນໄດ້.

### ມາດຕາ 136 ໄຟສັນຍານເປັນຮູບລູກສອນ

ໄຟສັນຍານທີ່ເປັນຮູບລູກສອນສີ ຂຽວ, ເຫຼືອງ, ແດງ ມີຄວາມໝາຍຄືກັນກັບໄຟສັນຍານແບບ ວົງມົນ ຊຶ່ງບັງຄັບໃຊ້ສະເພາະທິດທາງທີ່ລູກສອນຊີ້ໄປ ເທົ່ານັ້ນ, ຖ້າລູກສອນຊີ້ໄປທາງຊ້າຍ ສາມາດລ້ຽວຊ້າຍ ຫຼື ລ້ຽວກັບໄດ້ ຖ້າບໍ່ຂັດກັບປ້າຍສັນຍານຈະລາຈອນທີ່ຕັ້ງຢູ່.

ໄຟສັນຍານລູກສອນ ສີຂຽວ ທີ່ຕິດເພີ່ມໃສ່ກັບໂຄມໄຟມົນ ສີຂຽວ ອະນຸຍາດໃຫ້ລົງວໄປຕາມທິດທາງຂອງລູກສອນໄດ້ ແຕ່ຕ້ອງລະວັງ ຖ້າເປັນ ສີແດງ ໃຫ້ຢຸດ.

**ມາດຕາ 137 ໄຟສັນຍານແບບສັນຍາລັກ**

ໄຟສັນຍານທີ່ຮຸ່ງເປັນຮູບເຄື່ອນໄຫວຂອງຄົນ ຫຼື ລົດຖີບ ຈະມີຜົນບັງຄັບໃຊ້ສະເພາະກັບຄົນຍ່າງ ຫຼື ຜູ້ຂີ່ລົດຖີບ ເທົ່ານັ້ນ ຖ້າໄຟຮຸ່ງເປັນ ສີຂຽວ ແມ່ນໃຫ້ໄປໄດ້ ຖ້າເປັນ ສີແດງ ໃຫ້ຢຸດ.

ໄຟສັນຍານ ສໍາລັບລົດຖີບສາມາດໃຊ້ໄຟສັນຍານ ສາມ ສີ ແບບວົງມົນຄືກັບໄຟສັນຍານທົ່ວໄປ ແຕ່ຕ້ອງໃຫ້ມີຂະໜາດນ້ອຍກວ່າ ແລະ ທາງດ້ານລຸ່ມ ຕ້ອງມີຮູບລົດຖີບຕິດໄວ້.

**ມາດຕາ 138 ໄຟສັນຍານປະກອບສຽງ**

ໄຟສັນຍານປະກອບສຽງ ນໍາໃຊ້ເພື່ອເຕືອນໃຫ້ຄົນພິການຕາ ໄດ້ຮູ້ກ່ຽວກັບເວລາທີ່ອະນຸຍາດໃຫ້ຂ້າມທາງ ຫຼື ເວລາມີໄຟຂຽວ ຕ້ອງຕິດຕັ້ງອຸປະກອນສັນຍານດ້ວຍສຽງໃສ່ຕື່ມ.

**ມາດຕາ 139 ໄຟສັນຍານຄວບຄຸມຊ່ອງຈະລາຈອນ**

ການໃຫ້ສັນຍານເພື່ອຄວບຄຸມການສັນຈອນຕາມຊ່ອງຈະລາຈອນ ໂດຍສະເພາະຊ່ອງຈະລາຈອນທີ່ສາມາດ ປ່ຽນທິດທາງໄປ, ກັບໄດ້ ໃຫ້ນໍາໃຊ້ໄຟສັນຍານຮູບ ສີ່ ຫຼ່ຽມ ທີ່ມີແສງໄຟຮຸ່ງເປັນຮູບກາກະບາດໂຕ X ສີແດງ ແລະ ລູກສອນ ສີຂຽວ ຊີ້ລົງລຸ່ມ ເພື່ອອະນຸຍາດ ຫຼື ຫ້າມສັນຈອນຕາມຊ່ອງຈະລາຈອນ ທີ່ມີໄຟສັນຍານດັ່ງກ່າວ.

ໃນກໍລະນີຕ້ອງການເຕືອນໃຫ້ຜູ້ຂັບຂີ່ຮູ້ລ່ວງໜ້າ ໃຫ້ຕິດຕັ້ງໂຄມໄຟເປັນຮູບລູກສອນ ສີເຫຼືອງ ຊີ້ລົງລຸ່ມເປັນມູມຫງ່ຽງ ສີ່ສິບຫ້າ ອົງສາ ໄປທາງຊ້າຍ ຫຼື ຂວາ ເພື່ອເຕືອນໃຫ້ຜູ້ຂັບຂີ່ຮູ້ກ່ຽວກັບການປ່ຽນແປງຊ່ອງຈະລາຈອນ, ການເປີດ-ປິດ ຊ່ອງຈະລາຈອນ ຊຶ່ງຜູ້ຂັບຂີ່ ຕ້ອງປ່ຽນຊ່ອງຈະລາຈອນ ຕາມທິດຊີ້ບອກຂອງລູກສອນ.

ໃນກໍລະນີໄຟສັນຍານຄວບຄຸມຊ່ອງຈະລາຈອນບໍ່ຮຸ່ງ ບໍ່ອະນຸຍາດໃຫ້ຜູ້ຂັບຂີ່ເຂົ້າໄປໃນຊ່ອງຈະລາຈອນທີ່ມີໄຟສັນຍານດັ່ງກ່າວ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 140 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ທໍາລາຍ ປ້າຍ, ສັນຍານ, ເຄື່ອງໝາຍ ຈະລາຈອນ, ລວມທັງສ້າງສິ່ງເປິະເປື້ອນ ແລະ ປິດບັງປ້າຍສັນຍານຈະລາຈອນ;

2. ຕິດປ້າຍທະບຽນລົດ ທີ່ບໍ່ຖືກຕ້ອງຕາມລະບຽບການ;

3. ຕິດຕັ້ງປ້າຍໂຄສະນາ, ວາງເຄື່ອງຂາຍ, ຈັດພິທີ ຕາມທາງຫຼວງ, ເທິງທາງຍ່າງ ແລະ ເຂດສະຫງວນຂອງທາງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຫຼິ້ນກິລາ ຕາມທາງຫຼວງ, ຖະໜົນ;

5. ກໍ່ສ້າງ, ຕໍ່ເຕີມ ອາຄານ, ສິ່ງປຸກສ້າງເຫຼື່ອມເອົາເຂດສະຫງວນຂອງທາງຫຼວງ, ຖະໜົນ;

6. ດຳເນີນກິດຈະກຳຕ່າງໆ ຢູ່ບ່ອນທາງໂຄ້ງ, ທາງແຄບ ຫຼື ແຄມທາງ ທີ່ບໍ່ມີບ່ອນຈອດລົດ, ທີ່ເປັນອັນຕະລາຍ ແລະ ມີຄວາມສ່ຽງຕໍ່ການເກີດອຸບປະຕິເຫດ;

7. ຂຸດດິນ, ຖົມດິນ, ກອງດິນ, ກອງວັດສະດຸ ໃສ່ທາງຫຼວງ, ຖະໜົນ;

8. ຖິ້ມຂີ້ເຫຍື້ອ, ຖອກ ຫຼື ປ່ອຍນ້ຳເປື້ອນ, ຖອກນ້ຳມັນ, ລ້າງລົດໃສ່ທາງຫຼວງ, ຖະໜົນ;

9. ຈອດລົດຢູ່ທາງຍ່າງ, ທາງຄົນ, ທາງແຍກ, ທາງໂຄ້ງ, ທາງທີ່ຫຼີກກັນບໍ່ໄດ້, ທາງເຂົ້າ, ອອກ ຂົວ ແລະ ໃນຂົວ;

10. ປະປ່ອຍເດັກຂ້າມທາງ, ຫຼິ້ນຢູ່ຕາມແຄມທາງໂດຍລຳພັງ;

11. ລ້ຽງ, ປ່ອຍສັດຕາມທາງ, ເຄື່ອນຍ້າຍສັດລ້ຽງ ໂດຍບໍ່ມີຜູ້ຄວບຄຸມ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 141 ຂໍ້ຫ້າມສຳລັບຜູ້ນຳໃຊ້ທາງຫຼວງ

ຫ້າມຜູ້ນຳໃຊ້ທາງຫຼວງ ມີພຶດຕິກຳ ດັ່ງນີ້:

1. ຂັບຂີ່ໃນສະພາບມຶນເມົາ;

2. ຂັບຂີ່ພາຫະນະໄວເກີນກຳນົດ, ຂັບຂີ່ເຈີກຊ້າຍເຈີກຂວາ, ຊ່ວງຊີງພາຫະນະອື່ນ ດ້ວຍຄວາມປະໝາດ ແລະ ບໍ່ຖືກກົດຈະລາຈອນ;

3. ໃຊ້ໂທລະສັບມືຖື, ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆ ໃນເວລາຍ່າງຂ້າມທາງ;

4. ໃຊ້ໂທລະສັບມືຖື, ເບິ່ງໂທລະພາບ, ຮູບພາບ ວີຊີດີ (VCD), ດີວີດີ (DVD) ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆ ໃນເວລາຂັບຂີ່;

5. ຂັບຂີ່ລົດຈັກ, ລົດຖີບທຸກຊະນິດຽງກັນທີ່ກີດຂວາງການສັນຈອນ;

6. ຈອດລົດໃຫ້ຍຽງກັນຕາມເສັ້ນທາງທີ່ກີດຂວາງການສັນຈອນ;

7. ກັ້ງຄັນຮົ່ມໃນເວລາຂັບຂີ່ລົດຈັກ, ລົດໂມເປດ, ລົດຖີບ;

8. ບັນທຸກຜູ້ໂດຍສານເກີນຈຳນວນ, ສິນຄ້າເກີນນ້ຳໜັກ ຫຼື ຂະໜາດທີ່ກຳນົດ;

9. ບັນທຸກວັດຖຸອັນຕະລາຍໂດຍບໍ່ໄດ້ຮັບອະນຸຍາດ;

10. ສ້ອມແປງຍານພາຫະນະຢູ່ ກາງທາງ, ໃນຂົວ;

11. ເປີດເຄື່ອງສຽງດັງເກີນກຳນົດໃນເວລາຂັບຂີ່;

12. ແຂ່ງລົດທຸກຊະນິດຕາມເສັ້ນທາງໂດຍບໍ່ໄດ້ຮັບອະນຸຍາດ;

13. ປະທ່ອນໄມ້, ຝັກໄມ້, ກ້ອນຫີນ ຫຼື ສິ່ງກີດຂວາງອື່ນ ທີ່ໜູນຕີນລົດໄວ້ຕາມທາງຫຼວງ;

14. ລົດຕີນເຫຼັກຂຶ້ນຢຽບໜ້າທາງຫຼວງ;

15. ລົດບັນທຸກຂະໜາດໃຫຍ່ເຂົ້າໃນທາງຮ່ອມ;

16. ຈອດລົດ ຫຼື ສ້າງສິ່ງກີດຂວາງກວມທາງຄົນຍ່າງ;

17. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 142 ຂໍ້ຫ້າມສຳລັບຄົນຍ່າງ

ຫ້າມຄົນຍ່າງ ມີພຶດຕິກຳ ດັ່ງນີ້:

1. ໃຊ້ໂທລະສັບ ແລະ ເຄື່ອງຫຼິ້ນເອເລັກໂຕຣນິກໃນເວລາຍ່າງຕາມທາງ, ຂ້າມທາງຫຼວງ ແລະ ຖະໜົນ;

2. ຍ່າງຽງກັນເປັນໜ້າກະດານ, ເປັນພົງ, ເປັນແຜ ທີ່ກີດຂວາງການສັນຈອນ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 143 ຂໍ້ຫ້າມສໍາລັບຜູ້ຂັບຂີ່**

ຫ້າມຜູ້ຂັບຂີ່ລົດ ມີພຶດຕິກໍາ ດັ່ງນີ້:

1. ຂັບຂີ່ຍານພາຫະນະ ໂດຍບໍ່ມີໃບຂັບຂີ່ຍານພາຫະນະ ຫຼື ມີໃບຂັບຂີ່ຍານພາຫະນະ ບໍ່ຖືກຕ້ອງຕາມປະເພດຍານພາຫະນະ;

2. ຂັບຂີ່ຍານພາຫະນະ ເກີນຄວາມໄວ ທີ່ກົດໝາຍ, ລະບຽບການ ແລະ ປ້າຍສັນຍານຈະລາຈອນກໍານົດໄວ້;

3. ຂັບຂີ່ຍານພາຫະນະ ລວມທັງລົດຖີບເຈີດຊ້າຍ ເຈີດຂວາ, ຊ່ວງຊີງຍານພາຫະນະອື່ນ ດ້ວຍຄວາມປະໝາດ ແລະ ບໍ່ຖືກຕ້ອງຕາມກົດຈະລາຈອນ;

4. ໃຊ້ໂທລະສັບມືຖື, ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆ;

5. ຈອດລົດໃຫຍ່ຮຽງກັນຕາມທາງຫຼວງ, ຖະໜົນ ແລະ ຮ່ອມ ທີ່ກີດຂວາງການສັນຈອນ;

6. ກັ້ງຄັນຮົ່ມໃນເວລາຂັບຂີ່ລົດຈັກ, ໂມເປດ, ລົດຖີບ;

7. ບັນທຸກຜູ້ໂດຍສານເກີນຈໍານວນ, ສິນຄ້າເກີນນໍ້າໜັກ ຫຼື ຂະໜາດ ທີ່ກໍານົດ;

8. ບັນທຸກວັດຖຸອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;

9. ສ້ອມແປງລົດຢູ່ກາງທາງຫຼວງ, ຖະໜົນ, ຮ່ອມ ແລະ ກາງຂົວ;

10. ເປີດເຄື່ອງສຽງດັງເກີນກໍານົດໃນເວລາຂັບຂີ່;

11. ແຂ່ງລົດທຸກຊະນິດ ຕາມທາງຫຼວງ, ຖະໜົນ ແລະ ຮ່ອມ ໂດຍບໍ່ໄດ້ຮັບອະນຸຍາດ;

12. ປະຫ່ອນໄມ້, ຝົດໄມ້, ກ້ອນຫີນ ຫຼື ສິ່ງກີດຂວາງອື່ນໆ ທີ່ໜູນຕີນລົດໄວ້ຕາມທາງຫຼວງ, ຖະໜົນ ແລະ ຮ່ອມ;

13. ກີດຂວາງການສັນຈອນຂອງລົດອື່ນ ດ້ວຍການໃຊ້ຄວາມໄວຕໍ່າເກີນຄວາມຈໍາເປັນ ຫຼື ກວມເສັ້ນແບ່ງຊ່ອງຈະລາຈອນ;

14. ແຕະຫ້າມລໍ້ເລື້ອຍໆ ໂດຍບໍ່ມີເຫດອັນຄວນ;

15. ຂັບຂີ່ຍານພາຫະນະທຸກປະເພດ ໄປຕາມ ບ່າທາງ, ທາງສໍາລັບລົດຖີບ ແລະ ທາງຄົນຍ່າງ;

16. ຂັບຂີ່ຍານພາຫະນະ ໃນເວລາມຶນເມົາ, ສຸຂະພາບບໍ່ແຂງແຮງ, ເສບຢາເສບຕິດ, ສານເຄມີຕ່າງໆທີ່ມີຜົນກະທົບທາງດ້ານຈິດໃຈ;

17. ຂັບຂີ່ກີດຂວາງທາງຂະບວນລົດພິເສດ ຫຼື ສອດແຊກເຂົ້າໄປໃນຂະບວນດັ່ງກ່າວ;

18. ຂັບຂີ່ຍານພາຫະນະເກີນກໍານົດເວລາທີ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງກໍານົດໄວ້, ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

19. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 144 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ**

ຫ້າມຜູ້ດໍາເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ ມີພຶດຕິກໍາ ດັ່ງນີ້:

1. ໃຫ້ເຊົ່າ ແລະ ໂອນໃບອະນຸຍາດດໍາເນີນທຸລະກິດ ຂອງຕົນໃຫ້ແກ່ຜູ້ອື່ນ ຫຼື ນໍາໃຊ້ທະບຽນຂອງຜູ້ອື່ນ;

2. ຂາຍ, ມອບໂອນໂຄງການກ່ຽວກັບການຈະລາຈອນທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ;

3. ດໍາເນີນທຸລະກິດ ບໍ່ຖືກຕາມປະເພດທີ່ໄດ້ຮັບອະນຸຍາດ, ທີ່ບໍ່ມີໃບອະນຸຍາດ ຫຼື ໃບອະນຸຍາດໝົດກໍານົດ;

4. ນໍາໃຊ້ຍານພາຫະນະທີ່ບໍ່ມີໃບຢັ້ງຢືນການກວດກາເຕັກນິກ, ບໍ່ມີໃບອະນຸຍາດແລ່ນລົດ ຫຼື ໃບອະນຸຍາດແລ່ນລົດ ໝົດກໍານົດ;

5. ນຳໃຊ້ລົດຂົນສົ່ງຂອງຕ່າງປະເທດ ເພື່ອເຄື່ອນໄຫວບໍລິການຂົນສົ່ງພາຍໃນປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;

6. ປອມແປງເອກະສານ, ສົມຮູ້ຮ່ວມຄິດ ຫຼື ໃຫ້ສິນບົນ ແກ່ເຈົ້າໜ້າທີ່ ແລະ ພະນັກງານ ຂອງລັດ ເພື່ອໃຫ້ໄດ້ຮັບອະນຸຍາດດຳເນີນທຸລະກິດຂົນສົ່ງທາງບົກ;

7. ບໍ່ໃຫ້ການຮ່ວມມື, ປິດບັງ, ປອມແປງ, ບິດເບືອນຂໍ້ມູນ ກ່ຽວກັບບັນຊີການເງິນທຸລະກິດ ແລະ ບໍລິມາດຂົນສົ່ງ ຕໍ່ການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ;

8. ຮັບເອົາຜູ້ຂັບລົດ ທີ່ບໍ່ມີໃບຂັບຂີ່, ບໍ່ມີມາລະຍາດ, ຕິດເຫຼົ້າ, ຕິດຢາເສບຕິດ ແລະ ສິ່ງມຶນເມົາອື່ນໆ;

9. ເອົາຂອບທາງເປັນບ່ອນບໍລິການ ແລະ ສ້ອມແປງລົດ, ຈອດຢາງລົດ ແລະ ບໍລິການອື່ນ ທີ່ເປັນການກີດຂວາງການຈະລາຈອນ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## **ມາດຕາ 145 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການ ໃຫ້ວິສາຫະກິດ ກ່ຽວກັບການຈະລາຈອນທາງບົກ;

2. ເປີດເຜີຍຂໍ້ມູນ ກ່ຽວກັບການປະມູນໂຄງການ ກໍ່ສ້າງ, ສ້ອມແປງ ແລະ ຕິດຕັ້ງກົດຈະການຈະລາຈອນທາງບົກ;

3. ສົມຮູ້ຮ່ວມຄິດ, ຂໍເອົາ, ທວງເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

4. ເມີນເສີຍ ຕໍ່ໜ້າທີ່ຮັບຜິດຊອບຂອງຕົນ, ກົດໜ່ວງຖ່ວງດຶງ ເອກະສານກ່ຽວກັບການຈະລາຈອນທາງບົກ, ເມີນເສີຍຕໍ່ການກະທຳທີ່ບໍ່ຖືກຕ້ອງ ຂອງຜູ້ດຳເນີນທຸລະກິດ;

5. ຕັ້ງຈຸດກວດຍານພາຫະນະຕາມທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ;

6. ໃຊ້ວາຈາ ທ່າທີບໍ່ສຸພາບ, ນາບຂູ່ ຜູ້ນຳໃຊ້ທາງ ແລະ ຜູ້ຂັບຂີ່ລົດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## **ມາດຕາ 146 ຂໍ້ຫ້າມສຳລັບຜູ້ໂດຍສານ**

ຫ້າມຜູ້ໂດຍສານ ມີພຶດຕິກຳ ດັ່ງນີ້:

1. ສົ່ງສຽງດັງ, ສ້າງຄວາມວຸ້ນວາຍ ຫຼື ກະທຳໃດໜຶ່ງ ທີ່ເປັນການລົບກວນສະມາທິ ເຮັດໃຫ້ຜູ້ຂັບຂີ່ບໍ່ສະດວກໃນການບັງຄັບລົດ;

2. ຢືນຢູ່ກາງກະບະ ຫຼື ນັ່ງຂອບກະບະ, ໄຂປະຕູລົດໃນເວລາທີ່ລົດຍັງແລ່ນຢູ່;

3. ຖິ້ມນ້ຳລາຍ ຫຼື ຖິ້ມຂີ້ເຫຍື້ອອອກຈາກລົດ;

4. ປ່ອນຫົວ, ເດ່ແຂນ ອອກຈາກລົດ ທີ່ກຳລັງແລ່ນ, ໄຂປະຕູລົດ ຫຼື ໂດດລົງລົດ ໃນເວລາລົດບໍ່ທັນຢຸດ;

5. ນັ່ງເທິງຫຼັງຄາລົດ ຫຼື ນັ່ງເທິງເຄື່ອງຂອງທີ່ບັນທຸກ, ນັ່ງເທິງລົດຂົນສົ່ງນ້ຳມັນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 147 ຂໍ້ຫ້າມສຳລັບຜູ້ຂັບຂີ່ ລົດຖີບ ແລະ ລົດໂມເປດ

ຫ້າມຜູ້ຂັບຂີ່ ລົດຖີບ ແລະ ລົດໂມເປດ ມີພຶດຕິກຳ ດັ່ງນີ້:

1. ປ່ອຍເຂົ້າລົດ ໃນເວລາຂັບຂີ່;

2. ຊ້ອນທ້າຍ ໂດຍບໍ່ມີແປ້ນຊ້ອນ ຫຼື ເອົາເດັກນ້ອຍຕ່ຳກວ່າ ຫ້າປີ ຊ້ອນທ້າຍ ໂດຍບໍ່ມີເບາະນັ່ງສະເພາະ;

3. ບັນທຸກເຄື່ອງຂອງທີ່ມີຄວາມຍາວເກີນ ໜຶ່ງ ແມັດ ຈາກທ້າຍລົດ ແລະ/ຫຼື ຫົວລົດ, ມີຄວາມກວ້າງເກີນ ຂ້າງລະ ຫ້າສິບ ຊັງຕີແມັດ ຫຼື ບັນທຸກເຄື່ອງຂອງທີ່ກີດຂວາງການບັນຊາລົດ;

4. ຂັບຂີ່ລົດບໍ່ໃສ່ໝວກກັນກະທົບ ສຳລັບລົດໂມເປດ;

5. ຂັບຂີ່ຕາມທາງມ້າລາຍ;

6. ຂັບຂີ່ລົດແກ່ກັນ ຍົກເວັ້ນແກ່ລໍ້ທີ່ບັນທຸກເຄື່ອງຂອງຮັບໃຊ້ ໃນການເດີນທາງໄກ ທີ່ອອກແບບໃຊ້ສຳລັບລົດຖີບ ຫຼື ລົດໂມເປດໂດຍສະເພາະ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ X
## ການຄຸ້ມຄອງ ແລະ ກວດກາ ວຽກງານກິດຈະລາຈອນທາງບົກ

ມາດຕາ 148 ອົງການຄຸ້ມຄອງ ແລະ ກວດກາ ວຽກງານກິດຈະລາຈອນທາງບົກ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານກິດຈະລາຈອນທາງບົກ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານກິດຈະລາຈອນທາງບົກ ປະກອບມີ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ;

4. ອົງການປົກຄອງບ້ານ.

ມາດຕາ 149 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ ກ່ຽວກັບກິດຈະລາຈອນທາງບົກ ລວມທັງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ ໃນຂອບເຂດທົ່ວປະເທດ;

3. ຕິດຕາມກວດກາການຕິດຕັ້ງ ແລະ ສ້ອມແປງປ້າຍ ແລະ ເຄື່ອງໝາຍສັນຍານຈະລາຈອນທາງບົກ;

4. ຄົ້ນຄວ້າ ຈັດສັນງົບປະມານ ສໍາລັບວຽກງານຄວາມປອດໄພທາງຫຼວງ ໃຫ້ແກ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

5. ຝຶກອົບຮົມຄູຝຶກ ຂອງພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການອື່ນທີ່ກ່ຽວຂ້ອງຂອງ ແຂວງ, ນະຄອນຫຼວງ;

6. ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຄໍາຮ້ອງທຸກ ແລະ ຄໍາຕິຊົມ ຂອງປະຊາຊົນ ຕໍ່ກັບວຽກງານ ຈະລາຈອນທາງບົກ;

7. ກວດສອບ ຄວາມປອດໄພໃນການສັນຈອນຕາມທາງຫຼວງ ແລະ ຖະໜົນ ລວມທັງ ກວດກາ, ແກ້ໄຂ ຈຸດທີ່ມັກເກີດອຸບປະຕິເຫດຕາມທາງຫຼວງ ແລະ ຖະໜົນ;

8. ປະສານສົມທົບ ກັບກົມຕໍາຫຼວດຈະລາຈອນ ລົງກວດກາສະຖານທີ່ເກີດອຸບປະຕິເຫດ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 150 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະກອບຄໍາເຫັນ ໃສ່ຮ່າງ ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດໍາເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດໍາເນີນງານ ກ່ຽວກັບ ວຽກງານກິດຈະລາຈອນທາງບົກ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ໃນການຈັດຕັ້ງໂຄສະນາ, ເຜີຍແຜ່ ກິດຈະລາຈອນທາງບົກ ໃຫ້ແກ່ພະນັກງານ, ປະຊາຊົນ, ຜູ້ຂັບຂີ່ ຢູ່ຂັ້ນ ສູນກາງ ແລະ ທ້ອງຖິ່ນ;

4. ກວດກາເອກະສານຂອງ ຍານພາຫະນະ ແລະ ຜູ້ຂັບຂີ່, ສຶກສາອົບຮົມ, ນໍາໃຊ້ມາດຕະການປັບໃໝ ຕໍ່ຜູ້ລະເມີດກິດຈະລາຈອນທາງບົກ;

5. ກັກ ຜູ້ຂັບຂີ່ຍານພາຫະນະທີ່ລະເມີດກິດຈະລາຈອນທາງບົກທີ່ເກີດອຸບປະຕິເຫດ ຊຶ່ງມີຄົນບາດເຈັບ ຫຼື ເສຍຊີວິດ, ກັກ ຫຼື ຍຶດ ຍານພາຫະນະທີ່ກ່ຽວຂ້ອງໄວ້ ເພື່ອດໍາເນີນຄະດີ;

6. ຮັບ ແລະ ບັນທຶກ ແຈ້ງຄວາມ ກ່ຽວກັບຄະດີອຸບປະຕິເຫດການຈະລາຈອນທາງບົກ, ອອກຄໍາສັ່ງ ແລະ ນໍາໃຊ້ມາດຕະການສືບສວນ-ສອບສວນ ລວມທັງແຕ່ງຕັ້ງ ຜູ້ຊ່ຽວຊານ, ຄະນະຮັບຜິດຊອບ ເພື່ອດໍາເນີນຄະດີ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 151 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດໍາເນີນງານ ກ່ຽວກັບ ວຽກງານ ກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ ພາຍໃນແຂວງ, ນະຄອນຫຼວງ;

3. ຕິດຕັ້ງ, ສ້ອມແປງປ້າຍ ແລະ ເຄື່ອງໝາຍສັນຍານ ຈະລາຈອນທາງບົກ;

4. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງໂຄສະນາ, ເຜີຍແຜ່ ກິດຈະລາຈອນທາງບົກ ໃຫ້ແກ່ ນັກຮຽນ, ນັກສຶກສາ, ພະນັກງານ ພາຍໃນ ແຂວງ, ນະຄອນຫຼວງ;

5. ກວດສອບ ຄວາມປອດໄພໃນການສັນຈອນ ຕາມທາງຫຼວງ ແລະ ຖະໜົນ ລວມທັງກວດກາປ້າຍ, ສັນຍານ, ເຄື່ອງໝາຍ ຈະລາຈອນ ແລະ ສິ່ງປະກອບດ້ານຄວາມປອດໄພ, ຈຸດທີ່ມັກເກີດອຸບປະຕິເຫດຕາມທາງຫຼວງ ແລະ ຖະໜົນ;

6. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ລົງກວດກາສະຖານທີ່ເກີດອຸບປະຕິເຫດທີ່ມີຄົນບາດເຈັບ ຫຼື ເສຍຊີວິດ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 152 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ ພາຍໃນ ແຂວງ, ນະຄອນຫຼວງ;

3. ຈັດຕັ້ງການກວດກາການຈະລາຈອນທາງບົກ ພາຍໃນ ແຂວງ, ນະຄອນຫຼວງ;

4. ກວດກາເອກະສານຂອງ ຍານພາຫະນະ ແລະ ຜູ້ຂັບຂີ່, ສຶກສາອົບຮົມ, ນຳໃຊ້ມາດຕະການປັບໃໝຕໍ່ຜູ້ລະເມີດກິດຈະລາຈອນທາງບົກ;

5. ລະບາຍການສັນຈອນ ພ້ອມທັງປະຈຳການປົກກະຕິ ພາຍໃນ ແຂວງ, ນະຄອນຫຼວງ;

6. ຄົ້ນຄວ້າແກ້ໄຂຄະດີອຸບປະຕິເຫດຕາມ ທາງຫຼວງ ແລະ ຖະໜົນ ພາຍໃນ ແຂວງ, ນະຄອນຫຼວງ;

7. ສຶກສາອົບຮົມ, ໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ໃຫ້ປະຊາຊົນ ກ່ຽວກັບກິດຈະລາຈອນທາງບົກ ໂດຍມີການປະສານສົມທົບກັບພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການອື່ນທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫຼວງ;

8. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ກິດຈະລາຈອນ ຂອງຜູ້ຂັບຂີ່ ແລະ ຍານພາຫະນະທຸກຊະນິດຕາມທາງຫຼວງ ແລະ ຖະໜົນ ຢ່າງເຂັ້ມງວດເພື່ອປ້ອງກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງການຈະລາຈອນ;

9. ກັກ ຜູ້ຂັບຂີ່ຍານພາຫະນະ ທີ່ລະເມີດກິດຈະລາຈອນທາງບົກ ທີ່ເກີດອຸບປະຕິເຫດ ທີ່ມີຄົນບາດເຈັບ ຫຼື ເສຍຊີວິດ, ກັກ ຫຼື ຍຶດ ຍານພາຫະນະທີ່ກ່ຽວຂ້ອງໄວ້ ເພື່ອດຳເນີນຄະດີ;

10. ຮັບ ແລະ ບັນທຶກ ແຈ້ງຄວາມ ກ່ຽວກັບຄະດີອຸບປະຕິເຫດການຈະລາຈອນທາງບົກ, ອອກຄຳສັ່ງ ແລະ ນຳໃຊ້ມາດຕະການສືບສວນ-ສອບສວນ ລວມທັງແຕ່ງຕັ້ງ ຜູ້ຊ່ຽວຊານ, ຄະນະຮັບຜິດຊອບ ເພື່ອດຳເນີນຄະດີ;

11. ເກັບກຳ, ສັງລວມ ສະຖິຕິອຸບປະຕິເຫດ ແລະ ປະລິມານການສັນຈອນຕາມທາງຫຼວງ ແລະ ຖະໜົນ ພາຍໃນ ແຂວງ, ນະຄອນຫຼວງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ກະຊວງປ້ອງກັນຄວາມສະຫງົບ, ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 153 ສິດ ແລະ ໜ້າທີ່ ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ ພາຍໃນ ເມືອງ, ເທດສະບານ, ນະຄອນ;

3. ສຶກສາອົບຮົມ, ໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ໃຫ້ປະຊາຊົນ ກ່ຽວກັບກິດຈະລາຈອນທາງບົກ ໂດຍມີການປະສານສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ແລະ ຫ້ອງການອື່ນ ທີ່ກ່ຽວຂ້ອງ;

4. ກວດສອບຄວາມປອດໄພຕາມ ທາງຫຼວງ ແລະ ຖະໜົນ ລວມທັງກວດກາ ແລະ ປົກປັກຮັກສາ ປ້າຍ, ສັນຍານ, ເຄື່ອງໝາຍ ຈະລາຈອນ ແລະ ສິ່ງປະກອບດ້ານຄວາມປອດໄພ, ຈຸດທີ່ມັກເກີດອຸບປະຕິເຫດຕາມທາງຫຼວງ ແລະ ຖະໜົນ;

5. ປະສານສົມທົບ ກັບກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ລົງກວດກາສະຖານທີ່ເກີດອຸບປະຕິເຫດທີ່ມີຄົນບາດເຈັບ ຫຼື ເສຍຊີວິດ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 154 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກກອງ ບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ໂຄສະນາເຜີຍແຜ່ລະບຽບການ, ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານກິດຈະລາຈອນທາງບົກ ພາຍໃນເມືອງ, ເທດສະບານ, ນະຄອນ;

3. ກວດກາການຈະລາຈອນທາງບົກ ພາຍໃນເມືອງ, ເທດສະບານ, ນະຄອນ;

4. ກວດກາເອກະສານຂອງ ຍານພາຫະນະ ແລະ ຜູ້ຂັບຂີ່, ສຶກສາອົບຮົມ, ນຳໃຊ້ມາດຕະການປັບໃໝ ຕໍ່ຜູ້ລະເມີດກິດຈະລາຈອນທາງບົກ;

5. ລະບາຍການສັນຈອນ ພ້ອມທັງປະຈຳການປົກກະຕິ ພາຍໃນເມືອງ, ເທດສະບານ, ນະຄອນ;

6. ຄົ້ນຄວ້າແກ້ໄຂຄະດີອຸບປະຕິເຫດຕາມ ທາງຫຼວງ ແລະ ຖະໜົນ ພາຍໃນເມືອງ, ເທດສະບານ, ນະຄອນ;

7. ສຶກສາອົບຮົມ, ໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ໃຫ້ປະຊາຊົນ ກ່ຽວກັບກິດຈະລາຈອນທາງບົກ ໂດຍມີການປະສານສົມທົບກັບຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ຫ້ອງການອື່ນ ທີ່ກ່ຽວຂ້ອງ;

8. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ກົດຈະລາຈອນ ຂອງຜູ້ຂັບຂີ່ຍານພາຫະນະທຸກຊະນິດຕາມທາງຫຼວງ ແລະ ຖະໜົນ ຢ່າງເຂັ້ມງວດ ເພື່ອປ້ອງກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງການຈະລາຈອນ;

9. ເກັບກຳ, ສັງລວມ ສະຖິຕິອຸບປະຕິເຫດ ແລະ ປະລິມານການສັນຈອນຕາມທາງຫຼວງ ແລະ ຖະໜົນພາຍໃນ ເມືອງ, ເທດສະບານ, ນະຄອນ;

10. ລົງເກັບກຳຂໍ້ມູນ ແລະ ພິສູດຫຼັກຖານ ກ່ຽວກັບການເກີດອຸບປະຕິເຫດ ພາຍໃນ ເມືອງ, ເທດສະບານ, ນະຄອນ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກິດຈະລາຈອນທາງບົກ ໃຫ້ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 155 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານກິດຈະລາຈອນທາງບົກ ອົງການປົກຄອງບ້ານມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບວຽກງານກິດຈະລາຈອນທາງບົກ;

2. ປຸກລະດົມປະຊາຊົນ ປະກອບສ່ວນປົກປັກຮັກສາ ປ້າຍສັນຍານ, ໄຟສັນຍານ ແລະ ເຄື່ອງໝາຍຈະລາຈອນ ຕາມທາງຫຼວງ ແລະ ຖະໜົນ ໃນຂອບເຂດບ້ານຂອງຕົນ ພ້ອມທັງລາຍງານການເປ່ເພເສຍຫາຍຂອງປ້າຍ, ໄຟສັນຍານ ແລະ ເຄື່ອງໝາຍດັ່ງກ່າວ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ຢ່າງທັນການ;

3. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ ຄວບຄຸມການຈະລາຈອນທາງບົກລວມທັງເຂົ້າຮ່ວມ ແລະ ອຳນວຍຄວາມສະດວກ ໃນການແກ້ໄຂຄະດີອຸບປະຕິເຫດພາຍໃນບ້ານຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 156 ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງປ້ອງກັນປະເທດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ອົງການກາແດງລາວ, ອົງການຈັດຕັ້ງມະຫາຊົນ ມີ ສິດ ແລະ ໜ້າທີ່ ໃນການປະສານສົມທົບ, ອຳນວຍຄວາມສະດວກ, ຈັດຕັ້ງປະຕິບັດ ແລະ ໃຫ້ການຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານກິດຈະລາຈອນທາງບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 157 ເນື້ອໃນການກວດກາ

ການກວດກາວຽກງານກິດຈະລາຈອນທາງບົກ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍວ່າດ້ວຍກິດຈະລາຈອນທາງບົກ;
2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກັບວຽກງານກິດຈະລາຈອນທາງບົກ;
3. ການປະຕິບັດແຜນງານ, ໂຄງການ ແລະ ກິດຈະກໍາ ກ່ຽວກັບວຽກງານກິດຈະລາຈອນທາງບົກ;
4. ການດໍາເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ.

### ມາດຕາ 158 ຮູບການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບຮີບດ່ວນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາໃຫ້ຮູ້ລ່ວງໜ້າ.

ການກວດກາແບບຮີບດ່ວນ ແມ່ນການກວດກາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຮູ້ລ່ວງໜ້າ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 159 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນ ເຂົ້າໃນວຽກງານຄວາມປອດໄພຕາມທາງຫຼວງ, ຄວາມເປັນລະບຽບຮຽບຮ້ອຍໃນການຈະລາຈອນ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທາງຫຼວງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 160 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດໍາເນີນຄະດີຕາມແຕ່ລະກໍລະນີເບົາ ຫຼື ໜັກ.

### ມາດຕາ 161 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ມາດຕາ 162 ມາດຕະການທາງວິໄນ

ເຈົ້າໜ້າທີ່ຄວບຄຸມຈະລາຈອນທາງບົກ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ໄດ້ລະເມີດກໍາລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາຊຶ່ງບໍ່ເປັນການກະທໍາຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທໍາຜິດ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກລົງວິໄນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ພະນັກງານ-ລັດຖະກອນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເຊັ່ນ ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ໃຫ້ອອກຈາກລັດຖະການ.

**ມາດຕາ 163 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກໍາລັດສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຂັບຂີ່ຍານພາຫະນະໃນສະພາບມຶນເມົາເກີນອັດຕາທີ່ກໍານົດ;
2. ຂັບຂີ່ຍານພາຫະນະດ້ວຍຄວາມໄວເກີນກໍານົດ;
3. ຂັບຂີ່ລົດຈັກບໍ່ໃສ່ໝວກກັນກະທົບ;
4. ກັ້ງຄັນຮົ່ມຂີ່ລົດຈັກ;
5. ໃຊ້ໂທລະສັບ, ເບິ່ງໂທລະພາບ ຫຼື ຫຼິ້ນເຄື່ອງເອເລັກໂຕນິກໃນເວລາຂັບຂີ່;
6. ລະເມີດໄຟອໍານາດ, ປ້າຍສັນຍານ ແລະ ເຄື່ອງໝາຍຈະລາຈອນທາງບົກ;
7. ບໍ່ມີໃບຂັບຂີ່ຕາມປະເພດຍານພາຫະນະທີ່ຕົນຂັບ, ບໍ່ມີເອກະສານຍານພາຫະນະ;
8. ແລ່ນຜິດທາງທີ່ກໍານົດໄວ້;
9. ແລ່ນລົດທີ່ມີສຽງດັງເກີນມາດຕະຖານ;
10. ໄຕ້ໄຟຕາສູງບໍ່ຖືກຕາມກົດຈະລາຈອນ;
11. ບໍ່ໄຕ້ໄຟຕາໃນເວລາຄໍ່າມືດ;
12. ໄຕ້ໄຟຕາດຽວສໍາລັບລົດສີ່ລໍ້ຂຶ້ນໄປ;
13. ບໍ່ໄຕ້ໄຟຕາ ໃນຍາມກາງເວັນ ເວລາສະພາບອາກາດມືດມົວ ເຊັ່ນ ຝົນຕົກແຮງ, ໝອກລົງໜາ, ຂີ້ຝຸ່ນໄງ່;
14. ມີຄວັນດໍາ, ຄວັນຂາວ ເກີນມາດຕະຖານ;
15. ບໍ່ມີຫ້າມລໍ້ ຫຼື ບໍ່ມີມາດຕະຖານ, ບໍ່ມີແວ່ນສ່ອງຫຼັງ;
16. ສ້າງຄວາມເປິເປື້ອນ ຫຼື ສິ່ງກີດຂວາງຕາມທາງຫຼວງ;
17. ບັນທຸກເກີນນໍ້າໜັກ, ເກີນຂະໜາດ, ເກີນຈໍານວນ;
18. ດັດແປງເຕັກນິກຂອງຍານພາຫະນະໂດຍບໍ່ໄດ້ຮັບອະນຸຍາດ;
19. ລະເມີດກົດຈະລາຈອນ, ກົດໝາຍ ແລະ ລະບຽບການ ອື່ນທີ່ກ່ຽວຂ້ອງ.

ສໍາລັບອັດຕາປັບໃໝໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 164 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກໍາລັດສະບັບນີ້ ແລະ ໄດ້ສ້າງຄວາມເສຍຫາຍ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 165 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດກໍາລັດສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ.

**ມາດຕາ 166 ມາດຕະການໂທດເພີ່ມ**

ນອກຈາກຖືກມາດຕະການ ທີ່ໄດ້ກໍານົດໄວ້ໃນມາດຕາ 161, 162, 163 ແລະ ມາດຕາ 164 ຂອງດໍາລັດສະບັບນີ້ແລ້ວ ຜູ້ກະທໍາຜິດຍັງຈະຖືກປະຕິບັດໂທດເພີ່ມ ເປັນຕົ້ນ ການຕັດຄະແນນໃບຂັບຂີ່ຍານພາຫະນະ ຫຼື ຖອນໃບຂັບຂີ່ຍານພາຫະນະ ຕາມລະບຽບການ.

ການໂຈະ ຫຼື ສະເໜີຖອນໃບທະບຽນວິສາຫະກິດ ກ່ຽວກັບການຈະລາຈອນທາງບົກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 167 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການຈັດຕັ້ງປະຕິບັດດໍາລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 168 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນລັດຖະການ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ທອງລຸນ ສີສຸລິດ**

# ເອກະສານຊ້ອນທ້າຍ
# ຂອງດຳລັດວ່າດ້ວຍ ກົດຈະລາຈອນທາງບົກ

## 1. ປ້າຍເຕືອນອັນຕະລາຍ

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
|  1.1 | 1.1 ຜ່ານທາງລົດໄຟ ມີແນວກັ້ນ ຫຼື ມີຄົນຄວບຄຸມ. ກ່ອນຈະຂັບລົດຜ່ານປ້າຍນີ້ໄປ ຄວນຜ່ອນຄວາມໄວລົງ ແລະ ກຽມຢຸດ ເມື່ອມີສຽງສັນຍານຂອງເຈົ້າໜ້າທີ່ ຫຼື ເມື່ອເຫັນເຈົ້າໜ້າທີ່ໄດ້ປິດທາງ. |
|  1.2 | 1.2 ທາງຂ້າງໜ້າມີທາງລົດໄຟທີ່ບໍ່ມີແນວກັ້ນ ຫຼື ບໍ່ມີຄົນຄວບຄຸມ. ໃຫ້ຜູ້ຂັບຂີ່ ຫຼຸດຜ່ອນຄວາມໄວລົງ, ສັງເກດເບິ່ງລົດໄຟຈາກທາງກ້ຳຂວາ, ກ້ຳຊ້າຍ ຖ້າເຫັນວ່າມີ ລົດໄຟແລ່ນມາ ໃຫ້ຢຸດລົດຫ່າງຈາກລາງລົດໄຟຢ່າງໜ້ອຍ ຫ້າ ແມັດ, ເມື່ອເຫັນວ່າ ປອດໄພແລ້ວຈຶ່ງໄປຕໍ່ໄດ້. |
|   1.3.1 1.3.2 | 1.3 ຈຳນວນສາຍທາງລົດໄຟ.<br>1.3.1 ທາງລົດໄຟທີ່ມີທາງດ່ຽວ;<br>1.3.2 ທາງລົດໄຟທີ່ມີທາງຄູ່. |
|  1.4.1 1.4.2 1.4.3 1.4.4 1.4.5 1.4.6 | 1.4.1-1.4.6 ເຕືອນໃຫ້ຮູ້ວ່າໃກ້ຈະເຖິງທາງລົດໄຟ. ຢູ່ເສັ້ນທາງນອກເຂດຊຸມຊົນ ໃນໄລຍະ  ສາມຮ້ອຍ ແມັດ, ສອງຮ້ອຍ ແມັດ ແລະ ໜຶ່ງຮ້ອຍ ແມັດ ຕາມລຳດັບ. |
|  1.5 | 1.5 ຂ້າງໜ້າມີທາງລົດລາງຕັດຜ່ານ. |
|  1.6 | 1.6 ທາງຄົບສະເໝີກັນ. ລົດທີ່ຢູ່ທາງກ້ຳຂວາມືທີ່ບໍ່ມີສິ່ງກີດຂວາງ ມີສິດໄປກ່ອນ. ທາງສີ່ແຍກສະເໝີກັນເອີ້ນວ່າເປັນທາງຄົບທາງແຍກທີ່ບໍ່ມີການຄວບຄຸມ, ເປັນທາງແຍກທີ່ມີປະລິມານການສັນຈອນໜ້ອຍກວ່າ ສອງຮ້ອຍ ຄັນຕໍ່ວັນ. |
|    1.7.1 1.7.2 1.7.3 | 1.7.1-1.7.3 ທາງນ້ອຍຄົບທາງໃຫຍ່.<br>1.7.1 ທາງນ້ອຍຕັດກັບທາງໃຫຍ່;<br>1.7.2 ທາງນ້ອຍຄົບທາງໃຫຍ່ກ້ຳຂວາ;<br>1.7.3 ທາງນ້ອຍຄົບທາງໃຫຍ່ກ້ຳຊ້າຍ. |
|  1.8 | 1.8 ຂ້າງໜ້າເປັນທາງວົງວຽນ. ໃຫ້ລ້ຽວໄປຕາມທິດຂອງລູກສອນ ແລະ ປ່ອຍທາງ ໃຫ້ລົດທີ່ຢູ່ໃນວົງວຽນໄປກ່ອນ. |
|  1.9 | 1.9 ທາງແຍກຂ້າງໜ້າມີສັນຍານດ້ວຍແສງໄຟ. |

| | |
|---|---|
|  1.10 | 1.10 ຂົວເດື່ອງ ຫຼື ຂົວຍົກ ຫຼື ເຮືອບັກ. ທາງຂ້າງໜ້າມີຂົວຍົກທີ່ອາດຈະຖືກເປີດເພື່ອໃຫ້ເຮືອແລ່ນຜ່ານໄປ-ມາ ຫຼື ເປັນຂົວເດື່ອງ. |
|  1.11 | 1.11 ທາງສຸດຢູ່ແຄມຕາຝັ່ງນໍ້າ. ບອກໃຫ້ຮູ້ວ່າ ທາງສິ້ນສຸດຢູ່ແຄມນໍ້າ ຫຼື ທາງລຽບຕາມແຄມນໍ້າ. |
|   1.12.1 1.12.2 | 1.12 ທາງໂຄ້ງອັນຕະລາຍ.<br>1.12.1 ທາງໂຄ້ງໄປທາງກ້ຳຂວາ;<br>1.12.2 ທາງໂຄ້ງໄປທາງກ້ຳຊ້າຍ. |
|   1.13.1 1.13.2 | 1.13 ທາງທົບສອກອັນຕະລາຍ.<br>1.13.1 ເລີ່ມຈາກທາງກ້ຳຂວາ;<br>1.13.2 ເລີ່ມຈາກທາງກ້ຳຊ້າຍ. |
|   1.14 | 1.14 ທາງລົງຄ້ອຍສູງຊັນ. ທາງຂ້າງໜ້າເປັນທາງລົງພູທີ່ມີຄວາມຊັນເປັນເປີເຊັນຕາມ ທີ່ໄດ້ກຳນົດໄວ້ໃນປ້າຍ, ຕ້ອງຂັບລົດໃຫ້ຊ້າລົງ, ໃຊ້ເກຍຕ່ຳ ແລະ ແນບເຂົ້າທາງກ້ຳຂວາໃຫ້ຫຼາຍ; ຫ້າມປ່ຽນເກຍ, ປົດເກຍຫວ່າງ ຫຼື ມອດຈັກລົດ ຢ່າງເດັດຂາດ. |
|   1.15 | 1.15 ທາງຂຶ້ນຄ້ອຍສູງຊັນ. ທາງຂ້າງໜ້າເປັນທາງຂຶ້ນພູທີ່ມີຄວາມຊັນເປັນເປີເຊັນຕາມທີ່ໄດ້ກຳນົດໄວ້ໃນປ້າຍ ຜູ້ຂັບຂີ່ອາດຈະແນມບໍ່ເຫັນລົດທີ່ສວນທາງມາ ຕ້ອງຂັບລົດໃຫ້ຊ້າລົງ ແລະ ແນບເຂົ້າທາງກ້ຳຂວາໃຫ້ຫຼາຍ. |
|  1.16 | 1.16 ທາງມື່ນ. ທາງຂ້າງໜ້າອາດເກີດອຸບປະຕິເຫດໄດ້ງ່າຍ ຕ້ອງຂັບລົດໃຫ້ຊ້າລົງ ແລະ ລະວັງລົດມື່ນຖະໄຫຼ ບໍ່ຄວນປຽບຫ້າມລໍ້ແຮງ, ການຢຸດລົດ, ການຜ່ອນຄວາມໄວ ຫຼື ການລ້ຽວລົດໃນທາງມື່ນ ຕ້ອງເຮັດດ້ວຍຄວາມລະມັດລະວັງເປັນພິເສດ. |
|  1.17 | 1.17 ທາງຫຼຸບໂນນ. ບ່ອນທາງທີ່ເປັນຄື້ນ, ທາງຫຼຸບໂນນ ຫຼື ທາງທີ່ມີໜ້າທາງບໍ່ຮາບພຽງດີ. |
|  1.18 | 1.18 ລົດກະໂດດ. ທາງຂ້າງໜ້າມີການປ່ຽນລະດັບຢ່າງກະທັນຫັນ ເຊັ່ນ ບໍລິເວນສົ້ນຂົວ, ທາງຂ້າມທໍ່ລະບາຍນໍ້າ ແລະ ຄັນຄູຄວບຄຸມຄວາມໄວ ຕ້ອງຂັບລົດໃຫ້ຊ້າລົງ ແລະ ມີຄວາມລະມັດລະວັງ. |
|  1.19 | 1.19 ທາງມີຫີນຟົ້ງ. ຕອນທາງທີ່ອາດຈະມີຫີນແຮ່, ຫີນຂົບທີ່ໃຊ້ປູໜ້າທາງ ຟົ້ງອອກຈາກຕີນລົດທີ່ແລ່ນສວນທາງກັນ ຫຼື ແລ່ນໄປໃນທິດທາງດຽວກັນ, ຕ້ອງຂັບລົດໃຫ້ຊ້າລົງ ແລະ ມີຄວາມລະມັດລະວັງ. |

| | |
|---|---|
| <br>1.20 | 1.20 ແຄມທາງອັນຕະລາຍ. ແຄມທາງ ທີ່ມີການເປ່ເພ, ເສຍຫາຍ, ທາງແຄມເຫວ ຊຶ່ງມີຄວາມສ່ຽງ ທີ່ອາດຈະເປັນອັນຕະລາຍໄດ້. |
|   <br>1.21.1 1.21.2 1.21.3 | 1.21.1-1.21.3 ທາງຮອມໄປໜ້າ ຫຼື ຊ່ອງຈະລາຈອນຫຼຸດລົງ.<br>1.21.1 ຈາກທັງສອງກ້ຳ;<br>1.21.2 ຈາກກ້ຳຂວາ;<br>1.21.3 ຈາກກ້ຳຊ້າຍ. |
| <br>1.22 | 1.22 ທາງແຄບເຂົ້າຂີວ. ເຕືອນລະວັງທາງໜ້າຊ່ອງຈະລາຈອນຈະແຄບລົງ ແລະ ເປັນທາງເຂົ້າຂີວ. |
| <br>1.23 | 1.23 ທາງຂ້າງໜ້າມີການສັນຈອນສອງທິດທາງ. ບອກໃຫ້ຮູ້ວ່າໃກ້ຈະສຸດເຂດທາງການສັນຈອນທິດທາງດຽວແລ້ວ. |
| <br>1.24 | 1.24 ຜ່ານທາງຄົນຍ່າງຂ້າມທາງ. |
| <br>1.25 | 1.25 ເດັກນ້ອຍ. ທາງຂ້າງໜ້າມີໂຮງຮຽນຢູ່ແຄມທາງ ຄວນຂັບລົດໃຫ້ຊ້າລົງ ແລະ ລະມັດລະວັງອຸບປະຕິເຫດທີ່ອາດຈະເກີດຂຶ້ນກັບເດັກນ້ອຍ. ຖ້າເດັກນັກຮຽນກຳລັງຂ້າມທາງຕ້ອງຢຸດລົດໃຫ້ນັກຮຽນຂ້າມໄປກ່ອນໂດຍປອດໄພ. ຖ້າເປັນຊົ່ວໂມງທີ່ໂຮງຮຽນກຳລັງມີການສອນບໍ່ຄວນບີບແກ ຫຼື ເຮັດໃຫ້ເກີດສຽງດັງລົບກວນເດັດຂາດ. |
| <br>1.26 | 1.26 ຂ້າງໜ້າຕັດກັບທາງລົດຖີບ. |
| <br>1.27 | 1.27 ທາງກຳລັງມີການສ້ອມແປງ. |
| <br>1.28 | 1.28 ສັດລ້ຽງ. ຕອນທາງທີ່ມີການເຄື່ອນຍ້າຍສັດ ຫຼື ບໍລິເວນທີ່ມີການລ້ຽງສັດເປັນປະຈຳ ຊຶ່ງອາດຈະມີສັດອອກມາຍ່າງຕາມເສັ້ນທາງ. |
| <br>1.29 | 1.29 ສັດປ່າ. ຕອນທາງທີ່ມັກມີສັດປ່າຂ້າມທາງ. |

| | |
|---|---|
| <br>1.30 | 1.30 ດິນເຈື່ອນ ຫຼື ຫີນຫຼົ່ນ. ຕອນທາງທີ່ອາດຈະມີດິນເຈື່ອນທັບທາງ ຫຼື ຫີນຫຼົ່ນຕົກລົງມາກອງຢູ່ກາງທາງ ໃຫ້ຂັບລົດຊ້າລົງ ແລະ ມີຄວາມລະມັດລະວັງ. |
| <br>1.31 | 1.31 ລົມປະທະ. ຕອນທາງທີ່ມີລົມແຮງປະທະກັບລົດ ຊຶ່ງອາດຈະເຮັດໃຫ້ຄວບຄຸມຍາກ ເຊັ່ນ  ບ່ອນທາງໂລ່ງ, ເທິງຂົວ ປາກທາງເຂົ້າ, ອອກ ອຸໂມງ. |
| <br>1.32 | 1.32 ຍົນບິນຕໍ່າ. ບ່ອນທາງຜ່ານແລວຍົນບິນຂຶ້ນ, ລົງ ຊຶ່ງມີສຽງດັງຂອງຍົນ ທີ່ອາດເຮັດໃຫ້ຜູ້ຂັບຂີ່ຕື່ນຕົກໃຈໄດ້. |
| <br>1.33 | 1.33 ອຸໂມງ. ທາງຜ່ານອຸໂມງ ທີ່ບໍ່ມີໄຟເຍືອງ ຫຼື ໄລຍະແນມເຫັນ ປາກທາງອອກທີ່ຈໍາກັດ. |
| <br>1.34 | 1.34 ການສັນຈອນຕິດຂັດ. ທາງທີ່ຈະເຂົ້າໄປມີການສັນຈອນຕິດຂັດເປັນປະຈໍາ ຫຼື ເປັນບາງເວລາ ເຊັ່ນ ຕອນເຊົ້າ ແລະ ຕອນແລງ. |
| <br>1.35 | 1.35 ເຂດອັນຕະລາຍ. ຕອນທາງທີ່ອາດມີອັນຕະລາຍອື່ນໆ ທີ່ບໍ່ໄດ້ກໍານົດໄວ້ໃນໝວດປ້າຍເຕືອນອັນຕະລາຍ. |
|  <br>1.36.1 1.36.2 | 1.36 ເຄື່ອງໝາຍນໍາທາງ. ບອກແລວທາງບ່ອນເປັນທາງໂຄ້ງ.<br>1.36.1 ໂຄ້ງໄປທາງກໍ້າຂວາ;<br>1.36.2 ໂຄ້ງໄປທາງກໍ້າຊ້າຍ. |
| <br>1.37.1<br><br>1.37.2<br><br>1.37.3 | 1.37 ທິດທາງຂອງການລ້ຽວ. ບອກທິດທາງສໍາລັບການລ້ຽວລົດຕາມທາງໂຄ້ງ ທີ່ມີໄລຍະແນມເຫັນທີ່ຈໍາກັດ ຫຼື ບອກທາງເວັ້ນຕາມສະຖານທີ່ກໍ່ສ້າງ ແລະ ສ້ອມແປງທາງ.<br>1.37.1 ໄປທາງກໍ້າຂວາ;<br>1.37.2 ໄປທາງກໍ້າຊ້າຍ<br>1.37.3 ທິດທາງຂອງການຈະລາຈອນຢູ່ບ່ອນທາງສາມແຍກຮູບໂຕ T. |

## 2. ປ້າຍບອກສິດ (Priority Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
| <br>2.1 | 2.1  ທາງໃຫຍ່. ໝາຍເຖິງທາງທີ່ໄດ້ຮັບບູລິມະສິດໃນການສັນຈອນຕາມທາງຄົບ ຫຼື ທາງແຍກ. ຜູ້ທີ່ຢູ່ໃນທາງໃຫຍ່ມີສິດໃນການຂັບຂີ່ລົດ ຜ່ານທາງຄົບ ຫຼື ທາງແຍກ ໄປກ່ອນລົດທີ່ມາຈາກທາງນ້ອຍ. |
| <br>2.2 | 2.2  ສຸດເຂດທາງໃຫຍ່. ໝາຍເຖິງທາງ ທີ່ກໍານົດໃຫ້ເປັນທາງໃຫຍ່ ໄດ້ສິ້ນສຸດລົງ ເມື່ອຄົບກັບທາງອື່ນທີ່ເປັນທາງໃຫຍ່ກວ່າ. ຜູ້ຂັບຂີ່ຕ້ອງປ່ອຍທາງໃຫ້ລົດຄັນອື່ນ ໄປກ່ອນ. |

| | |
|---|---|
|  2.3 | 2.3 ປ່ອຍທາງ. ຜູ້ຂັບຂີ່ຕ້ອງໄດ້ປ່ອຍທາງໃຫ້ລົດ ແລະ ຄົນຍ່າງທີ່ຢູ່ໃນທາງຂ້າງໜ້າໄປກ່ອນ ໃນກໍລະນີມີປ້າຍເພີ່ມ 8.13 ບອກທິດ ຂອງທາງໃຫຍ່ ແມ່ນໃຫ້ປ່ອຍທາງໃຫ້ລົດທີ່ມາຈາກກ້ຳທີ່ກຳນົດໃຫ້ເປັນທາງໃຫຍ່ ໄປກ່ອນ. |
|  2.4 | 2.4 ຢຸດ. ຫ້າມການສັນຈອນໂດຍບໍ່ຢຸດ, ຜູ້ຂັບຂີ່ຕ້ອງຢຸດລົດຢູ່ບ່ອນເສັ້ນຢຸດ ຖ້າບໍ່ມີ ໃຫ້ຢຸດຢູ່ບ່ອນແລວຂອບຂອງທາງທີ່ຕັດຜ່ານນັ້ນ.<br>ຜູ້ຂັບຂີ່ຕ້ອງໄດ້ປ່ອຍທາງໃຫ້ລົດທີ່ຢູ່ໃນທາງຂ້າງໜ້າໄປກ່ອນ ໃນກໍລະນີມີປ້າຍເພີ່ມ 8.13 ຕາມທິດຂອງທາງໃຫຍ່.<br>ປ້າຍນີ້ ຍັງສາມາດຕິດຕັ້ງຢູ່ບ່ອນຂ້າມທາງລົດໄຟ ຫຼື ດ່ານກວດກາ. ໃນກໍລະນີນີ້ ຜູ້ຂັບຂີ່ຕ້ອງຢຸດຢູ່ຕໍ່ໜ້າເສັ້ນຢຸດ ຫຼື ຖ້າບໍ່ມີເສັ້ນຢຸດ ໃຫ້ຢຸດຢູ່ຕໍ່ໜ້າປ້າຍ. |
|  2.5 | 2.5 ໃຫ້ລົດສວນທາງມາໄປກ່ອນ. ຜູ້ຂັບຂີ່ຕ້ອງຢຸດລົດຢູ່ບ່ອນປ້າຍຕັ້ງຢູ່ ແລະ ຖ້າໃຫ້ລົດສວນທາງມາໄປກ່ອນ ຖ້າຫາກຢູ່ທາງໜ້າມີລົດຢຸດລໍຢູ່ກ່ອນແລ້ວກໍໃຫ້ຢຸດຢູ່ຖັດກັນມາຕາມລຳດັບ ເມື່ອລົດສວນທາງມາຜ່ານໄປໝົດແລ້ວ ຈຶ່ງເຄື່ອນລົດໄປຕໍ່ໄດ້. |
|  2.6 | 2.6 ໄປກ່ອນລົດທີ່ສວນທາງມາ. ລົດທີ່ຢູ່ກ້ຳລູກສອນສີຂາວມີສິດ ຂັບຜ່ານບ່ອນທາງແຄບນັ້ນໄປກ່ອນ. |

### 3. ປ້າຍຫ້າມ (Prohibitory or Restrictive Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
|  3.1 | 3.1 ຫ້າມເຂົ້າ. ຫ້າມລົດທຸກປະເພດ ຜ່ານເຂົ້າໄປໃນທາງທີ່ມີປ້າຍນີ້ຕັ້ງຢູ່. |
|  3.2 | 3.2 ຫ້າມການສັນຈອນ. ຫ້າມການສັນຈອນຂອງລົດທຸກປະເພດ. |
|  3.3 | 3.3 ຫ້າມການສັນຈອນຂອງລົດສີ່ລໍ້ຂຶ້ນໄປ ທຸກປະເພດ. ລວມທັງລົດສາມລໍ້. |
|  3.4 | 3.4 ຫ້າມການສັນຈອນຂອງລົດບັນທຸກ. ຫ້າມການສັນຈອນຂອງລົດບັນທຸກ ທີ່ມີນ້ຳລວມເກີນ ສາມພັນຫ້າຮ້ອຍ ກິໂລກຼາມ ຫຼື ນ້ຳໜັກທີ່ກຳນົດໄວ້ໃນປ້າຍ ລວມທັງລົດລາກແກ່. |
|  3.5 | 3.5 ຫ້າມການສັນຈອນຂອງລົດຈັກ. |
|  3.6 | 3.6 ຫ້າມການສັນຈອນຂອງລົດໄຖນາ ແລະ ກົນຈັກກະສິກຳທຸກປະເພດ. |

| | |
|---|---|
|  3.7 | 3.7 ຫ້າມການສັນຈອນຂອງລົດລາກແກ່ຫາງລາກ ແລະ ເຄິ່ງຫາງລາກ ທຸກປະເພດ ລວມທັງລົດແກ່ກັນ. |
|  3.8 | 3.8 ຫ້າມການສັນຈອນຂອງລົດມ້າ ຫຼື ກວຽນ. ທີ່ລາກແກ່ດ້ວຍແຮງສັດ ລວມທັງການເຄື່ອນຍ້າຍສັດລ້ຽງ. |
|  3.9 | 3.9 ຫ້າມການສັນຈອນຂອງລົດຖີບ ແລະ ລົດໂມເປດ. |
|  3.10 | 3.10 ຫ້າມຄົນຍ່າງ. ຫ້າມຄົນເຂົ້າໄປຍ່າງຕາມທາງທີ່ມີປ້າຍນີ້ ຊຶ່ງເປັນທາງທີ່ລົດແລ່ນດ້ວຍຄວາມໄວສູງຕໍ່ເນື່ອງ ທີ່ອາດຈະເປັນອັນຕະລາຍຕໍ່ຄົນຍ່າງຕາມທາງ ຫຼື ຍ່າງຂ້າມທາງ. |
|  3.11 | 3.11 ຈຳກັດນ້ຳໜັກບັນທຸກສູງສຸດ. ຫ້າມລົດບັນທຸກເຄື່ອງຂອງ ທີ່ມີນ້ຳໜັກລວມເກີນທີ່ກຳນົດໄວ້ໃນປ້າຍຜ່ານເຂົ້າໄປໃນທາງນີ້. |
|  3.12 | 3.12 ນ້ຳໜັກລົງເພົາຈຳກັດ. ຫ້າມການສັນຈອນຂອງລົດຂົນສົ່ງ ທີ່ມີນ້ຳໜັກລົງເພົາ ໃດໜຶ່ງ ເກີນກວ່າທີ່ໄດ້ກຳນົດໄວ້ໃນປ້າຍ. |
|  3.13 | 3.13 ລວງສູງຈຳກັດ. ຫ້າມການສັນຈອນຂອງລົດຂົນສົ່ງທຸກປະເພດ ທີ່ບັນທຸກເຄື່ອງຂອງ ຫຼື ລົດເປົ່າ ທີ່ມີຄວາມສູງເກີນກວ່າທີ່ໄດ້ກຳນົດໄວ້ໃນປ້າຍ. |
|  3.14 | 3.14 ຄວາມກ້ວາງຈຳກັດ. ຫ້າມການສັນຈອນຂອງລົດຂົນສົ່ງທຸກປະເພດ ທີ່ບັນທຸກເຄື່ອງຂອງ ຫຼື ລົດເປົ່າ ທີ່ມີຄວາມກວ້າງເກີນກວ່າທີ່ໄດ້ກຳນົດໄວ້ໃນປ້າຍ. |
|  3.15 | 3.15 ລວງຍາວຈຳກັດ. ຫ້າມການສັນຈອນຂອງລົດຂົນສົ່ງທຸກປະເພດ ທີ່ບັນທຸກເຄື່ອງຂອງ ຫຼື ລົດເປົ່າ ທີ່ມີຄວາມຍາວເກີນກວ່າທີ່ໄດ້ກຳນົດໄວ້ໃນປ້າຍ. |
|  3.16 | 3.16 ໄລຍະຫ່າງຕາມຫຼັງຈຳກັດ. ຫ້າມແລ່ນຕາມຫຼັງລົດຄັນທາງໜ້າດ້ວຍໄລຍະຫ່າງໜ້ອຍກວ່າ ທີ່ໄດ້ກຳນົດໄວ້ໃນປ້າຍ |
|  3.17.1  3.17.2  3.17.3 | 3.17 ຫ້າມສືບຕໍ່ສັນຈອນ.<br>3.17.1 ດ່ານກວດກາຂອງພາສີ. ຫ້າມລົດສືບຕໍ່ສັນຈອນເພື່ອໃຫ້ພາສີກວດກາ;<br>3.17.2 ທາງອັນຕະລາຍ. ຫ້າມລົດເຂົ້າໄປ ເນື່ອງຈາກທາງຂ້າງໜ້າເປັນອັນຕະລາຍ ເຊັ່ນ ມີອຸບປະຕິເຫດ, ທາງເປ່ເພ ຫຼື ອັນຕະລາຍອື່ນໆຈາກໄພທຳມະຊາດ;<br>3.17.3 ຢຸດກວດກາ. ລົດທຸກຄັນຕ້ອງຢຸດ ເພື່ອໃຫ້ເຈົ້າໜ້າທີ່ກວດກາ. |
|  3.18.1  3.18.2 | 3.18 ຫ້າມລ້ຽວ.<br>3.18.1 ຫ້າມລ້ຽວຂວາ;<br>3.18.2 ຫ້າມລ້ຽວຊ້າຍ. |
|  3.19 | 3.19 ຫ້າມລ້ຽວກັບຄືນ. |

| | |
|---|---|
|  3.20 | 3.20 ຫ້າມຊີງຂຶ້ນໜ້າ. ຫ້າມຊີງຂຶ້ນໜ້າ ລົດຄັນອື່ນ ທີ່ກຳລັງແລ່ນໄປທິດທາງດຽວກັນ ຍົກເວັ້ນລົດທີ່ມີຄວາມໄວຕ່ຳ, ກວຽນ ຫຼື ລໍ້ທີ່ລາກແກ່ດ້ວຍສັດ, ລົດຈັກສອງລໍ້ ແລະ ລົດໂມເປດ. |
|  3.21 | 3.21 ສຸດເຂດຫ້າມຊີງຂຶ້ນໜ້າ. |
|  3.22 | 3.22 ຫ້າມລົດບັນທຸກ ຊີງຂຶ້ນໜ້າ. |
|  3.23 | 3.23 ສຸດເຂດຫ້າມລົດບັນທຸກ ຊີງຂຶ້ນໜ້າ. |
|  3.24 | 3.24 ຄວາມໄວສູງສຸດຈຳກັດ. ຫ້າມຜູ້ຂັບຂີ່ລົດທຸກຊະນິດແລ່ນເກີນຄວາມໄວ (ກມ/ຊມ) ຕາມທີ່ໄດ້ກຳນົດໄວ້ໃນປ້າຍ. |
|  3.25 | 3.25 ສຸດເຂດຄວາມໄວຈຳກັດ. |
|  3.26 | 3.26 ຫ້າມໃຊ້ສັນຍານດ້ວຍສຽງ. ຫ້າມບີບແກ ຍົກເວັ້ນກໍລະນີສຸກເສີນ ເພື່ອຫຼີກເວັ້ນການເກີດອຸບປະຕິເຫດ ລວມທັງການຫ້າມ ການກະທຳໃດໜຶ່ງ ທີ່ອາດເກີດສຽງດັງ ລົບກວນຜູ້ອື່ນ. |
|  3.27 | 3.27 ຫ້າມຈອດລົດ. ຫ້າມຢຸດ ແລະ ຫ້າມຈອດລົດທຸກຊະນິດ ແຕ່ບ່ອນຕັ້ງປ້າຍໄປຈົນເຖິງທາງແຍກຂ້າງໜ້າ ຫຼື ຕາມໄລຍະ ຫຼື ຂອບເຂດທີ່ໄດ້ກຳນົດໄວ້ໃນປ້າຍເພີ່ມ. |
|  3.28 | 3.28 ຫ້າມຈອດລົດ. ຫ້າມຈອດລົດທຸກຊະນິດແຕ່ບ່ອນຕັ້ງປ້າຍໄປຈົນເຖິງທາງແຍກຂ້າງໜ້າ ຫຼື ຕາມໄລຍະ ຫຼື ຂອບເຂດທີ່ລະບຸໃນປ້າຍເພີ່ມ. |
|  3.29 | 3.29 ຫ້າມຈອດລົດໃນວັນຄີກ. ຫ້າມຈອດລົດທຸກຊະນິດຕາມວັນທີໃນປະຕິທິນ ທີ່ເປັນເລກຄີກແຕ່ບ່ອນຕັ້ງປ້າຍໄປຈົນເຖິງທາງແຍກຂ້າງໜ້າ ຫຼື ຕາມໄລຍະ ຫຼື ຂອບເຂດທີ່ລະບຸໃນປ້າຍເພີ່ມ. |
|  3.30 | 3.30 ຫ້າມຈອດລົດໃນວັນຄູ່. ຫ້າມຈອດລົດທຸກຊະນິດຕາມວັນທີໃນປະຕິທິນ ທີ່ເປັນເລກຄູ່ແຕ່ບ່ອນຕັ້ງປ້າຍໄປຈົນເຖິງທາງແຍກຂ້າງໜ້າ ຫຼື ຕາມໄລຍະ ຫຼື ຂອບເຂດທີ່ລະບຸໃນປ້າຍເພີ່ມ. |
|  3.31 | 3.31 ສຸດເຂດຫ້າມທຸກປະເພດ. ໝາຍເຖິງຈຸດສຸດທ້າຍຂອງເຂດບັງຄັບໃຊ້ບັນດາປ້າຍຫ້າມທີ່ໄດ້ຕິດຕັ້ງໄວ້ກ່ອນໜ້ານັ້ນ ຊຶ່ງລວມມີປ້າຍ: 3.16, 3.20, 3.22, 3.24, 3.26-3.30. |
|  3.32 | 3.32 ຫ້າມການສັນຈອນຂອງລົດບັນທຸກວັດຖຸອັນຕະລາຍ. ຫ້າມການສັນຈອນຂອງລົດທີ່ມີເຄື່ອງໝາຍ ສິນຄ້າອັນຕະລາຍ. |

| | |
|---|---|
| <br>3.33 | 3.33 ຫ້າມການສັນຈອນຂອງລົດບັນທຸກວັດຖຸລະເບີດ ຫຼື ວັດຖຸໄວໄຟ. ຫ້າມການສັນຈອນຂອງລົດຂົນສົ່ງວັດຖຸອັນຕະລາຍ ທີ່ປະກອບດ້ວຍສານລະເບີດ ຫຼື ວັດຖຸໃນໝວດທີ່ກຳນົດໄວ້ວ່າເປັນວັດຖຸໄວໄຟ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍຂົນສົ່ງທາງບົກ. |

## 4. ປ້າຍກຳນົດ (Mandatory Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
| <br>4.1.1 4.1.2 4.1.3<br>4.1.4 4.1.5 4.1.6 | 4.1 ກຳນົດທິດທາງການສັນຈອນຕາມທາງແຍກ<br>4.1.1 ໃຫ້ໄປຊື່;<br>4.1.2 ໃຫ້ລ້ຽວຂວາ;<br>4.1.3 ໃຫ້ລ້ຽວຊ້າຍ;<br>4.1.4 ໃຫ້ໄປຊື່ ຫຼື ລ້ຽວຂວາ;<br>4.1.5 ໃຫ້ໄປຊື່ ຫຼື ລ້ຽວຊ້າຍ;<br>4.1.6 ໃຫ້ລ້ຽວຂວາ ຫຼື ລ້ຽວຊ້າຍ. |
| <br>4.2.1 4.2.2 4.2.3 | 4.2 ກຳນົດທິດທາງໃນການເວັ້ນສິ່ງກີດຂວາງຕາມທາງ.<br>4.2.1 ໃຫ້ເວັ້ນໄປທາງກ້ຳຂວາ;<br>4.2.2 ໃຫ້ເວັ້ນໄປທາງກ້ຳຊ້າຍ;<br>4.2.3 ເວັ້ນໄປທາງກ້ຳຂວາ ຫຼື ກ້ຳຊ້າຍ. |
| <br>4.3 | 4.3 ທາງວົງວຽນ. ໃຫ້ລ້ຽວໄປຕາມທິດຂອງລູກສອນ. |
| <br>4.4 | 4.4 ທາງສຳລັບລົດຖີບ. ໃຫ້ໃຊ້ສຳລັບການສັນຈອນຂອງລົດຖີບ ແລະ ລົດໂມເປດ. ໃນກໍລະນີທາງບໍ່ມີບ່າທາງ ຫຼື ທາງຍ່າງ ຄົນຍ່າງສາມາດໃຊ້ທາງນີ້ໄດ້. |
| <br>4.5 | 4.5 ທາງຄົນຍ່າງ. ທາງທີ່ກຳນົດໃຫ້ເປັນທາງຄົນຍ່າງເທົ່ານັ້ນ. |
| <br>4.6 | 4.6 ຄວາມໄວຕ່ຳສຸດ. ບັງຄັບໃຫ້ຜູ້ຂັບຂີ່ຕ້ອງແລ່ນດ້ວຍຄວາມໄວຫຼາຍກວ່າຫ້າສິບ ກມ/ຊມ ຂຶ້ນເມືອ ແຕ່ບໍ່ໃຫ້ເກີນ ຄວາມໄວສູງສຸດ ທີ່ກົດໝາຍໄດ້ລະບຸໄວ້. |
| <br>4.7 | 4.7 ສຸດເຂດຄວາມໄວຕ່ຳສຸດ. |
| <br>4.8.1 4.8.2 4.8.3 | 4.8 ທິດທາງການສັນຈອນຂອງລົດຂົນສົ່ງວັດຖຸອັນຕະລາຍ.<br>4.8.1 ໃຫ້ໄປຊື່;<br>4.8.2 ໃຫ້ລ້ຽວຂວາ;<br>4.8.3 ໃຫ້ລ້ຽວຊ້າຍ. |

## 5. ປ້າຍບັງຄັບສະເພາະ (Special Regulation Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
|  5.1 | 5.1 ທາງຫຼວງພິເສດ (ທາງດ່ວນ). ທາງທີ່ມີການກຳນົດລະບຽບການສັນຈອນສະເພາະ. |
|  5.2 | 5.2 ສຸດເຂດທາງຫຼວງພິເສດ (ທາງດ່ວນ). |
|  5.3 | 5.3 ທາງສຳລັບການສັນຈອນຂອງລົດໂອໂຕ. ທາງທີ່ໄດ້ກຳນົດໃຫ້ລົດປະເພດລົດຈັກ, ລົດສາມລໍ້, ສີ່ລໍ້ ແລະ ລົດບັດ. |
|  5.4 | 5.4 ສຸດເຂດທາງສຳລັບການສັນຈອນຂອງລົດໂອໂຕ. |
|  5.5 | 5.5 ທາງທີ່ມີການສັນຈອນທິດທາງດຽວ. ທາງ ຫຼື ໜ້າທາງ ທີ່ກຳນົດໃຫ້ລົດທຸກປະເພດຕ້ອງແລ່ນໄປໃນທິດທາງດຽວກັນໝົດ. |
|  5.6 | 5.6 ສຸດເຂດທາງທີ່ມີການສັນຈອນທິດທາງດຽວ. |
|   5.7.1 5.7.2 | 5.7 ອອກສູ່ທາງທີ່ມີການສັນຈອນທິດທາງດຽວ.<br>5.7.1 ການສັນຈອນໄປທາງກ້ຳຂວາ;<br>5.7.2 ການສັນຈອນໄປທາງກ້ຳຊ້າຍ. |
|  5.8 | 5.8 ທາງການສັນຈອນໄປ, ກັບ. ທາງທີ່ມີຊ່ອງຈະລາຈອນບາງຊ່ອງອາດມີການປ່ຽນທິດທາງການຈະລາຈອນໄປ, ກັບ ຕາມເວລາທີ່ກຳນົດ ແລະ ຄວບຄຸມດ້ວຍໄຟສັນຍານ ຕອນເຊົ້າເປັນຂາໄປ, ຕອນແລງເປັນຂາກັບ. |
|  5.9 | 5.9 ສຸດເຂດທາງການສັນຈອນໄປ, ກັບ. |
|  5.10 | 5.10 ເຂົ້າສູ່ທາງການສັນຈອນໄປ, ກັບ. |
|  5.11 | 5.11 ທາງທີ່ມີຊ່ອງຈະລາຈອນຂອງລົດໂດຍສານປະຈຳທາງ. ທາງທີ່ມີການແບ່ງຊ່ອງຈະລາຈອນສະເພາະສຳລັບລົດໂດຍສານປະຈຳທາງ ທີ່ແລ່ນສວນກັບການສັນຈອນຂອງລົດອື່ນໆ. |

| | |
|---|---|
| <br>5.12 | 5.12 ສຸດເຂດທາງທີ່ມີຊ່ອງຈະລາຈອນຂອງລົດໂດຍສານປະຈຳທາງ. |
| <br>5.13.1 5.13.2 | 5.13 ເຂົ້າສູ່ທາງທີ່ມີຊ່ອງຈະລາຈອນຂອງລົດໂດຍສານປະຈຳທາງ.<br>5.13.1 ໄປທາງກ້ຳຂວາ;<br>5.13.2 ໄປທາງກ້ຳຊ້າຍ. |
| <br>5.14 | 5.14 ຊ່ອງຈະລາຈອນສຳລັບລົດຂົນສົ່ງຜູ້ໂດຍສານປະຈຳທາງ. ຊ່ອງຈະລາຈອນໃຊ້ສະເພາະສຳລັບການສັນຈອນຂອງລົດຂົນສົ່ງຜູ້ໂດຍສານສາທາລະນະທີ່ແລ່ນຕາມສາຍທາງ ແລະ ໄປທິດທາງດຽວກັບລົດທົ່ວໄປ. ປ້າຍນີ້ມີຜົນບັງຄັບໃຊ້ສະເພາະຊ່ອງຈະລາຈອນທີ່ມີປ້າຍແຂວນຢູ່. ໃນກໍລະນີປ້າຍນີ້ຕັ້ງຢູ່ແຄມທາງກ້ຳຂວາ ແມ່ນໃຊ້ສຳລັບຊ່ອງຈະລາຈອນຂວາສຸດ. |
| <br>5.15.1<br><br>5.15.2<br><br><br>5.15.3<br><br>5.15.4 5.15.5 5.15.6<br><br>5.15.7<br><br><br>5.15.8 | 5.15 ທິດທາງສັນຈອນຕາມຊ່ອງຈະລາຈອນ.<br>5.15.1 ຈຳນວນຊ່ອງຈະລາຈອນ ແລະ ທິດທາງສັນຈອນຕາມແຕ່ລະຊ່ອງຈະລາຈອນ;<br>5.15.2 ທິດທາງທີ່ອະນຸຍາດໃຫ້ສັນຈອນຕາມຊ່ອງຈະລາຈອນ;<br>5.15.3 ຈຸດເລີ່ມຕົ້ນຊ່ອງຈະລາຈອນເພີ່ມ. ຊ່ອງຈະລາຈອນເພີ່ມສຳລັບລົດບັນທຸກເວລາຂຶ້ນຄ້ອຍ ຫຼື ຊ່ອງຈະລາຈອນສຳລັບຫຼຸດຜ່ອນຄວາມໄວ;<br>5.15.4 ຈຸດເລີ່ມຕົ້ນຊ່ອງຈະລາຈອນເພີ່ມ. ເພີ່ມຊ່ອງຈະລາຈອນຢູ່ທາງກາງ ສຳລັບການສັນຈອນຢູ່ທາງທີ່ມີສາມຊ່ອງຈະລາຈອນ;<br>5.15.5 ສຸດເຂດຊ່ອງຈະລາຈອນເພີ່ມ ສຳລັບບ່ອນທາງຄ້ອຍ ຫຼື ຫຼຸດຜ່ອນຄວາມໄວ.<br>5.15.6 ສຸດເຂດຊ່ອງຈະລາຈອນເພີ່ມ ແລະ ຂ້າງໜ້າຊ່ອງຈະລາຈອນຈະຫຼຸດລົງເຫຼືອຊ່ອງຈະລາຈອນດຽວ.<br>5.15.7 ກຳນົດທິດທາງການສັນຈອນຕາມຊ່ອງຈະລາຈອນ;<br>5.15.8 ຈຳນວນຊ່ອງຈະລາຈອນ ແລະ ລະບຽບການຂັບຂີ່ຕາມແຕ່ລະຊ່ອງຈະລາຈອນ. |
| <br>5.16 | 5.16 ບ່ອນຢຸດລົດຂົນສົ່ງຜູ້ໂດຍສານປະຈຳທາງ. |
| <br>5.17 | 5.17 ບ່ອນຢຸດລົດລາງ. |

| | |
|---|---|
|  5.18 | 5.18 ບ່ອນຈອດລົດຕັກຊີ. |
|  5.19.1 5.19.2 | 5.19 ບ່ອນຄົນຍ່າງຂ້າມທາງ ຫຼື ທາງມ້າລາຍ. |
|  5.20 | 5.20 ໂນນຄວບຄຸມຄວາມໄວ. ບອກຕໍາແໜ່ງຂອງໂນນຫຼຸດຜ່ອນຄວາມໄວ ທີ່ໃຫ້ຜູ້ຂັບຂີ່ຕ້ອງຫຼຸດຜ່ອນຄວາມໄວ ແລະ ລະມັດລະວັງ. |
|  5.21 | 5.21 ເຂດທີ່ຢູ່ອາໄສ. ພື້ນທີ່ທີ່ຜູ້ຂັບຂີ່ຕ້ອງໄດ້ລະມັດລະວັງສູງ ແລ່ນດ້ວຍຄວາມໄວຕ່ຳ ແລະ ປະຕິບັດຕາມລະບຽບການສະເພາະທີ່ກຳນົດໄວ້. |
|  5.22 | 5.22 ສຸດເຂດທີ່ຢູ່ອາໄສ. |
|  5.23.1 5.23.2 | 5.23 ຈຸດເລີ່ມຕົ້ນເຂດຊຸມຊົນໜາແໜ້ນ.<br>5.23.1 ແບບຕົວອັກສອນ;<br>5.23.2 ແບບສັນຍາລັກ ຫຼື ເຄື່ອງໝາຍ. |
|  5.24.1 5.24.2 | 5.24 ສຸດເຂດຊຸມຊົນໜາແໜ້ນ.<br>5.24.1 ແບບຕົວອັກສອນ;<br>5.24.2 ແບບສັນຍາລັກ ຫຼື ເຄື່ອງໝາຍ. |
|  5.25 | 5.25 ຈຸດເລີ່ມຕົ້ນເຂດບ້ານ. |
|  5.26 | 5.26 ສຸດເຂດບ້ານ. |
|  5.27 | 5.27 ເຂດຫ້າມຈອດລົດເປັນບາງເວລາ. |
|  5.28 | 5.28 ສຸດເຂດຫ້າມຈອດ. |
|  5.29 | 5.29 ເຂດຈອດລົດມີການຄວບຄຸມ. ບ່ອນຈອດລົດທີ່ຕ້ອງໄດ້ປະຕິບັດຕາມຮູບແບບການຈອດ ໃນປ້າຍເພີ່ມ. |

| | |
|---|---|
|  5.30 | 5.30 ສຸດເຂດຈອດລົດມີການຄວບຄຸມ. |
|  5.31 | 5.31 ເຂດຄວບຄຸມຄວາມໄວສູງສຸດ. |
|  5.32 | 5.32 ສຸດເຂດຄວບຄຸມຄວາມໄວສູງສຸດ. |
|  5.33 | 5.33 ເຂດຄົນຍ່າງ. ພື້ນທີ່ທີ່ອະນຸຍາດໃຫ້ແຕ່ຄົນຍ່າງເທົ່ານັ້ນ. |
|  5.34 | 5.34 ສຸດເຂດຄົນຍ່າງ. |

## 6. ປ້າຍແນະນຳທາງ ຫຼື ທີ່ຕັ້ງ (Direction, Position or Indication Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
|  6.1 | 6.1 ແນະນຳຄວາມໄວສູງສຸດຈຳກັດ. ແນະນຳການໃຊ້ຄວາມໄວສູງສຸດສຳລັບການຈະລາຈອນຂອງລົດທຸກຊະນິດ ຕາມທາງໃນ ສປປ ລາວ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຈະລາຈອນທາງບົກ ຂອງ ສປປ ລາວ ໃຫ້ແກ່ລົດຂົນສົ່ງຂອງຕ່າງປະເທດທີ່ເຂົ້າມາ ສປປ ລາວ. |
|  6.2 | 6.2 ຄວາມໄວແນະນຳ. ຄວາມໄວທີ່ປອດໄພສຳລັບການຈະລາຈອນຕາມຊ່ອງໃດໜຶ່ງຂອງທາງ ທີ່ເຫັນວ່າອາດຈະເປັນອັນຕະລາຍ. |
|   6.3.1 6.3.2 | 6.3 ບ່ອນລ້ຽວກັບ.<br>6.3.1 ບ່ອນລ້ຽວກັບ;<br>6.3.2 ເຂດສຳລັບໃຫ້ ລ້ຽວກັບ. ໄລຍະທາງ ຫຼື ເຂດທີ່ອະນຸຍາດໃຫ້ລ້ຽວກັບ. ຫ້າມລ້ຽວຊ້າຍ. |
|  6.4 | 6.4 ບ່ອນຈອດລົດ. ສະຖານທີ່ສຳລັບຈອດລົດທົ່ວໄປ. |
|  6.5 | 6.5 ຊ່ອງຈະລາຈອນສຳລັບຢຸດລົດ. ຊ່ອງຈະລາຈອນພິເສດໃຊ້ສຳລັບການຢຸດລົດ ຢູ່ບ່ອນທາງຊັນ ໃນກໍລະນີຫ້າມລໍ້ຂັດຂ້ອງ. |

| | |
|---|---|
| <br>6.6 | 6.6 ທາງລອດພື້ນ. ບ່ອນຄົນຍ່າງຂ້າມທາງໂດຍໃຊ້ທາງລອດພື້ນ ຫຼື ອຸໂມງ. |
| <br>6.7 | 6.7 ຂົວຂ້າມທາງ. ບ່ອນຄົນຍ່າງຂ້າມທາງໂດຍໃຊ້ຂົວຂ້າມທາງ. |
| <br>6.8.1 6.8.2 6.8.3 | 6.8 ທາງສຸດ ຫຼື ທາງຕັນ.<br>6.8.1 ທາງໄປຊື່ເປັນທາງຕັນ;<br>6.8.2 ທາງຮ່ອມກ້ຳຂວາເປັນທາງຕັນ;<br>6.8.3 ທາງຮ່ອງກ້ຳຊ້າຍເປັນທາງຕັນ. |
| <br>6.9.1 | 6.9 ປ້າຍບອກທິດທາງລ່ວງໜ້າ. ບອກໃຫ້ຮູ້ເຖິງທາງໄປສູ່ເຂດຊຸມຊົນ ຫຼື ເປົ້າໝາຍຕ່າງໆ. ຢູ່ໃນປ້າຍ 6.9.1, 6.9.2 ອາດຈະມີການໃສ່ເຄື່ອງໝາຍ ທາງດ່ວນ, ລະຫັດທາງ ຫຼື ສັນຍາລັກອື່ນໆນຳ. ຢູ່ດ້ານລຸ່ມຂອງປ້າຍ ມີຕົວເລກບອກໄລຍະແຕ່ບ່ອນຕັ້ງປ້າຍຫາທາງແຍກດັ່ງກ່າວ. |
| <br>6.9.2 | 6.9.2 ປ້າຍບອກທິດທາງລ່ວງໜ້າ. |
| <br>6.9.3 | 6.9.3 ແຜນວາດທາງການສັນຈອນ. |
| <br><br>6.10.1<br><br><br>6.10.2 | 6.10 ປ້າຍບອກປາຍທາງ.<br>6.10.1, 6.10.2 ບອກທິດທາງໄປຫາສະຖານທີ່ຕ່າງໆ, ຕົວເລກ ບອກເຖິງໄລຍະທາງຫາເປົ້າໝາຍ ເປັນກິໂລແມັດ. ນອກນັ້ນ ໃນປ້າຍອາດຈະມີການໃສ່ຮູບ ຫຼື ສັນຍາລັກຕ່າງໆໃສ່ນຳ ເພື່ອໃຫ້ເຂົ້າໃຈປ້າຍໄດ້ງ່າຍ ແລະ ໄວຂຶ້ນ. |
| <br><br>6.11 | 6.11 ຊື່ສະຖານທີ່. ບອກຊື່ສະຖານທີ່ ຊຶ່ງບໍ່ແມ່ນຊື່ຂອງເຂດຊຸມຊົນ ເຊັ່ນ ຊື່ຖະໜົນ, ລຳນ້ຳ, ຫ້ວຍນ້ຳ, ໜອງນ້ຳ, ພູ, ຂົວ ແລະ ອື່ນໆ. |
| <br>6.12 | 6.12 ບອກໄລຍະທາງໄປຫາເປົ້າໝາຍ. |
| <br><br>6.13.1<br><br><br>6.13.2 | 6.13 ລະຫັດທາງ.<br>6.13.1 ບອກລະຫັດ ຫຼື ເລກໝາຍຂອງທາງ;<br>6.13.2 ບອກທິດທາງໄປຫາທາງດັ່ງກ່າວ. |

| | |
|---|---|
| <br>6.14.1<br> <br>6.14.2 6.14.3 | 6.14 ທິດທາງການສັນຈອນຂອງລົດຂົນສົ່ງສິນຄ້າ.<br>6.14.1 ໃຫ້ໄປຊື່;<br>6.14.2 ໃຫ້ລ້ຽວຂວາ;<br>6.14.3 ໃຫ້ລ້ຽວຊ້າຍ. |
| <br>6.15 | 6.15 ເສັ້ນຢຸດ. ບ່ອນທີ່ລົດທຸກຄັນຕ້ອງໄດ້ຢຸດ ໃນກໍລະນີ ມີໄຟສັນຍານ ຫຼື ຜູ້ຄວບຄຸມການຈະລາຈອນ ຢູ່ບ່ອນທາງແຍກນັ້ນ. |
| <br>6.16 | 6.16 ແຜນວາດທາງເວັ້ນ. ບອກໃຫ້ຮູ້ວ່າທາງໄດ້ຖືກປິດຊົ່ວຄາວ ເພື່ອສ້ອມແປງ ແລະ ໃຫ້ເວັ້ນໄປຕາມທາງທີ່ກໍານົດໄວ້ໃນປ້າຍ |
| <br>6.17. | 6.17 ທິດທາງຂອງທາງເວັ້ນ. ບອກໃຫ້ຮູ້ວ່າທາງຂ້າງໜ້າຖືກປິດຊົ່ວຄາວ ແລະ ໃຫ້ເວັ້ນໄປຕາມທິດຂອງລູກສອນ. |
| <br>6.18.1 6.18.2 | 6.18 ແຜນວາດການປ່ຽນທາງຈະລາຈອນ. ບອກທິດທາງການສັນຈອນໃນກໍລະນີມີການສອ້ມແປງທາງ ຕາມທາງທີ່ມີແນວແບ່ງ ຫຼືກັ້ນທິດທາງການສັນຈອນ.<br>6.18.1 ໃຫ້ເວັ້ນໄປໃຊ້ຊ່ອງທາງເບື້ອງຂວາ;<br>6.18.2 ໃຫ້ກັບຄືນສູ່ຊ່ອງທາງເດີມຂອງຕົນ. |

7. ປ້າຍບໍລິການ (Information, Facilities or Service Signs)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
| <br>7.1 | 7.1 ສະຖານທີ່ປະຖົມພະຍາບານ. ສຸກສາລາ ຫຼື ໂຮງໝໍປະຈໍາບ້ານ, ເຂດ ຫຼື ຄຼີນິກເອກະຊົນ ທີ່ສາມາດໃຫ້ການປິ່ນປົວ ຫຼື ການພະຍາບານໃນເບື້ອງຕົ້ນ ກ່ອນນໍາສົ່ງໄປປິ່ນປົວຢູ່ໂຮງໝໍ. |
| <br>7.2 | 7.2 ໂຮງໝໍ. ສະຖານທີ່ປິ່ນປົວຜູ້ບາດເຈັບ ຊຶ່ງໝາຍເຖິງໂຮງໝໍເມືອງ, ແຂວງ ຫຼື ສູນກາງ ລວມທັງຄຼີນິກຂອງເອກະຊົນ ທີ່ຜູ້ປ່ວຍສາມາດນອນຄ້າງຄືນເພື່ອປິ່ນປົວສຸຂພາບຂອງຕົນ. |
| <br>7.3 | 7.3 ປໍ້ານໍ້າມັນ. ສະຖານທີ່ຕື່ມນໍ້າມັນເຊື້ອໄຟ, ນໍ້າມັນຫ້າມລໍ້, ນໍ້າມັນຄາດ, ນໍ້າມັນເຄື່ອງ ແລະ ອື່ນໆ ລວມທັງການບໍລິການຫ້ອງນໍ້າ, ຮ້ານຂາຍເຄື່ອງຍ່ອຍ ຊຶ່ງຜູ້ຂັບຂີ່ມັກຈະໃຊ້ເປັນສະຖານທີ່ພັກລົດ ໃນລະຫວ່າງການເດີນທາງນໍາດ້ວຍ. |
| <br>7.4 | 7.4 ສະຖານີກວດກາເຕັກນິກລົດ. ສະຖານທີ່ກວດກາສະພາບເຕັກນິກ ແລະ ສ້ອມແປງລົດ. |

| | |
|---|---|
|  7.5 | 7.5 ບ່ອນລ້າງລົດ. ສະຖານທີ່ ທີ່ໃຫ້ການບໍລິການທຳຄວາມສະອາດລົດ ແລະ ບາງເທື່ອ ຍັງມີການບໍລິການປ່ຽນຖ່າຍນ້ຳມັນເຄື່ອງ, ຕື່ມລົມຢາງພ້ອມ. |
|  7.6 | 7.6 ຮ້ານອາຫານ. ສະຖານທີ່ ທີ່ສາມາດຫາຊື້ເຄື່ອງກິນ ຫຼື ຮ້ານກິນດື່ມ. |
|  7.7 | 7.7 ນ້ຳດື່ມ. ສະຖານທີ່ບໍລິການນ້ຳດື່ມ ຫຼື ແຫຼ່ງນ້ຳທຳມະຊາດທີ່ສາມາດດື່ມໄດ້. |
|  7.8 | 7.8 ໂຮງແຮມ. ໂຮງແຮມ, ເຮືອນພັກ ຫຼື ສະຖານທີ່ພັກຄ້າງຄືນ. |
|  7.9 | 7.9 ສະຖານທີ່ພັກຄ້າງຄືນ. ສະຖານທີ່ ທີ່ສາມາດກາງເຕັ້ນນອນຄ້າງຄືນໄດ້. |
|  7.10 | 7.10 ສະຖານທີ່ພັກຜ່ອນ. ສະຖານທີ່ ທີ່ສາມາດພັກຜ່ອນ, ຊົມທຳມະຊາດ ຫຼື ພັກຜ່ອນ ກິນເຂົ້າປ່າໄດ້. |
|   7.11 | 7.11 ສະຖານີຕຳຫຼວດຈະລາຈອນ. |
|  7.12 | 7.12 ສະຖານີກວດກາລົດຂົນສົ່ງ. ບ່ອນກວດກາລົດຂົນສົ່ງສິນຄ້າ-ຜູ້ໂດຍສານລະຫວ່າງ ປະເທດ. |
|  7.13 | 7.13 ບ່ອນອາບນ້ຳ. ໜອງນ້ຳ, ຫ້ວຍ, ແມ່ນ້ຳລຳເຊ ຫຼື ຫາດຊາຍ ບ່ອນທີ່ສາມາດ ພັກຜ່ອນ ແລະ ລົງຫຼິ້ນນ້ຳໄດ້. |
|   7.14 | 7.14 ຫ້ອງນ້ຳສາທາລະນະ. |

# 8. ປ້າຍເພີ່ມ (Additional Panels)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ |
|---|---|
| <br>8.1.1 8.1.2<br><br>8.1.3 8.1.4 | 8.1 ໄລຍະທາງຫາເປົ້າໝາຍ.<br>8.1.1 ບອກໄລຍະທາງຈາກບ່ອນຕັ້ງປ້າຍຫາເຂດເປົ້າ ໝາຍຂ້າງໜ້າ;<br>8.1.2 ບອກໄລຍະທາງຈາກບ່ອນຕັ້ງປ້າຍ 2.3 ຫາທາງແຍກຂ້າງໜ້າ ໃນກໍລະນີທີ່ທາງແຍກນັ້ນມີປ້າຍ 2.4;<br>8.1.3, 8.1.4 ບອກໄລຍະທາງໄປຫາເປົ້າໝາຍທີ່ຢູ່ຂ້າງທາງ. |
| <br>8.2.1 8.2.2 8.2.3 8.2.4<br><br>8.2.5 8.2.6 | 8.2 ຂອບເຂດບັງຄັບໃຊ້.<br>8.2.1 ບອກຄວາມຍາວ ຫຼື ຂອບເຂດອັນຕະລາຍຂອງທາງ ຕາມທີ່ກໍານົດໄວ້ໃນປ້າຍເຕືອນອັນຕະລາຍ ຫຼື ຂອບເຂດການບັງຄັບໃຊ້ຂອງປ້າຍຫ້າມ ແລະ ປ້າຍແນະນໍາທາງ;<br>8.2.2 ບອກຂອບເຂດບັງຄັບໃຊ້ຂອງປ້າຍຫ້າມ 3.27-3.30;<br>8.2.3 ບອກຈຸດສິ້ນສຸດເຂດບັງຄັບໃຊ້ຂອງປ້າຍຫ້າມ 3.27-3.30;<br>8.2.4 ບອກໃຫ້ຜູ້ຂັບຂີ່ຮູ້ວ່າ ກໍາລັງຢູ່ໃນເຂດບັງຄັບໃຊ້ຂອງປ້າຍຫ້າມ 3.27-3.30;<br>8.2.5-8.2.6 ບອກທິດທາງ ແລະ ຂອບເຂດບັງຄັບໃຊ້ຂອງປ້າຍຫ້າມ 3.27-3.30 ໃນກໍລະນີທີ່ມີການຫ້າມຈອດຢູ່ຕາມແຄມເດີ່ນ, ລຽບອາຄານ ແລະ ຈຸດອື່ນໆ ທີ່ບໍ່ແມ່ນຢູ່ຕາມທາງ. |
| <br>8.3.1 8.3.2 8.3.3 | 8.3 ທິດທາງການບັງຄັບໃຊ້. ບອກທິດທາງການບັງຄັບໃຊ້ຂອງປ້າຍ ທີ່ຕິດຕັ້ງຢູ່ບ່ອນທາງແຍກ ຫຼື ທິດທາງໄປຫາຈຸດເປົ້າໝາຍ ທີ່ຢູ່ຕາມທາງ. |
| <br>8.4.1 8.4.2 8.4.3<br><br>8.4.4 8.4.5 8.4.6<br><br>8.4.7 8.4.8 | 8.4 ຊະນິດລົດ. ບອກຊະນິດລົດທີ່ກ່ຽວຂ້ອງກັບປ້າຍຈະລາຈອນ;<br>8.4.1 ບັງຄັບໃຊ້ກັບລົດບັນທຸກສິນຄ້າ ລວມທັງຫາງລາກທີ່ມີນໍ້າໜັກລວມເກີນ 3.500 ກິໂລກຣາມ;<br><br>8.4.3 ບັງຄັບໃຊ້ກັບລົດເບົາ ລວມທັງລົດບັນທຸກທີ່ມີນໍ້າໜັກລວມບໍ່ເກີນ 3.500 ກິໂລກຣາມ;<br>8.4.8 ບັງຄັບໃຊ້ກັບລົດບັນທຸກສິນຄ້າອັນຕະລາຍ. |
| <br>8.5.1 8.5.2 8.5.3<br><br>8.5.4 8.5.6 8.5.7<br><br>8.5.8 | 8.5 ວັນ, ເວລາ ບັງຄັບໃຊ້.<br>8.5.1 ໃນວັນເສົາ, ອາທິດ ແລະ ວັນພັກ ລັດຖະການອື່ນໆ;<br>8.5.2 ໃນວັນລັດຖະການ;<br>8.5.3 ວັນທີ່ປ້າຍມີຜົນບັງຄັບໃຊ້;<br>8.5.4 ບອກເວລາ ຫຼື ໄລຍະການບັງຄັບໃຊ້ປ້າຍ;<br>8.5.5-8.5.8 ບອກວັນ ແລະ ເວລາໃນການບັງຄັບໃຊ້ຂອງປ້າຍ. |

| | |
|---|---|
|  8.6.1 8.6.2 8.6.3 8.6.4 8.6.5 8.6.6 8.6.7 8.6.8 8.6.9 | 8.6 ວິທີ ຫຼື ຮູບແບບການຈອດລົດ.<br>8.6.1 ບອກໃຫ້ຮູ້ວ່າລົດທຸກຊະນິດຕ້ອງຈອດລຽບຕາມແລວຂອບທາງ;<br>8.6.2-8.6.9 ບອກວິທີ ຫຼື ຮູບແບບການຈອດລົດປະເພດລົດເບົາ ແລະ ລົດຈັກ ຕາມແຄມທາງ ແລະ ບ່າທາງ. |
|  8.7 | 8.7 ຈອດລົດມອດຈັກ. ບອກໃຫ້ຮູ້ວ່າຢູ່ບ່ອນຈອດທີ່ມີປ້າຍ 6.4 ອະນຸຍາດໃຫ້ ຈອດລົດໂດຍບໍ່ໃຫ້ຕິດຈັກປະໄວ້. |
|  8.8 | 8.8 ບໍລິການທີ່ຕ້ອງໄດ້ຈ່າຍເງິນ. ການບໍລິການຕ່າງໆ ທີ່ຕ້ອງໄດ້ຈ່າຍເງິນຄ່າບໍລິການ. |
|  8.9 | 8.9 ກຳນົດເວລາໃນການຈອດ. ກຳນົດເວລາສູງສຸດທີ່ອະນຸຍາດໃຫ້ຈອດລົດ ໃນ ບ່ອນທີ່ມີປ້າຍ 6.4. |
|  8.10 | 8.10 ບ່ອນກວດກາສະພາບລົດ. ບອກໃຫ້ຮູ້ວ່າ ຢູ່ເດີ່ນບ່ອນຈອດລົດ ຫຼື ສະຖານທີ່ ພັກຜ່ອນ ທີ່ມີປ້າຍ 6.4 ຫຼື 7.10 ມີເຄື່ອງຍົກ, ຂົວ ຫຼື ຄອງສຳລັບໃຫ້ກວດກາລົດ. |
|  8.11 | 8.11 ນ້ຳໜັກອະນຸຍາດສູງສຸດ. ບອກໃຫ້ຮູ້ວ່າປ້າຍທີ່ຕິດຕັ້ງຢູ່ນັ້ນມີຜົນບັງຄັບໃຊ້ກັບ ລົດທີ່ ມີນ້ຳໜັກລວມເກີນກວ່າທີ່ກຳນົດໄວ້ໃນປ້າຍເທົ່ານັ້ນ. |
|  8.12 | 8.12 ແຄມທາງອັນຕະລາຍ. ເຕືອນໃຫ້ຮູ້ວ່າການແລ່ນລົດລຽບຕາມແຄມທາງນັ້ນ ອາດເປັນອັນຕະລາຍ ເນື່ອງຈາກທາງມີການກໍ່ສ້າງ ຫຼື ສ້ອມແປງ, ໃຊ້ຮ່ວມກັບປ້າຍ 1.26. |
|  8.13 | 8.13 ທິດທາງຂອງທາງໃຫຍ່. ບອກໃຫ້ຮູ້ທິດທາງຂອງທາງໃຫຍ່ຕາມບ່ອນທາງແຍກ, ໃຊ້ຮ່ວມກັບປ້າຍ 2.1 ແລະ 2.3. |
|  8.14 | 8.14 ຊ່ອງຈະລາຈອນ. ບອກຊ່ອງຈະລາຈອນ ທີ່ປ້າຍ ຫຼື ໄຟສັນຍານຈະລາຈອນມີ ຜົນບັງຄັບໃຊ້. |
|  8.15 | 8.15 ຄົນຍ່າງພິການຕາ. ບອກໃຫ້ຮູ້ວ່າຢູ່ບ່ອນທາງຄົນຍ່າງຂ້າມທາງນັ້ນນຳໃຊ້ໂດຍ ຄົນພິການຕາ, ໃຊ້ຮ່ວມກັບປ້າຍ 1.23, 5.19.1 ແລະ 5.19.2. |
|  8.16 | 8.16 ໜ້າທາງປຽກ. ບອກໃຫ້ຮູ້ວ່າປ້າຍທີ່ຕິດຕັ້ງໄວ້ນັ້ນມີຜົນບັງຄັບໃຊ້ສະເພາະ ເວລາທີ່ໜ້າທາງປຽກເທົ່ານັ້ນ. |
|  8.17 | 8.17 ຄົນພິການ. ບອກໃຫ້ຮູ້ວ່າບ່ອນຈອດລົດທີ່ມີປ້າຍ 6.4 ນັ້ນ ໃຫ້ຈອດໄດ້ແຕ່ລໍ້ ເລື່ອນ ຫຼື ລົດຂອງຄົນພິການ ທີ່ມີປ້າຍ ຫຼື ເຄື່ອງໝາຍຄົນພິການ. |
|  8.18 | 8.18 ຍົກເວັ້ນຄົນພິການ. ບອກໃຫ້ຮູ້ວ່າບ່ອນຈອດລົດທີ່ມີປ້າຍ 6.4 ນັ້ນ ບໍ່ ກ່ຽວຂ້ອງກັບລໍ້ເລື່ອນ ຫຼື ລົດຂອງຄົນພິການ ທີ່ມີປ້າຍ ຫຼື ເຄື່ອງໝາຍຄົນພິການ. |

| | |
|---|---|
|  8.19.1  8.19.2  8.19.3 | 8.19 ສິ່ງກີດຂວາງ. ເປັນເຄື່ອງໝາຍບອກໃຫ້ຮູ່ວ່າທາງຂ້າງໜ້າມີສິ່ງກີດຂວາງ ເຊັ່ນ ຫົວເກາະ, ຫົວດອນ ຫຼື ສິ່ງກີດຂວາງອື່ນໆ ຢູ່ກາງຖະໜົນ ແລະ ບອກທິດທາງໃນການເວັ້ນ ສິ່ງກີດຂວາງດັ່ງກ່າວ. ໃຊ້ຮ່ວມກັບປ້າຍ 4.2.1-4.2.3. |

## 9. ເຄື່ອງໝາຍຈະລາຈອນຕາມລວງນອນ (Horizontal Marking)

| ຮູບແບບ ແລະ ລັກສະນະ | ຄວາມໝາຍ | ການນຳໃຊ້ |
|---|---|---|
|  9.1 | ເສັ້ນເຕັມດ່ຽວສີຂາວ ຫຼື ເຫຼືອງ | - ເສັ້ນແບ່ງທິດທາງຈະລາຈອນ ບ່ອນຫ້າມຊີງ;<br>- ເສັ້ນໝາຍຂອບທາງກ້ຳຊ້າຍ ບ່ອນມີດອນກາງທາງ;<br>- ສີເຫຼືອງໃຊ້ແທນສີຂອບທາງຂາວແດງ ບ່ອນຫ້າມຈອດ. |
|  9.2 | ເສັ້ນເຕັມສີຂາວ | - ເສັ້ນຂອບທາງກ້ຳຂວາ;<br>- ເສັ້ນແບ່ງຊ່ອງຈະລາຈອນ ກ່ອນຈະເຖິງທາງແຍກທີ່ມີໄຟສັນຍານ;<br>- ເສັ້ນໝາຍບ່ອນຈອດລົດ. |
|  9.3 | ເສັ້ນເຕັມຄູ່ ສີຂາວ ຫຼື ເຫຼືອງ | ເສັ້ນແບ່ງທິດທາງຈະລາຈອນ ຫ້າມຊີງ ສຳລັບເສັ້ນທາງທີ່ມີຫຼາຍກວ່າສີ່ຊ່ອງຈະລາຈອນ. |
|  9.4 | ເສັ້ນເຕັມດ່ຽວສີເຫຼືອງ | ຕີຄູ່ກັບເສັ້ນຂອບທາງ ສະແດງຂອບເຂດການຫ້າມຈອດຊົ່ວຄາວ ໃຊ້ຮ່ວມກັບປ້າຍຫ້າມຈອດຊົ່ວຄາວ. |
|  9.5 | ເສັ້ນຂາດ ຫຼື ເສັ້ນປະ ສີຂາວ ຫຼື ເຫຼືອງ | - ເສັ້ນແບ່ງທິດທາງຈະລາຈອນ ສຳລັບເສັ້ນທາງທີ່ມີແຕ່ສອງຊ່ອງ;<br>- ເສັ້ນແບ່ງຊ່ອງຈະລາຈອນ (ສີຂາວ). |
|  9.6 | ເສັ້ນຂາດສີຂາວ ລວງຍາວຂອງເສັ້ນຍາວກວ່າໄລຍະຫ່າງ 3/1 | ເສັ້ນເຕືອນໃຫ້ຮູ້ວ່າຂ້າງໜ້າຈະເປັນເສັ້ນເຕັມ ບ່ອນໃຫ້ປ່ຽນຊ່ອງຈະລາຈອນ ຖ້າຈຳເປັນ (ບ່ອນທາງແຍກມີໄຟສັນຍານຈະລາຈອນ). |
|  9.7 | ເສັ້ນຂາດຖີ່ ສີຂາວ ລວງຍາວຂອງເສັ້ນເທົ່າກັບໄລຍະຫ່າງ | ເສັ້ນໝາຍຊ່ອງຈະລາຈອນໃນບ່ອນທາງແຍກ (ບອກແລວທາງໃນການລ້ຽວ). |
|  9.8 | ເສັ້ນຂາດໜາ ສີຂາວ | ໃຊ້ແບ່ງຊ່ອງຈະລາຈອນ ລະຫວ່າງຊ່ອງຫຼຸດຜ່ອນຄວາມໄວ ແລະ ເລັ່ງຄວາມໄວ ກັບຊ່ອງຈະລາຈອນຫຼັກ. |
|  9.9 | ເສັ້ນຂາດຄູ່ ສີຂາວ | - ເສັ້ນແບ່ງຊ່ອງຈະລາຈອນໄປ, ກັບ. |

| | | |
|---|---|---|
|  9.10 | ເສັ້ນຂາດສີເຫຼືອງ | - ໃຊ້ທາງຂອບທາງ ແທນສີຂອບທາງຂາວ-ເຫຼືອງ ບ່ອນບໍ່ໄດ້ແຕ້ມສີຂອບທາງ ຫຼື ບໍ່ມີກ້ອນເບຕົງຂອບທາງ. |
|  9.11 | ເສັ້ນຂາດຄູ່ກັບເສັ້ນເຕັມ ສີຂາວ ຫຼື ສີເຫຼືອງ | - ເສັ້ນແບ່ງທິດທາງຈະລາຈອນ ສໍາລັບທາງທີ່ມີແຕ່ສອງຊ່ອງຈະລາຈອນ. |
|  9.12 | ເສັ້ນເຕັມໜາ ສີຂາວ ຂີດຕາມແລວທາງຂວາງຂອງທາງ | ເສັ້ນຢຸດ ບອກບ່ອນທີ່ຜູ້ຂັບຂີ່ຕ້ອງຢຸດລົດ ບ່ອນທີ່ປ້າຍຢຸດ ຫຼື ໄຟສັນຍານຫ້າມສັນຈອນ (ໄຟແດງ). |
|  9.13 | ເສັ້ນແຂ້ວປາ ສີຂາວ ຂີດຕາມແລວທາງຂວາງຂອງທາງ | ເສັ້ນປ່ອຍທາງ ບ່ອນທີ່ມີປ້າຍປ່ອຍທາງ ຫຼື ທາງນ້ອຍຄົບທາງໃຫຍ່. |
|  9.14 | ເສັ້ນໜາສີຂາວ ຂີດສະລັບກັນຕາມແລວທາງຍາວຂອງທາງ | ທາງມ້າລາຍ ຫຼື ບ່ອນຄົນຍ່າງຂ້າມທາງ. |
|  9.15 | ເສັ້ນປະຖີ່ໜາສີຂາວ ລວງຍາວຂອງເສັ້ນເທົ່າກັນ ໄລຍະຫ່າງຂອງເສັ້ນ | ເຄື່ອງໝາຍທາງລົດໄຖບ ບ່ອນທີ່ຕັດກັນກັບທາງລົດແລ່ນ. |
|  9.16 | ຮູບສາມຫຼ່ຽມກ່ານສີຂາວ | ເຄື່ອງໝາຍຫົວດອນກາງທາງ ບອກທິດທາງການສັນຈອນ ບ່ອນຊ່ອງຈະລາຈອນໂຮມເຂົ້າກັນ ຫຼື ແຍກຈາກກັນ. |
|  9.17 | ເສັ້ນຊິກແຊັກ ສີເຫຼືອງ | ເຄື່ອງໝາຍບອກບ່ອນຢຸດລົດປະຈໍາທາງ ແລະ ຕັກຊີ່. |
|  9.18 | ລູກສອນສີຂາວ | ເຄື່ອງໝາຍຊ່ອງຈະລາຈອນບ່ອນທາງແຍກ ບອກທິດທາງທີ່ອະນຸຍາດໃຫ້ສັນຈອນ. ລູກສອນລ້ຽວຊ້າຍບ່ອນຊ່ອງຈະລາຈອນຊ້າຍສຸດ ອະນຸຍາດໃຫ້ລ້ຽວຊ້າຍ ແລະ ລ້ຽວກັບໄດ້. |
|  9.19 | ລູກສອນສີຂາວ ໂຄ້ງຊ້າຍ ແລະ ຂວາ | ເຄື່ອງໝາຍບອກໃຫ້ຮູ້ວ່າທາງຂ້າງໜ້າຈໍານວນຊ່ອງຈະລາຈອນ ຈະຫຼຸດລົງ ຫຼື ແຄບເຂົ້າ. |
|  9.20 | ຮູບສາມຫຼ່ຽມ ສີຂາວ ເອົາຖານຂຶ້ນເທິງ | ເຄື່ອງໝາຍ ປ່ອຍທາງ ໃຊ້ຮ່ວມກັບປ້າຍປ່ອຍທາງ. |
|   9.21 | ຂໍ້ຄວາມ ຢຸດ ຫຼື STOP | ເຄື່ອງໝາຍ ຢຸດ ໃຊ້ຮ່ວມກັບປ້າຍຢຸດ. |

| | | |
|---|---|---|
|  9.22 | ຕາໜາກຄ້າມ | ເຄື່ອງໝາຍໂນນ ຫຼຸດຜ່ອນຄວາມໄວ. |
|  9.23 | ເສັ້ນສີເຫຼືອງໄຂ່ວຕີນກາ | ເຄື່ອງໝາຍຫ້າມຢຸດລົດໃນເຂດກາງທາງແຍກ ຫຼື ປາກທາງແຍກ. |

## 10. ເຄື່ອງໝາຍໃນລວງຕັ້ງ

| ຮູບແບບ ແລະ ລັກສະນະ | ຄວາມໝາຍ | ການນຳໃຊ້ |
|---|---|---|
|  10.1 | ເຄື່ອງໝາຍກ່ານ ແຖບດຳ ສະຫຼັບຂາວ ຫຼື ແດງ ສະຫຼັບຂາວ ແບບສະຫຼຽງ | ເຄື່ອງໝາຍ ເຕືອນອັນຕະລາຍ ກ່ຽວກັບອົງປະກອບ ຫຼື ໂຄງສ້າງຂອງສິ່ງກໍ່ສ້າງ ເຊັ່ນ ເສົາ, ຫຼັກ ແລະ ອື່ນໆ ທີ່ຢູ່ກາງທາງ ແລະ ຂອບທາງ. |
|  10.2 | ເຄື່ອງໝາຍກ່ານ ແຖບດຳ ສະຫຼັບຂາວ ຫຼື ແດງ ສະຫຼັບຂາວ ທາງຕັ້ງ | ເຄື່ອງໝາຍເຕືອນອັນຕະລາຍ ບອກເຖິງຈຸດຕ່ຳສຸດຂອງສິ່ງປຸກສ້າງ ເທິງທາງ. |
|  10.3 | ເຄື່ອງໝາຍກ່ານ ແຖບດຳ ສະຫຼັບຂາວ ຫຼື ແດງ ສະຫຼັບຂາວ ທາງນອນ | ເຄື່ອງໝາຍເຕືອນອັນຕະລາຍ ບອກເຖິງອົງປະກອບຂອງທາງທີ່ເປັນເສົາ ຫຼື ຫຼັກ ທີ່ຢູ່ກາງທາງ ຫຼື ຫຼັກນຳທາງໂຄ້ງ (Guide Post). |
|  10.4 | ແຖບສີດຳແບບສະຫລຽງ ຢູ່ເທິງຫຼັກສີຂາວ | ເຄື່ອງໝາຍຫຼັກນຳທາງ. |
|  10.5 | ແຖບສີ ຂາວ ສະຫຼັບດຳ ຫຼືແດງ ຫຼື ເຫຼືອງ | ເຄື່ອງໝາຍອັນຕະລາຍ ທີ່ທາໄວ້ຕາມທ່ອນເບ ຕົງສັນຂອບທາງ. |